# CONTACT



## ຄວາມສັມພັນ

**MAGAZINE FRANCO-LAOTIEN ÉVANGÉLIQUE D'ÉCHANGES ET D'INFORMATION**

*Trimestriel* *Juillet 2009* *32e année / 1* *Numéro 156*



Laos
Construction d'une nouvelle chapelle à Nakham (province de Savannakhet)

Photo
Vanh Kheuanesombath
19 avril 2009

(voir p. 27)


## CONTACT
## *Khouam Samphanh* ຄວາມສັມພັນ

***Magazine franco-laotien***
Publié par l'Union des Eglises évangéliques laotiennes en France
ISSN 0223-7415

Prix du numéro : 6 €
Abonnement annuel : **20 €** – Etudiants : **12 €**
Abonnement de soutien dès **30 €**

➔ *Le prix de l'abonnement a diminué, mais nous ne pourrons désormais plus envoyer le journal qu'aux abonnés qui régleront leur abonnement, sauf circonstances exceptionnelles.*

***Rédaction, administration et impression***

Union des Eglises évangéliques Lao, c/o V. Kheaunesombath
23 rue de la Digue, 69100 Villeurbanne (France)
Tél. +33–(0)478.84.20.26
Courriel : sme.lyon@wanadoo.fr

***Directeur de la publication***

Vanh Kheuanesombath

***Equipe rédactionnelle***

Vanh Kheuanesombath, Silvain Dupertuis, Elie Sypraseuth, Ly Chia, Pafon Sely, David Ratanat, Anna Sypraseuth, David Kheuanesombath

Site web : **http://www.contact-lao.org**


## ABONNEMENTS

***FRANCE***
Par chèque bancaire ou postal, virement postal, ou mandat-carte de versement au
CCP CAMAF-CONTACT – N° 7 710 75 F - Paris
IBAN : FR47 3004 1000 0107 7107 5F02 014
BIC : PSSTFRPPPAR

***SUISSE***
Vous pouvez régler votre abonnement :
— soit sur le CCP du Service Missionnaire Evangélique à St-Prex, N° 12-1401-1 - en précisant : « abonnement à Contact » (30.- FS)
— soit par virement postal sur notre compte CAMAF-CONTACT en France

***EUROPE***
Effectuez votre versement comme pour la France, à l'ordre de CAMAF-CONTACT, par chèque ou de préférence par virement postal ou bancaire directement sur notre CCP (voir identifiant international ci-dessus). Pour les chèques en monnaie étrangère, ajouter l'équivalent de 3.50 € pour les taxes bancaires.

***U.S.A. and CANADA***
You can send checks and money orders to the order of CAMAF-CONTACT, but direct bank transfer at the bank counter or through internet, using the IBAN (international banking identification code), is preferable, as collection taxes on cheks are very expensive. Minimum suscription : 30 US$ / 40 Can$ / 45 Aus$. Higher suscriptions are welcome, as this price does not cover all the costs.

**TOUS PAYS - ALL COUNTRIES** **https://www.paypal.com/**
Vous pouvez nous payer via **PayPal** à notre e-mail
You can use **PayPal** to our e-mail address . . sme.lyon@wanadoo.fr

**Paying by Paypal is reliable, easy, cheap and fast**

1. If you do not have an account yet, just open one on PayPal site (www.paypal.com) on the internet. You need to give an e-mail account and your credit card number.
2. You can now pay to any person having a PayPal account trough the internet, just using the recipient's e-mail.
3. The recipient receives your payment on his account within one day – sometimes only minutes. He can transfer the money on his bank account or use it from his PayPal account for other transactions.
4. The money will be drawn from your credit card account (unless you decide to credit your PayPal account first).
5. The cost of the transaction is a maximum of 3% of the amount plus 0.30 cents – less than 1 US$ for your subscription of 30 US$.



Laos – un manguier
(Vientiane)

*Photo de couverture :*
Enfants de Bane Nalane
Muang Pathoumphone, Champassak

Photos
Vanh Kheuanesombath
avril 2009

## ສາລະບານ 157 sommaire


| | | |
|---|---|---|
| Mieux vaut tard que jamais | ຊັກຊ້າກໍຍັງດີກວ່າ... | 4 |
| Notions de doctrine chrétienne<br>Qui est Jésus-Christ ? | ຄຳສັ່ງສອນຂອງຄຣິສຕະສາສນາ —<br>ວ່າດ້ວຍພຣະເຢຊູຄຣິສຕ໌ | 5 |
| Le coin des nouvelles | ສ້າງສັນສັງຄົມ | 7 |
| Échos des Églises<br>Nouvelles du pasteur Bounmy | ກຸ່ມຄຣິສຕຽນພາກກາງປະເທດຝຣັ່ງເສດ — ຂ່າວຈາກ ອຈ ບຸນມີ | 12 |
| Journée d'évangélisation en Ariège | ການປະກາດຂ່າວປະເສີດ | 13 |
| Comme un poisson dans l'eau à l'institut biblique | ຂ່າວຈາກພູສອນ | 14 |
| Paris, Église Lao-Hmong de Sevran – Les dames organisent leurs propres rencontres | *Traduit en hmong* | 16 |
| L'Inde nous interpelle<br>Voyage d'étude d'un groupe de pasteurs | ທັສນະສຶກສາທີ່ປະເທດ ອິນເດັຍ | 17 |
| Laos 2009<br>Un voyage dans le sud | ປະເທດລາວ ເມສາ 2009<br>ການຢ້ຳຢາມພາກໃຕ້ | 22 |
| Un prêtre catholique nouvellement ordonné | ການສະຖາປະນານັກບວດ ຄາໂທລິກ | 28 |
| Discours du Premier Ministre laotien à l'ambassade de France | ປາຖະກະຖາຂອງພະນະທ່ານ ບົວສອນ ບຸຜາວັນ | 30 |
| Laos, nouvelles brèves :<br>Commerce facilité avec les Etats-Unis – Vol direct entre le Japon et le Laos | ຂ່າວຍ່ອຍຈາກປະເທດລາວ :<br>ການຄ້າຂາຍ ກັບປະເທດອາເມລິກາ<br>ສະດວກກວ່າເກົ່າ — ຖ້ຽວບິນ<br>ປະຖົມມະເລີດ ຈາກ ຍີ່ປຸນ | 31 |


## NOS ADRESSES (rédaction – correspondants)


### FRANCE . . . . . . . . . . . . . . . . . . . . . . . . . . +33

*Lyon*
Vanh KHEUANESOMBATH
23, rue de la Digue
69100 Villeurbanne
✆ 04.78.84.20.26
sme.lyon@wanadoo.fr

Hermann CHRISTEN
11, rue de Francfort
69140 Rillieux-la-Pape
✆ 04.78.97.07.28
christen.hermann@wanadoo.fr

*Région Avignon-Arles- Nîmes*
Richard LY (LY Chia)
18, av. de la Coupo Santo
30650 Rochefort-du-Gard
✆ 04.90.31.79.11
chia.ly@hotmail.fr

Daniel AUREILLE
6, avenue des Grenadiers
30132 Caissargues
✆ 04.66.29.88.25

Bounmy SELY
14, Avenue de Toulouse
09100 Palmiers
✆ 06.70.43.78.97

*Bourges-Orléans*
Elie SYPRASEUTH
7, rue de Sinay
18230 St-Doulchard
✆ 02.48.24.57.40
sypraseuthelie@hotmail.fr

*Région parisienne*
Monsieur Tou YANG
21, rue de l'Ellipse,
-91350 Grigny
✆ 01-69.56.98.71
saytouyang@free.fr

Pafon SELY
74, avenue Léo Lagrange
93190 Livry-Gargan
✆ 01.43.51.18.94 + fax
selypafon@free.fr

Khévang SELY
34, Bd Emile Genevoix
93239 Romainville
✆ 06 18 50 25 46

### USA – CANADA . . . . . . . . . . . . +1

Boriboune SITHIDETH
2091 Hurontario St.
CA- Mississauga, ON L5A 4E6, Canada
✆ privé +1-905-896-1525

Rev. Boon VONGSURITH
Crievewood Baptist Church
480 Hogan Rd, Nashville, TN 37220 USA
✆ dom. (615) 832–5968
boon_v@hotmail.com

Miké PHRASAVATH – 19151 St-Place S.E
Belleville, WA.980007
Phone - Home: 425/502 77 82
Off. 425/452 73 00
Mike.Phrasavath@usw.salvationarmy.org

M. Barnabas Tong CHITCHALERNTHAM
2102 Elderkin Dr.
CA- Regina, SK. S4V 0L9, Canada
✆ +1-306-7510358
chitchalerntham@msn.com

### AUSTRALIE . . . . . . . . . . . . . . . . +61

M. Tack SIRIVONG
3, Somers Street, Bonnyrigg, NSW 2177
✆ (02).9823 7243

M. Somchanh BOUALIWATH
32 Davina Cres, Cecil Hills, NSW 2171
✆ (02) 9822 1115

### SUISSE . . . . . . . . . . . . . . . . . . . . . . . +41

Silvain DUPERTUIS
Rte de Lausanne 335, 1293 Bellevue
✆ privé 022-774.20.67
silvain-dupertuis@bluewin.ch

Armand HEINIGER
10, chemin de la Gravière, 1291 Commugny
✆ 022-776.58.76 + fax
armand-heiniger@infomaniak.ch

Service Missionnaire Évangélique
Z.I. En Glapin 8, CH–1162 St-Prex
✆ 021-823.23-23, fax 021-806.51.30
aesr.sme@bluewin.ch

**Page des jeunes**
David et Estelle Ratanat,
✆ 04 78.85.34.62 – drfox1@caramail.com
Rémy RATANAT
3043, Route de Strasbourg
69140 Rillieux la Pape
✆ 06.14.48.33.03 – ittlefrak77@hotmail.com

# ຊັກຊ້າກໍຍັງດີກວ່າ... Mieux vaut tard que jamais

*ວັນ ເຂື່ອນສົມບັດ Vanh Kheuanesombath*

ຕາມທຳມະດາແລ້ວວາຣະສານຄວາມສັມພັນສະບັບທຳອິດຂອງປີ 2009 ຕ້ອງພິມອອກມາຢ່າງຊ້າໃນທ້ອງເດືອນ ມີນາ ຕິດຕາມດ້ວຍສະບັບທີສອງໃນທ້ອງເດືອນ ມິຖຸນາ...ເຫດໃດຈຶ່ງມີການຊັກຊ້າເຖິງຂນາດນີ້? ກ່ອນຈະໃຫ້ເຫດຜົນ, ຄະນະກັມມາທິການຈັດພິມຢາກຂໍອະໄພສົນຳຜູ້ອ່ານທຸກໆທ່ານທີ່ລໍຖ້າດ້ວຍຄວາມມານະອົດທົນເສັຽກ່ອນ. ການເດີນທາງໄປປະເທດອິນເດັຍຂອງຂ້າພະເຈົ້າໃນທ້ອງເດືອນ ມີນາ ແລະບໍ່ດົນຕໍ່ມາກໍໄປປະເທດລາວອີກໃນຊ່ວງປີໃໝ່ຂອງເດືອນ ເມສາ ກໍເປັນພຽງຄຳອະທິບາຍສ່ວນນ້ອຍໆສ່ວນນຶ່ງຂອງການລ້າຊ້າຄັ້ງຍິ່ງໃຫຍ່ນີ້. ສ່ວນເຫດຜົນທີ່ສຳຄັນກວ່າກໍຄືວ່າໃນປີ 2009 ນີ້, ອຈ ຊີລາວານ ຊຶ່ງເປັນຜູ້ໃຫ້ຄວາມຮ່ວມມືທາງດ້ານການກວດກາການແປພາສາຝຣັ່ງເສດ ແລະທາງດ້ານສິລປະບໍ່ຄ່ອຍມີເວລາຫວ່າງພຽງພໍເພື່ອອຸທິດເວລາໃຫ້ກັບວາຣະສານດັ່ງທີ່ທ່ານເຄີຍໄດ້ຊ່ວຍຕລອດມາ. ທັງນີ້ກໍເນື່ອງມາຈາກການປະກອບວິຊາອາຊີບທາງດ້ານການສອນເຕັມເວລາຢູ່ໂຮງຮຽນວິທຍາໄລໃນປະເທດ ສວິສເຊີແລັນ.

ຢ່າງໃດກໍຕາມ, ຫລັງຈາກການສອບເສັງແລະການກວດສອບແລ້ວ, ພວກຂ້າພະເຈົ້າຈຶ່ງຂໍຄວາມຮ່ວມມືອີກຄັ້ງໃໝ່ນຳທ່ານຊີລາວານ ຜູ້ຊ່ຽວຊານດ້ານພາສາລາວ, ດ້ານເທັກນິກ ວິຊາການ ແລະດ້ານປະສົບປະການຂອງການພິມາແລ້ວຫລາຍໆສິບປີ. ພວກຂ້າພະເຈົ້າຂໍຂອບໃຈນຳທ່ານຢ່າງລົ້ນເຫລືອມານະໂອກາດນີ້ດ້ວຍ.

ອາດເປັນຄັ້ງສຸດທ້າຍທີ່ຜູ້ອ່ານຈະໄດ້ຮັບວາຣະສານ ຄວາມສັມພັນ ໃນຮູບແບບ ແລະໃນເນື້ອໃນຕາມທີ່ເຄີຍອອກມາເປັນປະຈຳໄດ້ຫລາຍກວ່າສາມທົສວັດແລ້ວ. ນັບຕັ້ງແຕ່ສະບັບຂອງເດືອນ ເສັດຕາມ (9) ເປັນຕົ້ນໄປ, ຜູ້ອ່ານຈະໄດ້ສຳຜັດກັບໂສມໜ້າອັນໃໝ່ທີ່ໜຸ່ມແໜ້ນແລະທັນສມັຍກວ່າເກົ່າຂອງວາຣະສານ ຄວາມສັມພັນ ແລະເນື້ອໃນກໍອາດຈະມີການປ່ຽນແປງໄປບາງເລັກນ້ອຍ. ຄະນະກັມມາທິການຊຸດໃໝ່ຊຶ່ງປະກອບໄປດ້ວຍບັນດາລູກຫລານທີ່ເກີດໃໝ່ໃຫຍ່ລຸນ ແຕ່ມີຄຸນວຸດທິໃນຫລາຍດ້ານໄດ້ສມັກໃຈສືບຕໍ່“ມໍຣະດົກແຫ່ງວັທນະທັມ“ ອັນນ້ອຍໆນີ້ໃຫ້ຍືນຍົງຄົງຕົວຢູ່ຕໍ່ໄປ. ການທີ່ມີຜູ້ສືບຕໍ່ຢ່າງນີ້ກໍເປັນໜ້າພູມໃຈຫລາຍແລ້ວ. ເຖິງເວລາທີ່ພວກເຮົາຕ້ອງປ່ອຍມືໃຫ້ພວກເຂົາແລ້ວ ແຕ່ການປ່ອຍມືບໍ່ໄດ້ໝາຍຄວາມວ່າເປັນການປ່ອຍວາງທັງໝົດບາດດຽວດອກ ເພາະເຖິງຢ່າງໃດຂ້າພະເຈົ້າກໍຍັງຈະເປັນຜູ້ອຳນວຍການຕໍ່ໄປ ແລະຫວັງວ່າຜູ້ອ່ານລຸ້ນທຳອິດຈະໃຫ້ຄວາມສນັບສນູນແກ່ຜົນງານຂອງຄົນລຸ້ນຫລັງເປັນຢ່າງດີ. ຂໍຂອບໃຈມານະໂອກາດນີ້ດ້ວຍ.

Ce premier numéro de « Contact » de 2009 aurait dû sortir de presse en mars et être suivi d'un deuxième numéro en juin au plus tard. Il a pris un retard considérable… Nous prions nos lecteurs d'excuser ce retard, conscients de votre attente impatiente...

Une des raisons tient aux deux voyages que j'ai effectué ce printemps, et dont ce numéro se fera l'écho, l'un en Inde vers la fin du mois de mars, et un deuxième au Laos dans le courant du mois d'avril. Mais la raison principale est l'engagement professionnel de Silvain Dupertuis, qui a repris un travail d'enseignement dans un lycée public à Lausanne, en Suisse. Durant de nombreuses années, il nous a aidé dans la traduction et le travail technique et artistique de mise en page. Nous avons beaucoup apprécié sa collaboration dans la réalisation de chaque numéro de « Contact ». Mais ces derniers mois, ses responsabilités professionnelles et ses autres engagements ne lui ont plus permis de trouver le temps nécessaire.

Ce numéro s'est donc fait attendre ! Ce n'est qu'une l'année scolaire et les examens de baccalauréat achevés que Silvain Dupertuis a pu trouver le temps de nous aider à réaliser ce numéro. Etant un des rares connaisseurs de la langue laotienne et qualifié sur le plan technique et artiste pour l'impression et la mise en page, il a pu nous faire bénéficier de son expérience dans ce domaine depuis plusieurs décennies.

C'est sans doute la dernière fois que vous recevrez le magazine « Contact » sous cette forme, avec la maquette et le contenu qui vous sont familiers depuis plusieurs années. En effet, à partir du mois de septembre, vous découvrirez un nouveau visage à Contact, plus jeune et plus moderne, aussi bien dans la forme que pour le contenu ! Le nouveau comité rédactionnel, composé essentiellement de jeunes de la deuxième génération, plein de zèle et de capacité, souhaite en effet « relooker » notre modeste magazine et répondre ainsi aux attentes des lecteurs de toutes les générations. C'est un vrai défi pour eux et également pour nous. Personnellement, je me réjouis beaucoup de cette relève, car il est sans doute temps de laisser la place aux jeunes! Mais il ne s'agit pas pour autant de tout laisser, puisque, à leur demande, je continuerai à assumer le rôle de responsable de ce magazine. C'est en pensant à nos lecteurs de la première génération, qui sont sans doute attaché à la forme et au contenu actuels, que j'ai accepté cette responsabilité. Je les encourage à soutenir et à encourager les efforts et le travail de nos jeunes générations et à accueillir favorablement le nouveau magazine qui paraîtra en septembre prochain.

# ຫລັກຄຳສອນຂອງພຣະຄຣິສຕະສາສນາ (ຕໍ່) Notions de doctrine chrétienne

## ວ່າດ້ວຍພຣະເຢຊູຄຣິສຕ໌ Qui est Jésus-Christ ?

*ວັນ ເຂື່ອນສົມບັດ Vanh Kheuanesombath*

### 4 — ສະພາບມະນຸດຮ້ອຍເປີເຊັນຂອງພຣະເຢຊູຄຣິດ (ເຮັບເຣີ 2:14; 5:7)

ຂ່າວປະເສີດບໍ່ໄດ້ປະຕິເສດສະພາບມະນຸດຂອງພຣະເຢຊູເລີຍ. ກົງກັນຂ້າມ, ດ້ວຍການຊົງປະຕິສົນທິໃນຄັນຂອງ ມາຣີ ແລະດ້ວຍການກຳເນີດແບບທຳມະຊາດຈາກ ມາຣີ ກໍສະແດງໃຫ້ເຫັນແລ້ວວ່າເປັນຂັ້ນຕອນແບບປົກກະຕິທຳມະດາຂອງມະນຸດທົ່ວໄປ. ນອກນັ້ນອີກ, ການທີ່ພຣະເຢຊູຊົງຂນານນາມໃຫ້ພຣະອົງເອງວ່າເປັນ ບຸດມະນຸດ ກໍເປັນຂໍ້ຢັ້ງຢືນວ່າພຣະອົງຊົງຮັບສະພາບເປັນມະນຸດແທ້ເພາະໄດ້ຜ່ານການກຳເນີດ, ການຈະເຣີນເຕີບໂຕທາງຮ່າງກາຍແລະທາງສະຕິປັນຍາ (ລູກາ 2:52). ຂ່າວປະເສີດຍັງແຈ້ງໃຫ້ເຮົາຊາບອີກວ່າໃນຖານະເປັນມະນຸດ, ພຣະອົງຕ້ອງເພິ່ງພໍ່ແມ່, ຕ້ອງເຮັດວຽກທຳງານ, ຕ້ອງອິດເມື່ອຍແລະຕ້ອງການເວລາເພື່ອພັກຜ່ອນ. ພຣະເຢຊູເຄີຍສະແດງອາຣົມຕ່າງໆອອກມາເຊັ່ນ: ຄວາມໂກດຮ້າຍ, ຄວາມໂສກເສົ້າສະເທືອນໃຈ, ຄວາມຍິນດີ, ຄວາມສົງສານ, ຄວາມເຈັບປວດ... ສິ່ງສຳຄັນອີກແນວນຶ່ງກໍຄືວ່າໃນຖານະທີ່ຮັບສະພາບຂອງມະນຸດນີ້, ພຣະເຢຊູກໍເຄີຍຖືກທົດລອງເໝືອນຢ່າງມະນຸດທົ່ວໄປທຸກປະການ(ມັດທາຍ 4:1-11 ແລະ ເຮັບເຣີ 4:15)

### 5 — ພຣະເຢຊູຄຣິດຊົງປັສຈາກບາບ (1 ໂຢຮັນ 3:5)

ຖ້າຫາກວ່າພຣະເຢຊູຊົງກະທຳຄວາມບາບ, ປລາໃຊໃຫ້ຄວາມບາບແລະການທົດລອງ ຫລືລົ້ມລົງໃນຄວາມຜິດບາບແລ້ວ ພຣະອົງອາດຈະມີສະຕິປັນຍາອັນສູງສົ່ງ ແຕ່ຫາກວ່າດ້ານຈະຣິຍະທັມອາດຈະບໍ່ແຕກຕ່າງໄປຈາກມະນຸດທົ່ວໆໄປເລີຍ. ທຸກຄົນທີ່ທຳບາບກໍເປັນຂ້ອຍຂ້າຂອງຄວາມບາບ (ໂຢຮັນ 8:34). ດັ່ງນັ້ນ, ຕາມຄວາມເປັນຈິງແລ້ວ ຂ້ອຍຂ້າ ຫລື ທາສ ຈະໄຖ່ທາສຄົນອື່ນອອກຈາກສະພາບການເປັນທາສໄດ້ຢ່າງໃດ? ຜູ້ຊ່ວຍ ຫລືຜູ້ໃຫ້ພົ້ນຕ້ອງເປັນມະນຸດແທ້ ແຕ່ຕ້ອງເປັນຜູ້ທີ່ບໍ່ເຄີຍລົ້ມລົງໃນຄວາມບາບ. ພຣະຄຳພີຫລາຍວັກຫລາຍຕອນຢືນຢັນວ່າພຣະເຢຊູອົງດຽວຊົງປັສຈາກຄວາມບາບ (ລູກາ 23:41; 2 ໂກຣິນໂທ 5:21; ເຮັບເຣີ 7:26; 9:14; 1 ເປໂຕ 2:22). ຜີຖ່ອຍຮ້າຍກໍຍັງພາກັນຮັບຮູ້ວ່າພຣະເຢຊູຊົງເປັນຜູ້ບໍຣິສຸດ ໝາຍຄວາມວ່າປັສຈາກບາບ (ມາຣະໂກ 1:24).

ການຊົງຮັກສາຊີວິດໃຫ້ປັສຈາກຄວາມບາບທຸກຊະນິດນີ້ ກໍເພື່ອເປົ້າໝາຍສາມປະການຄື:

1 — ເພື່ອພຣະອົງຈະໄດ້ເປັນເຄື່ອງສັກກາຣະບູຊາຖວາຍແກ່ພຣະເຈົ້າແທນມະນຸດທຸກໆຄົນໄດ້ (ເຮັບເຣີ 9:23-27)

ພຣະເຈົ້າຊົງບັນຊາໃຫ້ນຳເອົາແຕ່ເຄື່ອງສັກກາຣະບູຊາທີ່ບໍຣິສຸດ ປັສຈາກມົນທິນຫລືຮອຍດ່າງດຳທຸກຊະນິດມາຖວາຍແກ່ພຣະອົງເພື່ອວ່າພຣະອົງຈະຮັບໄດ້. ຖ້າຫາກວ່າພຣະເຢຊູທຳບາບ ກໍປຽບເໝືອນວ່າພຣະອົງຊົງເປັນເຄື່ອງສັກກາຣະບູຊາທີ່ມີມົນທິນ, ໄຮ້ຄຸນຄ່າແລະພຣະເຈົ້າຈະຊົງຮັບເອົາບໍ່ໄດ້ເພາະຄວາມບໍຣິສຸດຂອງພຣະອົງ.

2 — ເພື່ອຈະສາມາດເຊື່ອຟັງຈົນເຖິງຄວາມມໍຣະນາ ຊຶ່ງກົງກັນຂ້າມກັບ ອາດາມ (ອ່ານ ໂຣມ 5:19 ແລະ ເຮັບເຣີ 10:6-7)

**4 - Sa nature humaine (Hébreux 2:14; 5:7)**

La Bible ne nie pas la nature humaine de Jésus. Au contraire, elle l'affirme clairement à travers la conception dans le ventre de Marie et la naissance par voie naturelle, qui constituent le processus naturel pour tous les hommes. Par ailleurs, Jésus se désigne lui-même par le titre de «fils de l'homme», attestant par là qu'il possède parfaitement la nature humaine, ayant passé par la naissance et par la phase de croissance corporelle et intellectuelle (Luc 2:52). Les évangiles montrent aussi que Jésus, comme tout être humain, a besoin de ses parents, travaille, connaît la fatigue et a besoin de repos. Il éprouve des sentiments humains de colère, de tristesse, de joie, de compassion et de souffrance... Une autre chose qui atteste de la nature humaine de Jésus est le fait qu'il a été tenté comme tout homme sur terre (Matthieu 4:1-11; Hébreux 4:15).

**5 - Jésus-Christ est exempt de péché (1 Jean 3:5)**

Si Jésus avais commis le péché ou cédé à la tentation, on aurait sans doute encore de l'estime pour son intelligence, mais sur la plan moral, il ne serait différent en rien du reste des hommes. En effet, comme la Bible l'affirme, celui qui commet le péché est esclave du péché (Jean 8:34). Un serviteur ou un esclave ne peut pas racheter d'autres esclaves de la condition d'esclavage. Le vrai sauveur doit être revêtu de la nature humaine sans jamais commettre de péché. Plusieurs passages de la Bible affirment que seul Jésus est exempt du péché (Luc 23:41; 2 Corinthiens 5:21; Hébreux 7:26; 9:14; 1 Pierre 2:22). Même le démon reconnaît que Jésus est le Saint de Dieu, c'est-à-dire celui qui n'a jamais commis de fautes (Marc 1:24).

Jésus a vécu toute sa vie exempt de toute souillure dans un triple but :

1 – Pour être le sacrifice parfait offert à Dieu à la place des hommes (Hébreux 9:23-27)

Dieu exige de son peuple de l'Ancienne Alliance de ne lui apporter que les sacrifices sans tache, ni souillure. Si Jésus avait commis le moindre péché, il ne serait qu'un sacrifice imparfait, sans valeur, que Dieu ne peut accepter à cause de sa sainteté.

2 – Pour pouvoir obéir jusqu'à la mort, au contraire d'Adam (Romains 5:19 et Hébreux 10:6-7)

3 — ເພື່ອຈະສາມາດເປັນປຸໂຣຫິດທີ່ເຂົ້າໃຈຄວາມອ່ອນແອຂອງພວກເຮົາເພາະພຣະອົງເອງກໍໄດ້ຖືກທົດລອງຢ່າງພວກເຮົາທຸກປະການ ແຕ່ເຖິງປານນັ້ນພຣະອົງກໍຍັງບໍ່ມີບາບ ( ເຮັບເຣີ 2:11-18). ໃນຖານະທີ່ເປັນປຸໂຣຫິດ ຖ້າຫາກພຣະເຢຊູບໍ່ປັສຈາກບາບ, ພຣະອົງຈໍາເປັນຕ້ອງໄດ້ຖວາຍເຄື່ອງບູຊາຕລອດໄປ ຊຶ່ງອາດຈະບໍ່ແຕກຕ່າງຫຍັງກັບພວກປຸໂຣຫິດທໍາມະດາທົ່ວໄປທີ່ມະນຸດໄດ້ສະຖາປະນາຂຶ້ນ (ເຮັບເຣີ 10:11-14). ແຕ່ຍ້ອນວ່າພຣະອົງຊົງປັສຈາກບາບ ພຣະອົງຈຶ່ງສາມາດຖວາຍເຄື່ອງສັກກາຣະບູຊາພຽງຄັ້ງດຽວເທົ່ານັ້ນກໍເປັນການສິ້ນສຸດ.

## 6 — ການມີສະພາບຂອງພຣະເຈົ້າແທ້.

ສະພາບມະນຸດແທ້ຮ້ອຍເປີເຊັນ ກັບສະພາບພຣະເຈົ້າແທ້ຮ້ອຍເປີເຊັນຈະປະສົມປະສານກັນໄດ້ຢ່າງໃດໃນພຣະເຢຊູ? ນີ້ເປັນຄໍາຖາມຂອງມະນຸດທົ່ວໄປແລະຫລາຍຄົນກໍລົງຄວາມເຫັນວ່າມັນເປັນໄປບໍ່ໄດ້ເລີຍ.ຊາວ ຢິວ ໃນສມັຍຂອງພຣະເຢຊູໄດ້ສໍາຜັດແຕະຕ້ອງພຣະອົງ ແລະເຫັນສະພາບມະນຸດຂອງພຣະເຢຊູກັບຫູກັບຕາຂອງພວກເຂົາເອງຈິນເຂົາປະຕິເສດຄໍາອ້າງອີງຂອງພຣະອົງເອງວ່າພຣະອົງມາຈາກໃສ ແລະຈະໄປໃສ? ຍ້ອນພຣະເຢຊູຢັ້ງຢືນວ່າພຣະອົງເອງເທົ່າທຽມກັບພຣະເຈົ້າ, ຊົງເປັນພຣະເຈົ້າ, ຊົງເປັນພຣະບຸດຂອງພຣະເຈົ້າ, ເປັນຜູ້ທີ່ພຣະເຈົ້າໄດ້ຊົງໃຊ້ມານັ້ນເອງ, ພວກເຂົາຈຶ່ງຖືວ່າເປັນການປມາດ ແລ້ວກໍເລີຍເກີດມີຄວາມກຽດຊັງພຣະອົງຢ່າງເຂົ້າກະດູກດໍາ! ດ້ວຍເຫດນີ້ເອງ, ບາງຄັ້ງບາງຄາວ ພວກເຂົາຈຶ່ງຢາກຈະປະຫານຊີວິດຂອງພຣະອົງເສັຍ (ໂຢຮັນ 5:23; 6:38-52; 10:30-33; 18: 36, 37).

ເຫດຜົນຕ່າງໆໃນພຣະຄໍາພີທີ່ຢືນຢັນວ່າພຣະເຢຊູຊົງເປັນພຣະເຈົ້າ:

- ພຣະອົງຊົງເປັນຢູ່ຕັ້ງແຕ່ໃດໆມາ ແລະຈະຊົງເປັນຢູ່ສືບໆໄປເປັນນິດ (ໂຢຮັນ 1:2; 5:26; 14:10; ຟີລິບປອຍ 2:6)
- ພຣະເຢຊູບໍ່ຊົງປ່ຽນແປງ (ເຮັບເຣີ 1:10-12; 13:8)
- ພຣະເຢຊູຊົງສະຖິດຢູ່ໃນທຸກຫົນທຸກແຫ່ງໄດ້ (ມັດທາຍ 28:19-20; ໂຢຮັນ 1:48; 3:13)
- ພຣະເຢຊູຊົງສັບພັນຍູ (ຜູ້ຮອບຮູ້) (ມັດທາຍ 9:4; 12:25; ລູກາ 6:8; 9:47; 11:17; ໂກໂລຊາຍ 2:3)
- ພຣະເຢຊູຊົງອໍານາດຢ່າງບໍ່ຈໍາກັດ (ມັດທາຍ 28:18; ມາຣະໂກ 1:27; ໂຢຮັນ 5:19-21; 1 ເປໂຕ 3:21-22)
- ພຣະເຢຊູຊົງເປັນເຈົ້ານາຍຂອງວັນພັກ ຫລືວັນ ຊະບາໂຕ (ມັດທາຍ 2:28; ລູກາ 6:5)
- ພຣະເຢຊູຊົງເປັນຜູ້ບັນຊາພວກທູດສວັນ (ມັດທາຍ 13:41; ພຣະນິມິດ 1:1; 22:6)
- ພຣະເຢຊູເປັນຜູ້ດຽວມີສິດຍົກໂທດຄວາມຜິດບາບໄດ້ (ມັດທາຍ 9:22; ມາຣະໂກ 2:5-7,10; ລູກາ 5:20-24; 7:48)
- ພຣະເຢຊູຊົງເປັນເຈົ້າແຫ່ງຊີວິດ ແລະ ຄວາມຕາຍ (ມັດທາຍ 9:24; ລູກາ 7:14; ໂຢຮັນ 11:43-44; ພຣະນິມິດ 1:18)
- ພຣະເຢຊູຊົງເປັນຜູ້ເນຣະມິດສ້າງທຸກສິ່ງ (ໂຢຮັນ 1:3; ກິຈການ 17:24; ເອເຟໂຊ 3:9; ເຮັບເຣີ 1:2)
- ພຣະເຢຊູຊົງເປັນຜູ້ພິພາກສາຄົນຕາຍແລະຄົນເປັນ (ມັດທາຍ 13:39-43; 16:27; 25:31-33; ໂຢຮັນ 5:22-23; ກິຈການ 10:42; 2 ໂກຣິນໂທ 5:10).

3 – Pour être un grand sacrificateur qui puisse compatir avec nous, ayant été tenté comme nous à tous égards, sans pour autant commettre de péché (Hébreux 2:11-18). En tant que grand sacrificateur, si Jésus n'était pas exempt de péché, il devrait offrir des sacrifices perpétuels, comme tous les autres grands sacrificateurs du passé, qui ont été établis par les hommes (Hébreux 10:11-14). Etant sans péché, Jésus a pu ainsi présenter une fois pour toutes un sacrifice parfait à Dieu.

## 6 - Sa nature divine

Comment la nature humaine et la nature divine peuvent-elles cohabiter en Jésus-Christ? C'est une question qui a fait couler beaucoup d'encre, et certains en ont conclu que c'est tout simplement impossible. Déjà à l'époque de Jésus, pour les Juifs qui le côtoyaient, c'était incompréhensible. Ils voyaient bien sa nature humaine, mais refusaient ses déclarations affirmant qu'il venait de Dieu et retournait à Dieu. Jésus affirmait son unité avec Dieu, qu'il est lui-même Dieu, qu'il est Fils de Dieu, celui que Dieu a envoyé dans ce monde. Les juifs considéraient ces propos comme un blasphème, se sont mis à le détester au point de vouloir le faire mourir par lapidation (Jean 5:23; 6:38-52; 10:32-33; 18:36-37).

Il y a de nombreuses affirmations qui attestent la divinité de Jésus-Christ :

- Il existe depuis toujours et existera dans l'éternité (Jean 1:2; 5:26; 14:10; Philippiens 2:6).
- Il ne change pas (Hébreux 1:10-12; 13:8).
- Il est présent partout («omniprésence») (Matthieu 28:19-20; Jean 1:48; 3:13).
- Il connaît tout («omniscience») (Matthieu 9:4; 12:25; Luc 6:8; 9:47; 11:17; Colossiens 2:3)
- Il est le tout-puissant (Matthieu 28:18; Marc 1:27; Jean 5:19-21; 1 Pierre 3:21-22).
- Jésus est le maître du Sabbat (Matthieu 2:28; Luc 6:5).
- C'est lui qui donne les ordres aux anges (Matthieu 13:41; Apocalypse 1:1; 22:6).
- Il est le seul à pardonner le péché (Matthieu 9:22; Marc 2:5-7; Luc 5:20-24; 7:48).
- Jésus-Christ est le Seigneur de la vie et de la mort (Matthieu 9:24; Luc 7:14; Jean 11:43-44; Apocalypse 1:18).
- Jésus-Christ est le créateur du monde (Jean 1:3; Actes 17:24; Ephésiens 3:9; Hébreux 1:2).
- Il est le juges des vivants et des morts (Matthieu 13:19-43; 16:27; 25:31-33; Jean 5:22-23; Actes 10:42; 2 Corinthiens 5:10).

*ວັນ ເຂື່ອນສົມບັດ* *Vanh Kheuanesombath*

# Argentine

❖ ພີ່ນ້ອງຄຣິສຕຽນຊາວລາວຢູ່ປະເທດ ອາຊັງຕີນາ ໄດ້ພາກັນຈັດປະຊຸມການຟື້ນຟູປະຈຳປີຂຶ້ນໃນວັນທີ 13 ຫາ 18 ມົກກະຣາ 09 ທີ່ຜ່ານມານີ້. ພີ່ນ້ອງຊາວລາວເຮົາຊາວກວ່າຄົນໄດ້ເຂົ້າຮ່ວມນຳ ແລະແຕ່ລະຄົນກໍໄດ້ຮັບພຣະພອນຈາກພຣະຄຳຂອງພຣະເຈົ້າຢ່າງຫລວງຫລາຍ. ໜ້າເສັຍດາຍທີ່ພວກເຮົາບໍ່ມີຮູບພາບຂອງການປະຊຸມດັ່ງກ່າວ ເພື່ອມາລົງໃຫ້ຜູ້ອ່ານໄດ້ເຫັນ. ນອກຈາກນີ້ແລ້ວ, ອຈ ສິງໂຕ ຍັງບອກຂ່າວດີອີກວ່າໃນທ້າຍປີ 08, ຍາລູງ ກັນຫາ ທັມມະວົງ ກັບ ຍິງສາວອີກສອງຄົນຢູ່ເມືອງ ຈາກູມຸສ ກໍໄດ້ຕັດສິນໃຈຮັບສົນບັບຕິສມາ. ເວລານີ້, ຄອບຄົວຂອງຍາລູງ ກັນຫາ ກໍໄດ້ຍົກຍ້າຍໄປຢູ່ເມືອງ ໂປຊາດາສ໌ ແລະພຣະເຈົ້າຊົງໃຊ້ຜູ້ກ່ຽວໃຫ້ເປັນຜູ້ປ່າວປະກາດແລະນຳຄົນລາວຫລາຍໆຄົນມາເຊື່ອພຣະເຈົ້າ. ເວລານີ້, ມີຄົນລາວຫລາຍໆຄອບຄົວຮ່ວມປະຊຸມກັນນະມັສການພຣະເຈົ້າຢູ່ເມືອງ ໂປຊາດາສ໌. ກຸ່ມໃໝ່ນີ້ຍັງຂາດຜູ້ນຳພາທີ່ມີປະສົບປະການກ່ຽວກັບການຮັບໃຊ້. ຢ່າງໃດກໍຕາມ, ຂ້າພະເຈົ້າຂໍສນັບສນູນໃຫ້ ຍາລູງ ກັນຫາ ຈົ່ງພະຍາຍາມຕໍ່ໄປໃນການເປັນພະຍານແລະການຮັບໃຊ້. ເມື່ອພຣະເຈົ້າຊົງຮຽກຮ້ອງໃຫ້ຜູ້ນຶ່ງຜູ້ໃດທຳໜ້າທີ່ພິເສດສຳລັບພຣະອົງໆກໍຈະຊົງປະທານສາມັດທະພາບທີ່ຈຳເປັນໃຫ້ເອງດອກ!

❖ ນອກຈາກ ຈ ມ ຂອງ ອຈ ສິງໂຕແລ້ວ, ໃນຕົ້ນເດືອນ ມົກກະຣາ, ຂ້າພະເຈົ້າກໍໄດ້ໂທຣະສັບຫາພີ່ນ້ອງບາງຄົນຢູ່ ອາຊັງຕີນາ ເພື່ອອ່ວຍພອນປີໃໝ່ແລະເພື່ອຖາມຂ່າວຄາວຄວາມສຸກທຸກຂອງກັນແລະກັນ. ໃຜໆກໍບອກວ່າຍັງລະນຶກເຖິງການຢ້ຽມຢາມຂອງຂ້າພະເຈົ້າ ແລະການທີ່ໄດ້ສ້າງມິດຕະພາບແລະຄວາມຮັກແພງຊຶ່ງກັນແລະກັນ. ກ່ອນຈະຈົບການສົນທະນາກັນທາງໂທຣະສັບໃຜໆກໍຖາມວ່າ: ປານໃດຊິໄປຢາມອີກ? ຂ້າພະເຈົ້າກໍມັກຖາມຕົວເອງຢູ່ສເມີວ່າປານໃດຈຶ່ງຈະໄດ້ພົບກັບພີ່ນ້ອງຊາວລາວຂອງພວກເຮົາໃນປະເທດນີ້ອີກຄັ້ງໃໝ່ ເພາະຂ້າພະເຈົ້າເອງຍັງຮັກສາຄວາມຊົງຈຳຂອງການພົບກັບພີ່ນ້ອງທຸກໆຄົນແລະທຸກໆຄອບຄົວໄດ້ດີ... ສິ່ງທີ່ປະທັບໃຈໃນການພົບພໍ້ນີ້ ກໍຄືການສົນທະນາຢ່າງເປີດອົກເປີດໃຈໃສ່ກັນກ່ຽວກັບທຸກເລື້ອງ ຕລອດເຖິງເລື້ອງຊີວິດສ່ວນຕົວກັບບາງຄົນ ແລະເລື້ອງຄວາມເຊື່ອຖືກັບຫລາຍໆຄົນນຳອີກດ້ວຍ.

Nous avons appris que les chrétiens laotiens d'Argentine ont organisé leur camp d'été du 13 au 18 janvier dernier (c'est l'été dans l'hémisphère sud !). Une vingtaine de personnes y ont participé et ont



été bénies. Nous n'avons malheureusement pas de photos de cette rencontre. En outre, le pasteur *Singto* nous a également informé du baptême de *M. Kanha Thammavong* ainsi que deux autres jeunes filles, à la fin de l'année dernière à l'Église de Chacomus (BS). Depuis, la famille *Thammavong* a déménagé de Chacomus à Posadas, où M. *Kanha* a amené quelques Laotiens à la foi. Aujourd'hui, quelques familles se réunissent régulièrement à Posadas pour le culte. Ce groupe naissant a besoin d'un responsable spirituel qui a une expérience du service et un réel fardeau pour les âmes. J'encourage personnellement M.





*Kanha* à poursuivre dans son témoignage et dans ce service. Qu'il sache que si Dieu appelle quelqu'un pour un ministère précis, il lui donnera lui-même la capacité de l'accomplir.

❖ J'ai téléphoné à quelques amis d'Argentine au début de janvier pour leur présenter mes voeux et pour avoir de leurs nouvelles. Tous ont évoqué le souvenir de ma visite et des liens d'amitié que nous avons pu tisser au cours de cette visite. A à la fin de l'entretien téléphonique, beaucoup m'ont aussi demandé quand je prévoyais effectuer ma prochaine visite... Je me pose la même question! Car moi aussi, je garde intact le souvenir de ma rencontre avec chacun de ces amis, des discussions que nous avons eues sur la foi et toutes sortes d'autres sujets avec eux.

## Australie

❖ ນັບຕັ້ງແຕ່ວາຣະສານສະບັບກ່ອນມາເຖິງປັດຈຸບັນນີ້, ກໍບໍ່ໄດ້ຮັບຂ່າວຈາກພີ່ນ້ອງຊາວລາວຢູ່ປະເທດ ອອສຕຣາເລັຍ ອີກເລີຍ. ແຕ່ຂ່າວທີ່ທາງສື່ສານມວນຊົນບອກໃຫ້ຊາບກ່ຽວກັບອັກຄີພັຍທາງພາກຕາວັນອອກສ່ຽງໃຕ້ ແລະອຸດທະກະພັຍທາງພາກເໜືອ ທີ່ເກີດຂຶ້ນເມື່ອເດືອນມີນາ ທີ່ຜ່ານມານີ້ຢູ່ໃນປະເທດດັ່ງກ່າວ ກໍພາໃຫ້ພວກເຮົາເກີດຄວາມວິຕົກນຳປະຊາກອນທົ່ວໄປໃນຂົງເຂດທີ່ເກີດມີເຫດຮ້າຍນີ້. ມີບໍນໍເພື່ອນຮ່ວມຊາດບາງຄົນທີ່ໄດ້ຮັບເຄາະຮ້າຍຈາກພັຍພິບັດອັນເປັນປວັດການຂອງໂລກຄັ້ງນີ້? ຄົງຈະບໍ່ມີຜູ້ໃດເວົ້າໄດ້ດອກ ຖ້າຫາກວ່າບໍ່ມີຜູ້ທີ່ອາສັຍຢູ່ປະເທດນີ້ບອກຂ່າວໃຫ້ຮູ້ໂດຍກົງ. ສະນັ້ນ, ຄວາມສັມພັນ ຂໍເພິ່ງຜູ້ອ່ານທາງ ອອສຕຣາເລັຍ ເພື່ອບອກຂ່າວໃຫ້ຊຸມນຸມຊົນຊາວລາວທົ່ວໂລກໄດ້ຮູ້ນຳ. ຂໍຂອບໃຈ.

Depuis le dernier numéro de «Contact», nous n'avons reçu aucune nouvelle des chrétiens laotiens d'Australie. Mais les media ont abondamment parlé des inondations qui ont affecté le nord du pays et les incendies qui ont ravagé le sud-est en mars dernier et que les médias nous inquiètent beaucoup pour la population en général, et nous nous demandons si ces catastrophes ont fait des victimes parmi nos compatriotes. Qui le saura s'ils ne nous envoient pas de nouvelles? Nous espérons donc que nos lecteurs d'Australie nous enverrons quelques nouvelles de ce désastre du siècle, avec la grande perte en biens et en vie humaines qu'il a entraînés, et nous les remercions à l'avance.

## États-Unis

❖ ຫວ່າງວັນທີ 9 ກຸມພາ 09 ທີ່ຜ່ານມານີ້, ອຈ ສົມສິດ ໄພສານ ຢູ່ຣັດ ເທັກຊັສ ກໍໄດ້ໂທຣະສັບມາຫາເພື່ອທຳຄວາມຮູ້ຈັກຮັກແພ່ນແລະເພື່ອໃຫ້ຂ່າວຄວາມສຸກທຸກຂອງຄອບຄົວ, ຂອງການງານ ແລະຂ່າວກ່ຽວກັບການຮັບໃຊ້ພຣະເຈົ້າໃນທ່າມກາງເພື່ອນຮ່ວມຊາດຂອງພວກເຮົາ. ເຖິງແມ່ນວ່າເຄີຍໄດ້ຮູ້ກັນຜ່ານທາງວາຣະສານ ມາໄດ້ຫລາຍປີແລ້ວ ແຕ່ກໍບໍ່ເຄີຍໄດ້ໂອ້ລົມກັນທາງຈົດໝາຍ ຫລືທາງໂທຣະສັບຈັກເທື່ອເລີຍ. ນອກຈາກຂ່າວກ່ຽວກັບວຽກງານການຮັບໃຊ້ພຣະເຈົ້າໃນທ່າມກາງຊາວລາວແລ້ວ, ທ່ານສົມສິດ ຍັງໄດ້ບອກເຖິງວິກິດທາງດ້ານເສຖກິດຊຶ່ງທຳໃຫ້ໂຮງງານປິດແລະເວລານີ້ຜູ້ກ່ຽວເອງກໍຫວ່າງງານແລະຄົງຈະຫາງານໃໝ່ທຳໄດ້ຍາກເນື່ອງຈາກອາຍຸມໍ່ໆຈະເຖິງກະສຽນ

Le 9 février dernier, le Pasteur *Phaisane Somsith*, du Texas, nous a téléphoné pour la première fois pour faire connaissance et pour nous donner quelques nouvelles de l'Eglise et de la crise économique aux Etats-Unis. Il est vrai qu'on ne se connaît qu'à travers le magazine «Contact», car cela fait plusieurs années que le Pasteur Phaisane est un lecteur fidèle, mais nous n'avons jamais échangé de nouvelles ni par lettre, ni par téléphone. Notre frère vient de perdre son emploi suite à la fermeture de l'usine où il travaillait depuis des années. Malgré la difficulté de trouver un autre emploi à cause de la crise, en particulier pour quelqu'un qui a près de 60 ans, notre frère fait confiance au

ແລ້ວ...ຢ່າງໃດກໍຕາມ, ຜູ້ກ່ຽວຍັງມີຄວາມຕັ້ງໃຈວ່າຖ້າພຣະເຈົ້າຊົງອະນຸຍາດໃຫ້ປະສົບກັບສະພາບການເຊັ່ນນີ້, ບາງທີພຣະອົງຢາກໃຫ້ທຸ້ມເທເວລາທັງໝົດເພື່ອຮັບໃຊ້ພຣະອົງກໍເປັນໄດ້. ອັນນີ້ກໍເປັນຕົວຢ່າງທີ່ດີໃນການມອງທຸກສິ່ງໃນແງ່ບວກໄດ້.

Seigneur, certains que toutes choses sont entre ses mains. Si le Seigneur permet cette situation, c'est peut-être pour qu'il dispose de plus de temps pour s'occuper de l'Eglise et l'oeuvre de Dieu. Il nous donne là un bon exemple d'une attitude de foi et de confiance qui permet de considérer toute situation d'une manière positive.

❖ ໃນລະຍະທີ່ຂ້າພະເຈົ້າຍັງຢູ່ປະເທດລາວຫວ່າງເດືອນ ເມສາ ທີ່ຜ່ານມານີ້, ກໍພໍດີໄດ້ຮັບໂທຣະສັບຈາກ ອຈ ມິເກ ພຣະສວັດ ທີ່ໂທຣະສັບໄປຢາມພີ່ນ້ອງແລະຖືກເວລາທີ່ຂ້າພະເຈົ້າໄປພັກຢູ່ນຳພວກເຂົາ. ສະນັ້ນ, ຈຶ່ງໄດ້ມີໂອກາດລົມກັນທາງໂທຣະສັບກ່ຽວກັບຄອບຄົວແລະກ່ຽວກັບວຽກການໆຮັບໃຊ້ໃນຄຣິສຕະຈັກທ່າມກາງຊາວລາວເຮົາ. ນອກນັ້ນແລ້ວ, ອຈ ຍັງໄດ້ບອກຂ່າວຂອງການປະຊຸມຫລວງຂອງສະຫາພັນຄຣິສຕະຈັກລາວຢູ່ອະເມຣິກາ ແລະ ການາດາ ຊຶ່ງຂ້າພະເຈົ້າກໍເຄີຍໄດ້ໄປຮ່ວມນຳຄັ້ງນຶ່ງ ແລະແຕ່ນັ້ນມາກໍບໍ່ໄດ້ຮັບຂ່າວຫຍັງອີກເລີຍ... ໄດ້ຍິນວ່າປີນີ້, ທາງສະຫາພັນໄດ້ເຊື້ອເຊີນຜູ້ສຳຄັນມາຈາກປະເທດລາວເພື່ອເປັນວິທຍາກອນ. ຂໍໃຫ້ທຸກຄົນທີ່ເຂົ້າຮ່ວມໃນປີນີ້ຈົ່ງໄດ້ຮັບພຣະພອນອັນມະຫາສານຈາກພຣະເຈົ້າເທີ້ນ!



❖ Lors de ma visite au Laos en avril dernier, j'ai eu l'occasion de parler au téléphone avec le pasteur *Miké Phrasavath*, des Etats-Unis, qui a appelé sa maman, chez qui je logeais justement ces jours-là. Nous avons ainsi échangé des nouvelles de nos familles et de notre ministère parmi nos compatriotes. Il m'a aussi parlé de la conférence annuelle de la Fédération des Eglises laotiennes (LCC) des Etats-Unis et du Canada, qui aura lieu cet été en Californie. J'ai eu moi-même l'occasion de participer une fois à une telle conférence, qui s'est tenue au Canada en 1998. J'en garde un excellent souvenir. J'ai appris que pour cette année, la LCC a invité un responsable bien connu des Eglises du Laos comme à cette conférence. Que Dieu bénisse ce temps et tous les participants.

## Canada

❖ ເປັນຄັ້ງແຮກເຊັ່ນກັນທີ່ໄດ້ຮັບຈົດໝາຍແລະຄ່າຈ່ອງຈາກ ອຈ ສີລັງ ແກ່ນບຸດຕາ ຈາກຣັດ ບຣິຕິສ ໂກໂລມເບັຍ ປະເທດ ການາດາ. ພ້ອມກັນກັບ ເຊັກກ໌ ທີ່ ອຈ ສົ່ງຫາ, ເພິ່ນຍັງໄດ້ສົ່ງຄຳອ່ວຍພອນໃຫ້ວາຣະສານຍືນຍົງຄົງນານຕໍ່ໄປ... ຂໍຂອບໃຈນຳ ອຈ ຫລາຍໆ ທີ່ມີເປົ້າໝາຍແລະຈຸດປະສົງແບບດຽວກັນກັບພວກຂ້າພະເຈົ້າ.

C'est aussi la première fois que nous recevons une lettre du Pasteur *Sylang Kèneboutta*, de British Colombia, Canada. Avec son abonnement, il a aussi envoyé les voeux de longue vie et de prospérité pour notre magazine. Merci au pasteur Sylang de partager le même souhait et la même vision que nous!

❖ ຜູ້ທີ່ບໍ່ເຄີຍປ່ອຍວາງໃນການອູ້ຊູວາຣະສານຕັ້ງແຕ່ຕົ້ນມາກໍຄື ອຈ ຕົງ ຈິດຈະເລີນທັມ ທີ່ເມືອງ ເຣຊີນາ, ຣັດ ອອນຕາຣີໂອ ປະເທດ ການາດາ. ທຸກໆປີໃດກໍເກືອບຈະເວົ້າໄດ້ວ່າເປັນຜູ້ທຳອິດທີ່ສົ່ງຂ່າວໄປຫາພວກຂ້າພະເຈົ້າ. ຖ້າແມ່ນວ່າຜູ້ອ່ານທຸກຄົນຫາກເອົາຈິດເອົາໃຈໃສ່ແບບນີ້ສເມີ, ແນ່ນອນວ່າວາຣະສານຊິບໍ່ເດືອດຮ້ອນກັບທຶນຮອນແລະກັບການຂັດຂຽນເລີຍ. ໄດ້ຂ່າວວ່າ ອຈ ຕົງ ພ້ອມຄອບຄົວຈະໄດ້ພາກັນເດີນທາງໄປທ່ຽວແລະຢ້ຽມຢາມພີ່ນ້ອງໃນ ອອສຕຣາເລັຍ. ພວກຂ້າພະເຈົ້າຂໍອະທິຖານເພື່ອໃຫ້ຂໍໃຫ້ການໄປຢ້ຽມຢາມຄັ້ງນີ້ເປັນພຣະພອນສຳລັບຊາວຄຣິສຕຽນຂອງພວກເຮົາໃນປະເທດດັ່ງກ່າວນີ້.



❖ Comme au début de chaque année, le pasteur *Tong Chittchalerntham* est pratiquement la première personne qui nous a envoyé une carte de voeux accompagnée de son abonnement. Si tous nos lecteurs étaient aussi fidèles comme lui, nous n'aurions aucun problème financier... Notre frère et son épouse projettent d'aller en Australie cette année et nous prions pour qu'ils soient en bénédiction pour les chrétiens laotiens de ce pays. Ils nous donneront certainement des échos de leur voyage dès leur retour.

## Suisse

❖ ຫວ່າງວັນທີ 22 ມົກກະຣາ 09 ໄດ້ຕັ້ງໃຈວ່າຈະມາຢາມຄອບຄົວທ່ານ ສີວິໄຊ ແພງຣັສມີ ຢູ່ເມືອງ ໂຣມານແນນ ປະເທດ ສວິສ ແຕ່ແລ້ວຄວາມຕັ້ງໃຈກໍທຳໃຫ້ຜິດຫວັງເພາະເກີດມີບັນຫາດ້ານພາຫານະ. ຕອນຄ່ຳ, ຫລັງຈາກເລີກປະຊຸມແລ້ວ ຣົດເລີຍຕິດຂັດ ຈຶ່ງໄດ້ເອີ້ນຊ່າງແປງມາຊ່ອຍໃນເວລາເກືອບທ່ຽງຄືນແລ້ວ! ພໍຕິດຈັກໄດ້, ຂ້າພະເຈົ້າກໍເລີຍຕັດສິນໃຈກັບ ລີອົງ ເພາະຢ້ານວ່າຈະມີບັນຫາໃໝ່ອີກໃນມື້ໜ້າ, ຈຶ່ງຈຳເປັນຕ້ອງໄດ້ຜິດນັດແລະຂາດການປະຊຸມທີ່ໄດ້ກະຕຽມໄວ້ໃນວັນດຽວກັນ... ເທື່ອໜ້າຊິຂໍແກ້ຕົວໃໝ່!

❖ ເມື່ອທາບທາມເບິ່ງທາງອິນເຕີແນັດລາຍຊື່ຄົນລາວຜູ້ທີ່ເຄີຍໄດ້ພົບ ແລະຕິດຕໍ່ພົວພັນກັນຕັ້ງແຕ່ສມັຍທີ່ຂ້າພະເຈົ້າກັບຄອບຄົວເຄີຍໄດ້ອາສັຍຢູ່ໃນປະເທດສວິສເຊີແລນ, ກໍຍັງເຫັນວ່າຫລາຍໆຄອບຄົວຍັງອາສັຍຢູ່ບ່ອນເກົ່າ ບໍ່ຄືຄົນລາວໃນປະເທດອື່ນທີ່ມັກຍົກຍ້າຍຫລືປ່ຽນທີ່ຢູ່ເປັນເນື່ອງນິດ. ຂ້າພະເຈົ້າຢາກຈະຊອກຫາໂອກາດອັນເໝາະສົມເພື່ອທ່ຽວໄປຢ້ຽມຢາມພີ່ນ້ອງເຫລົ່ານີ້ອີກຄືສມັຍກ່ອນ. ຫລາຍຄອບຄົວກໍເຄີຍໄດ້ຮັບວາຣະສານ ຄວາມສັມພັນ ໃນຊຸມປີ 1980 ແຕ່ຫາກວ່າດຽວນີ້ກໍໄດ້ຢຸດສົ່ງໃຫ້ເພາະບັນຫາທາງດ້ານເສຖກິດ. ສະນັ້ນ, ຖ້າຫາກວ່າພວກພີ່ນ້ອງຊາວລາວໃນປະເທດ ສວິສ ຍັງມີຄວາມປະສົງຢາກຈະຮັບວາຣະສານຕໍ່ໄປ, ກະຣຸນາຕິດຕໍ່ແລະຊ່ອຍຈ່າຍຄ່າຈ່ອງເພື່ອເປັນການອຸດໜູນນຳພວກຂ້າພະເຈົ້າໄດ້ທຸກໂອກາດ ແລະພວກຂ້າພະເຈົ້າຍິນດີສເມີທີ່ຈະຕິດຕໍ່ແລະຮື້ຟື້ນຄວາມສັມພັນກັບທຸກໆຄອບຄົວ.

Le jeudi 22 janvier dernier, j'avais projeté de rendre visite à M. et Mme *Sivixay Phèngrasmy*, à Romanel-sur-Lausanne, Suisse. J'ai malheureusement manqué ce rendez-vous en raison d'un problème de voiture. Le soir d'avant, en sortant assez tard d'une réunion, je ne pouvais plus faire démarrer ma voiture. J'ai dû faire venir des dépanneurs suisses, qui m'ont aidé à mettre en marche le moteur. Mais il me fallait rentrer directement à la maison pour la faire réparer, sous peine de me retrouver en panne au prochain arrêt. Avec ce problème, j'ai également manqué une réunion de travail prévue le même jour. Cette visite n'est donc que partie remise...

❖ En vérifiant l'adresse des amis laotiens de Suisse dans l'annuaire téléphonique, je me suis rendu compte qu'un bon nombre de ces familles habitent toujours à la même adresse, ou du moins dans la même ville – ce qui est bien moins souvent le cas dans d'autres pays. J'aimerais bien trouver du temps pour retourner les visiter, comme je le faisais à l'époque où notre famille habitait en Suisse. Dans les années 80, beaucoup de ces familles recevaient «Contact», et quelques années plus tard, nous avons dû cesser nos envois pour des raisons économiques. Aujourd'hui, quelques familles seulement ont réglé leur abonnement et continuent à le recevoir. Naturellement nous serons heureux de renouer le contact avec nos anciens lecteurs s'ils souhaitent se réabonner à notre magazine!

## France

❖ ໄດ້ເກືອບສອງປີແລ້ວທີ່ບໍ່ໄດ້ຮັບຂ່າວຈາກຄອບຄົວຂອງ ອຈ ບຸນມີ ຄືນັບຕັ້ງແຕ່ຄອບຄົວເພິ່ນໄດ້ຍົກຍ້າຍຈາກເມືອງ ອາວິຍົງ ໄປອາສັຍຢູ່ທາງເຂດເມືອງ ປາມີເອ (09). ວາຣະສານ "ຄວາມສັມພັນ" ສະບັບນີ້ກໍເກືອບຈະຕຽມຮຽບຮ້ອຍແລ້ວຈຶ່ງໄດ້ຮັບຈົດໝາຍຈາກ ອຈ ບຸນມີ ທີ່ໃຫ້ຂ່າວຂອງຄອບຄົວແລະຂອງການງານຊຶ່ງພວກຂ້າພະເຈົ້າໄດ້ເຜີຍແຜ່ໃນສະບັບນີ້. ຫລັງຈາກໄດ້ຮັບຈົດໝາຍແລ້ວ ກໍມີໂອກາດໄດ້ພົບກັບຄອບຄົວຜູ້ກ່ຽວໃນເມື່ອມີການອົບຮົມຄູ່ຄອງຢູ່ແຊັງ-ອານແບັງ (71) ເມື່ອເດືອນພຶສພາ (5) ທີ່ຜ່ານມານີ້. ຂໍຂອບໃຈນຳ ອຈ ບຸນມີສຳລັບຂ່າວທີ່ລໍຖ້າມາຕັ້ງດົນນານແລ້ວ. ພວກຂ້າພະເຈົ້າຂໍອະທິຖານໃຫ້ພຣະເຈົ້າຊົງອ່ວຍພຣະພອນການ



Cela fait plus d'une année que nous attendions les nouvelles de la famille du Pasteur *Bounmy Sely* qui a déménagé d'Avignon pour s'installer à Pamiers (09). Sa lettre de nouvelles nous est parvenue dans le courant du mois de mars. Un peu plus tard, nous nous sommes rencontrés lors du week end de couples du mois de mai dernier. Nous sommes vraiment heureux de cette rencontre et nous le remercions pour ces nouvelle personnelles et celles qui concernent son ministère. Nous continuons à prier pour cette famille et pour ce petit noyau de chrétiens qui a bien démarré. Que le Seigneur les fortifie tous et que la foi de chacun puisse être un témoignage auprès de

ງານ ແລະໝູ່ຊຸມນຸມທີ່ເກີດໃໝ່ນີ້ໃຫ້ຈະເຣີນກ້າວໜ້າຕໍ່ໄປເພື່ອຈະເປັນພະຍານໃກ້ແກ່ຊາວມ້ຽນທັງໝົດໃຫ້ຮັບຮູ້ຣິດເດດແລະຄວາມຍິ່ງໃຫຍ່ຂອງພຣະເຈົ້າ.

❖ ບັນຫານຶ່ງທີ່ໄດ້ຍົກຂຶ້ນມາສົນທະນາກັນກັບຄະນະກັມມະທິການວາຣະສານຊຸດໃໝ່ກໍຄືເຮັດຢ່າງໃດຈຶ່ງຈະທຳໃຫ້ມີຜູ້ອ່ານໃໝ່ໆຕື່ມຂຶ້ນໄດ້? ຕອນຕົ້ນ, ວາຣະສານ ຄວາມສັມພັນ ເປັນທີ່ຮູ້ຈັກກັນຢ່າງກວ້າງຂວາງໄດ້ກໍເພາະການອອກໄປຢ້ຽມຢາມຊາວອົພຍົບທີ່ອາສັຍຢູ່ຕາມສູນຕ້ອນຮັບ ຫລືຕາມບ້ານເຮືອນຂອງພວກເຂົາໃນຫລາຍໆເຂດຂອງປະເທດຝຣັ່ງ. ຕໍ່ມາ, ສະພາບການກໍປ່ຽນແປງແລະຍຸທວິທີຂອງວຽກການກໍຕ້ອງໄດ້ດັດແປງໄປນຳ. ການຢ້ຽມຢາມກໍຈຳກັດນຳແຕ່ຄອບຄົວຂອງຜູ້ທີ່ຮູ້ຈັກກັນ, ຊຸມນຸມຊົນຄົນລາວກໍກະຈັດກະຈ່າຍໄປຄົນລະແຫ່ງລະຫົນ. ຈຳນວນການພິມວາຣະສານກໍມີຈຳກັດຮັດແຄບຍ້ອນບັນຫາເສຖກິດ... ສະນັ້ນ, ກ່ອນຈະນຳໃຫ້ຜູ້ອ່ານໃໝ່ໆສົນໃຈຈຶ່ງບໍ່ເປັນການງ່າຍ ນອກຈາກຂໍຄວາມຮ່ວມມືຈາກຜູ້ອ່ານທີ່ຮັບວາຣະສານມາເປັນປະຈຳເພື່ອຊ່ອຍເປັນປາກ ເປັນສຽງແລະໂຄສະນາເຜີຍແຜ່ໃຫ້ເພື່ອນມິດແລະຄອບຄົວຮັບຮູ້ນຳ. ຖ້າຫາກມີຜູ້ນຶ່ງຜູ້ໃດສົນໃຈ, ພວກຂ້າພະເຈົ້າພ້ອມສເມີທີ່ຈະສົ່ງບາງສະບັບໄປໃຫ້ລອງອ່ານເບິ່ງເສັຍກ່ອນ. ກະຣຸນາຕິດຕໍ່ໄປຫາພວກຂ້າພະເຈົ້າໄດ້ທຸກໂອກາດ.

❖ ພວກຂ້າພະເຈົ້າມີຄວາມດີໃຈຢ່າງລົ້ນເຫລືອທີ່ໄດ້ມີໂອກາດຮື້ຟື້ນການຕິດຕໍ່ພົວພັນກັບພີ່ນ້ອງຄຣິສຕຽນຊາວ ຂມຸ ຢູ່ໃນເຂດເມືອງ ອາແລັສ ອີກຄັ້ງໃໝ່. ຕັ້ງແຕ່ຕົ້ນປີ 2009 ເປັນຕົ້ນມາ, ພວກຂ້າພະເຈົ້າກໍໄດ້ໄປຢ້ຽມຢາມແລະຊຸມນຸມນຳພວກພີ່ນ້ອງສອງຄັ້ງແລ້ວ. ຄັ້ງສຸດທ້າຍໄດ້ມີຫລາຍໆຄົນມາຮ່ວມນຳ ແລະພີ່ນ້ອງໄດ້ຈັດໃຫ້ມີການກິນເຂົ້າປ່ານຳກັນ. ກ່ອນການຊຸມນຸມ, ພວກເຮົາກໍໄດ້ມີໂອກາດຟັງເພງຈາກນັກຮ້ອງມາຈາກປະເທດລາວທີ່ໄດ້ແວ່ໄປຢ້ຽມຢາມຢູ່ໃນສະຖານທີ່ກິນເຂົ້າປ່າ. ແລະໃນການຊຸມນຸມກັນນັ້ນ, ສັງເກດເຫັນວ່າມີຊາວໜຸ່ມຫລາຍໆຄົນມາຮ່ວມແລະຫວັງວ່າເທື່ອໜ້າຈະໄດ້ພົບກັບທຸກໆຄົນອີກ.

## Merci...

❖ ກ່ອນຈະຈົບລົງນີ້, ຄະນະກັມມາທິການວາຣະສານຂໍສະແດງຄວາມຂອບໃຈຢ່າງລົ້ນເຫລືອມາຍັງຜູ້ອ່ານຫລາຍໆທ່ານຢູ່ປະເທດຝຣັ່ງເສດ ແລະຢູ່ປະເທດ ສວິສເຊີແລັນ ທີ່ໄດ້ອຸດໜູນແລະໃຫ້ກຳລັງໃຈຕລອດມາ. ພວກຂ້າພະເຈົ້າບໍ່ສາມາດທີ່ຈະຂຽນລາຍຊື່ຂອງແຕ່ລະຄົນລົງໃນທີ່ນີ້ໄດ້. ຖ້າຫາກວ່າທ່ານເອງໄດ້ມີສ່ວນໃນການຈັບຈ່ອງກໍຂໍໃຫ້ຮັບເອົາຄວາມກະຕັນຍູຈາກພວກຂ້າພະເຈົ້າເຖີ້ນ!. ພວກທ່ານທີ່ໄດ້ຮັບວາຣະສານມາຫລາຍປີແລ້ວ ແຕ່ຍັງບໍ່ທັນໄດ້ສົບທົບປະກອບສ່ວນໃນຄ່າໃຊ້ຈ່າຍບາງສ່ວນ, ພວກຂ້າພະເຈົ້າກໍຫວັງເປັນຢ່າງຍິ່ງວ່າຈະໄດ້ຮັບຄວາມສນັບສນູນຈາກພວກທ່ານໃນບໍ່ຊ້າບໍ່ນານນີ້ເອງ. ຂໍຂອບໃຈນຳທຸກໆທ່ານມານະໂອກາດນີ້ດ້ວຍ.

leur nombreux compatriotes habitant dans la région.

❖ Lors de notre réunion entre les membres du nouveau comité rédactionnel de «Contact», nous avons réfléchi sur le moyen de recruter les nouveaux lecteurs. Dès le début, «Contact» s'est fait connaître par nos visites aux réfugiés dans les centres d'accueil et dans leurs foyers. Par la suite, nous avons dû nous adapter aux changements: les centres d'accueil se sont fermés les uns après les autres, les réfugiés se sont dispersés aux quatre coins de la France, et nos visites sont limitées par la force des choses à des personnes qui sont restées en contact personnel avec nous... Par mesure d'économie, nous avons dû limiter le tirage et le nombre d'exemplaires expédiés. Nous souhaiterions faire connaître notre magazine à un public laotien plus large, mais ce n'est pas une tâche facile que de retrouver ces contacts. C'est pourquoi nous demandons à tous nos lecteurs d'être notre porte-parole pour faire connaître autour d'eux cette publication. Nous serions très heureux d'envoyer gratuitement quelques exemplaires promotionnels à ceux qui souhaitent faire connaître Contact et les encourager à nous régler leur abonnement annuel.

❖ Nous sommes très heureux d'avoir pu renouer le contact avec les frères et soeurs Khmu d'Alès. Depuis le début de cette année 2009, nous avons pu les visiter à deux reprises. La dernière visite remonte au début du mois de mai, et nos amis ont rassemblé à cette occasion de nombreux compatriotes pour un pique-nique tout près de la bambouseraie d'Anduze. Avant de célébrer notre culte, nous avons eu la joie d'écouter une chanteuse venant du Laos et une autre de la région lyonnaise. J'ai remarqué qu'il y a plus de jeunes qui assistaient au culte lors de la dernière réunion et j'espère de les retrouver tous pour la prochaine visite dans le courant de cet été.

Avant de terminer, nous voudrions exprimer nos remerciement aux fidèles lecteurs de France et de Suisse qui nous soutiennent depuis des années. Nous ne pouvons pas citer tous les noms à travers ces pages, mais si vous avez pris part à ce soutien en réglant votre abonnement, veuillez donc recevoir notre gratitude. Pour ceux qui reçoivent depuis plusieurs années mais qui n'ont peut-être pas pensé à participer aux frais, nous les encourageons à le faire sans tarder! Nous vous remercions tous infiniment!

# Nouvelles du sud-est de la France

## Nouvelles du pasteur Bounmy

**Bounmy Sely, pasteur dans la communauté Yu-Mienh dans le sud de la France à côté de son activité professionnelle, a quitté Avignon l'an dernier et exerce maintenant son ministère dans le département de l'Ariège.**



Juste quelques mots pour donner de nos nouvelles. Ma famille et moi nous portons bien. Depuis l'été dernier, je travaille comme logisticien chez un grossiste en électricité. Mon épouse aide de temps à autre sa grande soeur dans son restaurant de plats à emporter. Sinon la plupart du temps, elle s'occupe de nos enfants à la maison.

Nous nous habituons peu à peu à notre nouvelle situation. L'année dernière a été difficile en raison des pannes à répétition de notre voiture. Mais heureusement tout est maintenant rentré dans l'ordre.

En ce qui concerne notre ministère, nous essayons de rassembler les chrétiens Mien de la région une fois par mois pour un culte. Nous comptons une dizaine de familles. Pour l'instant, tout se passe très bien, chacun est heureux de se retrouver à chaque rencontre.

Récemment, nous avons déposé une demande au maire pour obtenir un local de culte, et nous espérons bientôt obtenir une réponse positive.

Autrement, la famille de mon beau-frère, qui s'opposait jusque là à l'Évangile, s'est convertie, ce qui a beaucoup étonné nos compatriotes animistes; ils n'en croient pas leurs oreilles! Nous prions Dieu de se manifester et de continuer à toucher les coeurs de nos compatriotes. Nous avons besoin de vos prières pour que les barrières tombent et que l'Évangile se répande davantage.

Bien fraternellement en Christ,

*Pasteur Bounmy*

## ຂ່າວຈາກ ອຈ ບຸນມີ

ຂ້າພະເຈົ້າຢາກສົ່ງຂ່າວຫຍໍ້ໆນີ້ມາໃຫ້ທຸກຄົນໄດ້ຮັບຊາບນຳ. ຂ້າພະເຈົ້າພ້ອມດ້ວຍຄອບຄົວສະບາຍດີທຸກຄົນ. ຂ້າພະເຈົ້າເອງໄດ້ເລີ້ມເຮັດການນັບຕັ້ງແຕ່ຣະດູຮ້ອນຂອງປີທີ່ຜ່ານມາຢູ່ໃນບໍຣິສັດແຫ່ງນຶ່ງທີ່ຂາຍເຄື່ອງໄຟຟ້າ ແລະຂ້າພະເຈົ້າເປັນຜູ້ກຳກັບພະແນກສັມພາຣະທົ່ວໄປ. ສ່ວນພັລຍາຂອງຂ້າພະເຈົ້ານັ້ນ, ບາງເທື່ອບາງຍາມກໍໄປເຮັດການຊ່ອຍເອື້ອຍຂອງລາວທີ່ເປີດຮ້ານອາຫານ ແຕ່ຫາກວ່າສ່ວນມາກລາວກໍດູແລລູກໆຢູ່ບ້ານ.

ພວກຂ້າພະເຈົ້າກໍຄ່ອຍໆຊິ້ນເຄີຍກັບສະພາບການເປັນຢູ່ອັນໃໝ່ຂອງພວກຂ້າພະເຈົ້າ. ປີທີ່ຜ່ານມາ, ກໍເປັນປີທີ່ຫຍຸ້ງຍາກຫລາຍສຳລັບພວກຂ້າພະເຈົ້າເພາະມີບັນຫາກ່ຽວກັບພາຫານະບໍ່ຢຸດບໍ່ເຊົາຈັກເທື່ອ ແຕ່ຫາກວ່າເວລານີ້ທຸກຢ່າງກໍເປັນລະບຽບແລະຮ້ອຍ ແລະເຂົ້າຮ່ອງເຂົ້າຮອຍເປັນປົກກະຕິແລ້ວ.

ກ່ຽວກັບພາຣະກິດການຮັບໃຊ້ພຣະເຈົ້າ, ພວກຂ້າພະເຈົ້າກໍພະຍາຍາມຕຸ້ມໂຮມຄຣິສຕຽນເຜົ່າມ່ຽນໃນເຂດນັ້ນເພື່ອຮ່ວມໃຈກັນນະມັສການພຣະເຈົ້າເດືອນລະຄັ້ງ. ມີທັງໝົດສິບກວ່າຄອບຄົວ. ຈົນເຖິງປັດຈຸບັນນີ້ກໍເຫັນວ່າທຸກສິ່ງທຸກຢ່າງດຳເນີນໄປໄດ້ດີທີ່ສຸດ, ແຕ່ລະຄົນກໍມີຄວາມຍິນດີທີ່ພົບພໍ້ກັນໃນແຕ່ລະຄັ້ງ.

ຫວ່າງບໍ່ດົນມານີ້, ພວກຂ້າພະເຈົ້າໄດ້ຂຽນຈົດໝາຍໄປຫາທ່ານເຈົ້າເມືອງເພື່ອຂໍໃຊ້ຫ້ອງນຶ່ງສຳລັບນະມັສການພຣະເຈົ້າ. ພວກຂ້າພະເຈົ້າຍັງລໍຄຳຕອບຢູ່ແລະຫວັງວ່າຈະໄດ້ຫ້ອງຊຸມນຸມຕາມຄວາມປາຖນາ.

ນອກຈາກນີ້ແລ້ວ, ຍັງມີຄອບຄົວຂອງອ້າຍເຂີຍຂ້າພະເຈົ້າຊຶ່ງແຕ່ກ່ອນເປັນຜູ້ຕໍ່ຕ້ານຂ່າວປະເສີດໄດ້ກັບໃຈໃໝ່ມາຮັບເຊື່ອພຣະເຈົ້າ ຊຶ່ງທຳໃຫ້ເພື່ອນຮ່ວມຊາດຫລາຍໆຄົນທີ່ຍັງຖືສາສນາເດີມຢູ່ນັ້ນເກີດຄວາມປລາດໃຈທີ່ສຸດ ຈົນເຂົາບໍ່ຢາກເຊື່ອໃນຂ່າວທີ່ໄດ້ຍິນນັ້ນເລີຍ! ພວກຂ້າພະເຈົ້າອະທິຖານຂໍໃຫ້ພຣະອົງຊົງສຳແດງຣິດເດດຂອງພຣະອົງ ແລະສືບຕໍ່ຮຽກຮ້ອງໃຫ້ຈິດໃຈຫລາຍໆດວງຈະໄດ້ມອບຖວາຍໃຫ້ແກ່ພຣະອົງ.

ພວກຂ້າພະເຈົ້າຍັງຂໍເພິ່ງຄຳໄຫວ້ວອນອະທິຖານຈາກພວກທ່ານທຸກຄົນອີກດ້ວຍເພື່ອຂໍໃຫ້ພຣະເຈົ້າມ້າງເພກຳແພງແລະເພື່ອວ່າຂ່າວປະເສີດຈະໄດ້ແຈກຈ່າຍອອກໄປຢ່າງກວ້າງຂວາງ.

*ຄອບຄົວ ອຈ ບຸນມີ ແສ້ລີ*

## Journée d'évangélisation en Ariège

## ການປະກາດຂ່າວປະເສີດ

Voici un peu plus d'un an que nous sommes installés en Ariège (près de Toulouse). J'ai à coeur d'encourager les familles chrétiennes à persévérer dans la foi et à être tout simplement une lumière dans cette région, où sont concentrés la majorité des Iu-Mienh de France, dont la plupart sont restés attachés à leurs traditions religieuses ancestrales.

En collaboration avec l'Eglise Mien d'Avignon, nous avons pu organiser une journée de rencontre et de partage avec nos compatriotes animistes le 1er mai 2009 à Saint Paul de Jarrat (banlieue de Foix). Le thème de cette journée était : « Espoir en Dieu ».

Grâce à la motivation de chacun, nous avons pu mettre sur pied un programme très varié, avec des chants, des témoignages, des sketches, un message, etc., suivi d'un grand repas en commun. Nous étions environ 150 personnes, dont une cinquantaine non-croyants qui ont répondu à notre invitation. M. Kao Pou Sinlhyvong, président de l'association des Iu-Mienh de France, était aussi parmi nous.

Il y a tout juste 10 ans jour pour jour, nous avions eu une première rencontre d'évangélisation dans ce même lieu.

Le Seigneur a travaillé dans les cœurs durant toutes ces années. C'est déjà une grande victoire que nos amis animistes répondent à notre invitation et viennent à une telle rencontre.

Par la grâce de Dieu, cette journée s'est bien déroulée, et quelques familles non croyantes sont revenues le lendemain pour participer à notre culte.

Il est vrai que sans Dieu, il n'y a pas d'espoir dans ce monde, surtout en ce temps de crise, de chômage et de désespoir pour beaucoup de familles.

Un grand merci à tous ceux qui ont contribué au repas et à l'animation de cette rencontre !

*Boun my Sely*



ໄດ້ປີກວ່າແລ້ວທີ່ຄອບຄົວຂອງພວກຂ້າພະເຈົ້າຍ້າຍມາອາສັຍຢູ່ແຂວງ ອາກຣີແອເຊີ (09) ໃກ້ໆກັບເມືອງຕູລູເຊີ. ຂ້າພະເຈົ້າຢາກຈະຊຸດຫນູນຊາວຄຣິສຕຽນໃນເຂດນີ້ໃຫ້ຕັ້ງໝັ້ນຄົງໃນຄວາມເຊື່ອ ແລະໃຫ້ເປັນແສງສວ່າງແກ່ຄົນທັງປວງໃນເຂດນີ້ ຄືບ່ອນທີ່ຊາວ ອິວມ່ຽນ ໃນປະເທດຝຣັ່ງເສດສ່ວນມາກອາສັຍຢູ່ ແລະຍັງນັບຖືສາສນາເດີມຂອງພວກເຂົາຢູ່.

ດ້ວຍຄວາມຮ່ວມມືກັນກັບຄຣິສຕະຈັກ ອິວມ່ຽນ ເມືອງ ອາວິຍົງ, ພວກຂ້າພະເຈົ້າໄດ້ຈັດໃຫ້ມີການພົບປະສ້າງສັນແລະແບ່ງປັນກັນກັບເພື່ອນຮ່ວມຊາດຊາວ ອິວມ່ຽນ ຂຶ້ນເມື່ອວັນທີ 1 ເດືອນ ແມ 2009 ຢູ່ເມືອງ ແຊັງໂປນ ເດີ ຊາຣາ. ເນື້ອເຣື້ອງຂອງວັນດັ່ງກ່າວກ່ຽວກັບ "ຄວາມຫວັງໃນພຣະເຈົ້າ".

ຍ້ອນຄວາມຫ້າວຫັນຂອງແຕ່ລະຄົນ, ພວກຂ້າພະເຈົ້າຈຶ່ງໄດ້ຈັດໃຫ້ມີການລິ້ນເລີງຕ່າງໆເຊັ່ນ: ການຮ້ອງເພງ, ຄຳພະຍານ, ການຫລິ້ນລະຄອນ, ການເທສນາ... ແລະຍັງມີພາເຂົ້າສາມັກຄີອີກດ້ວຍ. ຄົນເຂົ້າຮ່ວມທັງໝົດມີປະມານ 150 ຄົນ ແລະໃນນັ້ນມີປະມານ 50 ກວ່າຄົນທີ່ບໍ່ແມ່ນຄຣິສຕຽນທີ່ໄດ້ຕອບຄຳເຊື້ອເຊີນຂອງພວກຂ້າພະເຈົ້າ. ທ່ານ ກາວປຸ ສິນລີວົງ ຜູ້ເປັນປະທານຂອງສະມາຄົມຊາວ ອິວມ່ຽນ ໃນຝຣັ່ງເສດກໍໃຫ້ກຽດມາຮ່ວມນຳພວກ້ຂາພະເຈົ້າດ້ວຍ.

ການປະຊຸມພົບປະສ້າງສັນແບບດຽວກັນນີ້ໄດ້ຈັດໃຫ້ມີຂຶ້ນໃນເວລາດຽວກັນແລະໃນສະຖານທີ່ແຫ່ງດຽວກັນນີ້ເມື່ອສິບປີກ່ອນຜ່ານມາແລ້ວ. ຕລອດລະຍະເວລາທີ່ຜ່ານມາ, ພຣະຜູ້ເປັນເຈົ້າໄດ້ຊົງທຳງານໃນຈິດໃຈຂອງຫລາຍໆຄົນ. ການທີ່ຊາວ ອິວມ່ຽນ ທີ່ບໍ່ເປັນຄຣິສຕຽນມາຮ່ວມໃນການປະຊຸມນຳຫລາຍປານນີ້ ກໍນັບວ່າເປັນໄຊຊະນະແລ້ວ.

ງານພົບປະສ້າງສັນກັນຂອງວັນນີ້ໄດ້ສິ້ນສຸດລົງຢ່າງສະງ່າຜ່າເຜີຍດ້ວຍພຣະຄຸນຂອງພຣະເຈົ້າ ແລະມື້ໃໝ່ຕໍ່ມາ, ພີ່ນ້ອງທີ່ບໍ່ເປັນຄຣິສຕຽນບາງຄົນກໍຍັງໄດ້ກັບມາຮ່ວມນະມັສການນຳພວກຂ້າພະເຈົ້າອີກ.

ຈິງຢູ່ທີ່ວ່າປັສຈາກພຣະເຈົ້າແລ້ວກໍບໍ່ມີຄວາມຫວັງອັນແທ້ຈິງເລີຍຢູ່ໃນໂລກຂອງພວກເຮົາ ໂດຍສະເພາະແລ້ວແມ່ນໃນຍາມວິກິດ, ໃນເວລາຫວ່າງງານ ແລະໃນເວລາສິ້ນຫວັງທີ່ຫລາຍໆຄອບຄົວກຳລັງປະສົບຢູ່.

ຂໍສະແດງຄວາມຂອບໃຈຢ່າງລົ້ນເຫລືອນຳທຸກຄົນທີ່ປະກອບສ່ວນໃນການຈັດຕຽມອາຫານ ແລະໃນການຄົບງັນຕ່າງໆໃນວັນດັ່ງກ່າວນີ້.

*ອຈ ບຸນມີ ແສ້ລີ*



# Comme un poisson dans l'eau à l'institut biblique



Bonjour pasteur Vanh,
Ça fait longtemps !!!

Veuillez me pardonner pour ce long silence mais j'ai eu des soucis de câble perdu. J'en ai racheté un autre et je viens de voir que j'ai 124 messages non lus dans mon ancienne adresse mail. J'espère que vous allez bien par la grâce de Dieu vous et votre famille.

Je suis comme un poisson dans l'eau ici à l'IBN et je bénis et remercie Dieu pour son appel et la façon dont IL ME FAIT GRANDIR SPIRITUELLEMENT ICI !!!

Les cours sont intenses, les devoirs à rendre aussi, les interros surprises (comme à l'école !). Nous avons des travaux pratiques, des permanences, une vie d'église riche ce qui fait que nous ne chômons pas !!!

Pour information, j'ai perdu une taille de vêtements depuis septembre et de bons kilos... tandis que d'autres en prennent passablement!

Mais apprendre de la PAROLE est ce qu'il y a de plus motivant !!!!

Je vous invite à faire la pub auprès de vos jeunes et moins jeunes, responsables ou non, afin qu'ils suivent quelques cours ici : l'IBN s'adapte à tous !!!

Et nous n'avons jamais fini d'apprendre et cela jusqu'au retour de notre Seigneur ou s'Il nous rappelle à LUI.

Phou Son étudie depuis une année à l'Institut biblique de Nogent-sur-Marne. Des études intenses dans lesquelles elle se sent très à l'aise!

ສະບາຍດີ ອຈ ວັນ,

ໄດ້ດົນແລ້ວນໍທີ່ບໍ່ໄດ້ສົ່ງຂ່າວຫາກັນ. ກະຣຸນາຍົກໂທດໃຫ້ຂ້ານ້ອຍດ້ວຍທີ່ງຽບຫາຍໄປຕັ້ງດົນນານເພາະມີບັນຫາກ່ຽວກັບການສູນເສັຍສາຍສຽບຄອມພິວເຕີ ຈົນວ່າໄດ້ຊື້ໃໝ່ ຈຶ່ງໄດ້ພົບວ່າຂ້ານ້ອຍມີຈົດໝາຍ 124 ສະບັບຢູ່ໃນທີ່ຢູ່ເກົ່າ! ຫວັງວ່າ ອາຈານ ພ້ອມດ້ວຍຄອບຄົວຍັງສຸກສະບາຍດີດ້ວຍພຣະຄຸນຂອງພຣະເຈົ້າ.

ຢູ່ທີ່ສະຖາບັນພຣະຄຣິສຕະທັມຄຳພີແຫ່ງນີ້, ຂ້ານ້ອຍມ່ວນຊື່ນຄືກັນກັບປາຢູ່ໃນນ້ຳ ແລະກໍຂອບຄຸນພຣະເຈົ້າສຳລັບຄຳຮຽກຮ້ອງ ແລະສຳລັບວິທີທີ່ພຣະອົງຊົດຊ່ອຍໃຫ້ຂ້ານ້ອຍຈະເຣີນຂຶ້ນທາງຝ່າຍຈິດວິນຍານ. ວິຊາຮຽນກໍມີຫລາຍຢ່າງແລະບົດຮຽນທີ່ຕ້ອງສົ່ງກໍເຊັ່ນກັນ, ການເສັງແບບບໍ່ຮູ້ເມື່ອໂຕຄືຢູ່ໂຮງຮຽນກໍມີ. ນອກນັ້ນ, ພວກນັກຮຽນຍັງຕ້ອງທຳວຽກບ້ານການເຮືອນ, ເຝົ້າຍາມ, ປະກອບສ່ວນໃນກິຈກັມຕ່າງໆຂອງຄຣິສຕະຈັກ ຊຶ່ງທຳໃຫ້ພວກນັກຮຽນແຕ່ລະຄົນບໍ່ຫວ່າງງານເລີຍ.

ຢາກບອກຂ່າວໃຫ້ຊາບວ່ານັບຕັ້ງແຕ່ເລີ້ມເຂົ້າຮຽນເດືອນ ກັນຍາ (9) ເປັນຕົ້ນມາ, ຂ້ານ້ອຍໄດ້ລົດນ້ຳໜັກລົງຫລາຍເຕີບ ແຕ່ຫາກວ່າບາງຄົນຊ້ຳຜັດຂຶ້ນນ້ຳໜັກຕື່ມ! ແຕ່ຫາກວ່າການຮຽນຈາກຖ້ອຍຄຳຂອງພຣະເຈົ້າກໍເປັນແນວກະຕຸ້ນໃຈຫລາຍກວ່າສິ່ງອື່ນ.

ຂ້ານ້ອຍສນັບສນູນໃຫ້ ອຈ ບອກເລົ່າໃຫ້ຄົນໜຸ່ມຫລືຄົນແກ່ ບໍ່ວ່າຈະເປັນຜູ້ຮັບຜິດຊອບໃນຄຣິສຕະຈັກຫລືບໍ່ກໍຕາມ ເພື່ອໃຫ້ເຂົາເລືອກຮຽນຂະແໜງຕ່າງໆເພາະສະຖາບັນສາມາດປັບເຂົ້າກັບຄວາມຕ້ອງການຂອງທຸກຄົນໄດ້. ແລະພວກເຮົາຮຽນບໍ່ຈົບບໍ່ສິ້ນເປັນຈັກເທື່ອຈົນກວ່າພຣະຜູ້ເປັນເຈົ້າຈະສະເດັດກັບມາ ຫລືຈົນກວ່າພຣະອົງຈະຊົງເອີ້ນເອົາພວກເຮົາໄປຢູ່ກັບພຣະອົງ.

ຍ້ອນຄວາມດີຂອງພຣະອົງໆຈຶ່ງໄດ້ນຳໃຫ້ຂ້ານ້ອຍມາຢູ່ທີ່ນີ້ ແລະດ້ວຍຄວາມຊົດຊ່ອຍຂອງພຣະອົງໆຊົງອ່ວຍພອນການງານຂອງຂ້ານ້ອນ ແລະຂອງຄົນອື່ນໆເຊັ່ນກັນ.

ຊີວິດຢູ່ຮວມກຸ່ມກັນກໍຮັ່ງມີໄປດ້ວຍຄວາມສະເທືອນໃຈແລະຄວາມງຶງງັນສເມີ. ໃນກໍຣະນີທີ່ບໍ່ເຂົ້າອົກເຂົ້າໃຈກັນ, ພວກເຮົາກໍມີການແລກປ່ຽນ, ມີການອະພັຍໂທດແລະມີການປະນິປະນອມກັນ. ຂໍຂອບພຣະຄຸນພຣະເຈົ້າເພາະໃນສະຖານທີ່ນີ້, ພວກເຮົາຍັງດຳເນີນການ "ກໍ່ສ້າງ" ຕໍ່ໄປຢູ່ເລື້ອຍໆ.

DIEU dans sa bonté envers moi, m'a bénie et amenée ici. Grâce à son aide, il bénit mon travail et celui des autres.

La vie en communautaire est riche d'émotions et de surprises. En cas d'incompréhensions, il y a échanges, pardon et réconciliation. MERCI SEIGNEUR !!! Nous sommes tous en "chantier" ici.

Il y a toutes les nationalités : quelle famille que celle de DIEU ! Merci Seigneur !!!

J'ai vu Kévang, Pafon et plein d'autres serviteurs de Dieu et j'apprends petit à petit le vaste «monde» chrétien. Je vois de temps en temps Yi et sa femme.

Je vous remercie pour vos prières et j'encourage les volontaires à prier notre Seigneur pour venir nous rejoindre ici ne serait ce que pour quelques cours mais des cours qui leur permettront de les mettre à profit pour DIEU.

Dieu est fidèle et dans ROMAINS 8.28, Il m'encourage à garder le cap.

Affectueusement en Christ à votre famille et vous-même, ainsi qu'à tous les frères sœurs dans l'Église.

*Phou Son*

ພວກເຮົາຢູ່ຮ່ວມກັນຫລາຍຊົນຊາດ. ອັນນີ້ກໍເປັນຄວາມຮັ່ງມີແທ້ໆໃນຄອບຄົວຂອງພຣະເຈົ້າ!

ຂ້ານ້ອຍໄດ້ມີໂອກາດພົບ ອຈ ປະຟົງ, ອຈ ແຄ້ວັງ ແລະຜູ້ຮັບໃຊ້ຄົນອື່ນໆອີກຫລາຍຄົນ ແລະຂ້ານ້ອຍກໍເລີ້ມຮຽນຮູ້ເທື່ອລະເລັກທີລະນ້ອຍຄົນອື່ນໆໃນວົງອັນກວ້າງຂວາງຂອງຊາວຄຣິສຕຽນຂອງພວກເຮົາ. ບາງຄັ້ງບາງຄາວ ກໍໄດ້ພົບກັບ ວັງຢີ ແລະພັລຍາຂອງລາວເຊ່ນກັນ.

ຂ້ານ້ອຍຂໍຂອບໃຈສຳລັບຄຳອ້ອນວອນອະທິຖານຂອງ ອຈ ແລະຂອງພີ່ນ້ອງທຸກໆຄົນ ແລະຂ້ານ້ອຍຂໍສນັບສນູນໃຫ້ຜູ້ທີ່ສມັກໃຈຢາກຮຽນຈະໄດ້ອະທິຖານພຣະເຈົ້າເພື່ອຈະໄດ້ມາສົບທົບກັບພວກຂ້ານ້ອຍໃນທີ່ນີ້ ເຖິງແມ່ນຈະຮຽນພຽງແຕ່ບາງວິຊາເທົ່ານັ້ນທີ່ຈະຊ່ອຍໃຫ້ຮັບໃຊ້ພຣະເຈົ້າໄດ້ກໍຕາມແຕ່.

ພຣະເຈົ້າຂອງພວກເຮົາຊົງສັດຊື່ແລະທ່ຽງທັມແທ້ ແລະຖ້ອຍຄຳຂອງພຣະອົງໃນພຣະທັມ ໂຣມ ບົດ 8 ຂໍ້ 28 ກໍຊ່ອຍໜູນໃຈໃຫ້ຂ້ານ້ອຍຕັ້ງໃຈແນໃສ່ເປົ້າໝາຍໄດ້.

ຂໍສະແດງຄວາມຮັກແພງມາຍັງທຸກໆຄົນໃນຄອບຄົວແລະໃນຄຣິສຕະຈັກດ້ວຍ.

*ຈາກ ພູສອນ ບຸດທິວົງ*



Un auditoire attentif



Les jeunes animent un temps de louange

Les épouses des pasteurs



Responsables de l'Église



**Eglise Lao-Hmong de Paris Noël 2008**

# Paris, Église Lao-Hmong de Sevran

## Les dames organisent leurs propres rencontres

Malgré l'éparpillement des familles de l'église Lao-Hmong de Sevran dans plusieurs départements de la région Parisienne, la responsable du groupe des dames, Mme Vang Mertsai, a mis en place des rencontres de leur groupe en dehors du culte de dimanche matin, pour leur permettre de mieux se connaître et de vivre une vraie communion entre elles.

Une première journée a été organisée le 28 mars 2009 chez M. et Mme Yang Chu à Grigny. Une deuxième rencontre s'est tenue le 6 juin dans la famille Roquancourt Laurent à Nogent-sur-Oise.



Vim cov nam tsev ib leeg nyob ib lub zog rua yog sib ntsib nub pehawm Vaajtswv xwb. Nam Vaaj Yis( tug thawj nam tsev) muaj lub homphaj: tas sib ntsib, sib txhawj zug uake.

Lub 28.03.09, cov nam tsev tau sib sau nyob rua huv tsev neeg Yaaj Ntxoov-tswb Grigny
Lub 06.06.09, cov nam tsev tau sib sau nyob rua huv Tsev neeg Roquancourt Laurent, Nogent-sur Oise

**Nous tenons à remercier :**

- Les deux familles qui ont aimablement accueilli les dames pour leur permettre de se réunir.
- Mertsai, la responsable du groupe.
- Toutes les dames pour leur participation. Car, malgré la distance à parcourir, chacune a consacré un peu de son temps pour se retrouver avec les autres.

**Ua tsaug:**

- Rua ob yim tsev neeg, cov nam tsev txhaj tau sib sau
- Rua Nam VAAJ Yis, tug thawj nam tsev
- Rua cov nam tsev txhua tug tuaj koom, txawm yog kev dleb los tseem siv sijhawm sib sau nyob uake.

Nous sommes reconnaissantes à Dieu d'avoir veillé sur chacune de ces dames et nous voulons également remercier les maris d'avoir permis à leurs épouses de se retrouver entre elles.

De gauche à droite : Sypraseuth May-Yi, Ly Foung Joua, Moua Nou Toua Pay, Yang Chu,Yang Heidi, Roquancourt Laurent,Vang Mertsai,Xiong Ong,Ly My



# L'Inde nous interpelle

## ທັສນະສຶກສາທີ່ປະເທດ ອິນເດັຍ

ເມື່ອວັນທີ 16 ເຖິງ 24 ເດືອນ ເມສາ 09 ທີ່ຜ່ານມານີ້, ຂ້າພະເຈົ້າໄດ້ມີໂອກາດເດີນທາງໄປປະເທດ ອິນເດັຍ ເພື່ອທັສນະສຶກສາຮ່ວມກັນກັບກຸ່ມຂອງຄະນະຄຣິສຕະສາສນາຈານ 18 ທ່ານຈາກປະເທດສວິສເຊີແລັນ ແລະຂ້າພະເຈົ້າຄົນດຽວໄປຈາກຝຣັ່ງເສດ.

### ຄວາມປະທັບໃຈກັບວັທນະທັມອື່ນ

ຄວາມປະທັບໃຈອັນທຳອິດທີ່ເກີດມີຂຶ້ນເມື່ອເຮົາສຳຜັດກັບປະເທດທີ່ບໍ່ຮູ້ຈັກມາກ່ອນຄືຄວາມຕື່ນເຕັ້ນ! ຕື່ນເຕັ້ນທີ່ມີໂອກາດໄດ້ມາພົບເຫັນປະເທດ, ພົລເມືອງ ແລະທຳມະຊາດດ້ວຍຕົນເອງ. ປະເທດອິນເດັຍ ເປັນປະເທດທີ່ໃຫຍ່ທັງມີພົລເມືອງໜາແໜ້ນອີກດ້ວຍ. ປະເທດ ອິນເດັຍຍັງເປັນຖິ່ນກຳເນີດຂອງພຸທສາສນາ ແລະມີສະຖານທີ່ສັກສິດບາງແຫ່ງຂອງຊາວພຸດສຳລັບການສແວງບຸນ. ນອກຈາກນີ້, ຍັງມີໂຮງຮຽນສົງທີ່ມີຊື່ສຽງບ່ອນທີ່ພະພິກຂຸສົງຈາກບັນດາປະເທດທີ່ເຊື່ອຖືພຸທສາສນາມາສຶກສາຮ່ຳຮຽນອີກດ້ວຍ.

ຄົນອິນເດັຍທົ່ວໄປເປັນຜູ້ມີໄມຕຣີຈິດມິດຕະພາບແລະປາກົດວ່າການທັກທາຍກັບຄົນແປກໜ້າເປັນສິ່ງທີ່ພວກເຂົາທຳໄດ້ງ່າຍກວ່າຊາວເອີຣົບ. ຫລືເປັນຍ້ອນວ່າຂ້າພະເຈົ້າເອງກໍເປັນຄົນເຊື້ອຊາດ ອາຊີຜິວເຫລືອງ ຄືກັນກັບພວກເຂົາບໍ ຈຶ່ງສົນທະນາກັນກັບຄົນທຸກເພດ, ທຸກວັຍໄດ້ງ່າຍເຖິງຂນາດນີ້? ຢູ່ເອີຣົບ ຫລືຢູ່ໃນຫລາຍປະເທດອາຊີ, ພວກເຮົາຍັງບໍ່ກ້າຂໍຖ່າຍຮູບຄົນແປກໜ້າໂດຍ



Les gens sont d'un contact facile et vous demandent spontanément de les prendre en photo...

## Voyage d'étude d'un groupe de pasteurs

Du 16 au 24 mars 2009, une délégation de 18 pasteurs de la FREE (Fédération Romande d'Eglises Evangéliques, en Suisse), a fait un voyage d'études et de visite aux centres de formation chrétienne dans le cadre de la mission EMPART. Vanh était le seul participant de France à cette délégation. Il évoque les contrastes incroyables qui caractérisent cet immense pays et la détermination des «bâtisseurs d'Eglises» formés par Empart, malgré la pauvreté et la persécution parfois violente qui sévit dans certaines régions du pays.

### Impressions générales

La première impression lorsqu'on visite un pays pour la première fois, c'est l'excitation! C'est en effet une expérience exaltante que de découvrir et de voir de ses propres yeux un tel pays, de pouvoir côtoyer sa population et admirer la beauté de la nature… L'Inde est un immense pays avec une population très dense (avec 1,1 milliard d'habitants, l'Inde est le deuxième pays le plus peuplé de la planète). C'est encore plus excitant pour moi en tant qu'ancien bouddhiste, car l'Inde est une des sources de la culture de mon pays et le pays d'origine de la religion de mes ancêtres, et l'Inde compte plusieurs lieux sacrés où les bouddhistes de tous les pays asiatiques vont faire des pèlerinages. Aujourd'hui, l'Inde accueille les bonzes bouddhistes du



Recontre avec des pèlerins thaïlandais

monde entier dans sa prestigieuse et renommée Université bouddhiste de New Delhi.

De manière générale, les Indiens sont des gens très ouverts et amicaux. Il est plus facile de parler avec les inconnus en Inde qu'en Europe. Est-ce le fait que j'ai la même couleur de la peau qui me permet d'entrer si facilement en contact avec tous, sans distinction de sexe et d'âge? Le fait est que dans certains pays d'Asie, et plus encore en Europe, on n'ose guère demander à des inconnus l'autorisation de les prendre en photo. En Inde, par contre, ce sont les gens qui vous demandent spontanément de les prendre en photo et de vous faire photographier avec eux !

L'Inde est connu dans le monde entier par la diversité de ses croyances religieuses. Avec sa population si diverse et nombreuse, il existe naturellement une grande diversité de croyances et de religions. Les principales grandes religions mondiale sont représentées : hindouisme, islam, bouddhisme et christianisme etc., mais la majorité des gens croient à l'hindouisme.

Ce qui dépasse la compréhension des occidentaux en Inde, c'est le système des castes. La société indienne fonctionne depuis la nuit des temps avec le système des castes. On en compte quatre : les Brahmanes (prêtres), les Kshatriya (guerriers), les Vaishya (commerçants) et les Shudra (serviteurs), sans compter les hors caste, les «Dalits», appelés aussi «intouchables». Ces derniers se trouvent vraiment en bas de l'échelle sociale, ils sont pauvres, exercent des ouvriers, et beaucoup sont réduits à la mendicité. Même si nous vivons au 21ème siècle, époque du progrès et de la technologie, et même s'il est officiellement aboli depuis 1950,  le système de caste qui fait partie intégrante de la culture, il est considéré normal et ne choque personne en Inde. Chacun semble accepter sa condition de vie comme étant sa destinée propre. Les croyances jouent certainement un rôle déterminent dans cette manière dont les gens acceptent leur condition de vie et leur appartenance à telle ou telle caste sans revendiquer leurs droits par la force ou par la violence comme nous le voyons souvent en Europe, où on manifeste si facilement son mécontentement.

L'année dernière, je m'étais rendu au Vietnam, et en voyant les Vietnamiens conduire de manière apparemment complètement désordonnée sans qu'il se produise beaucoup d'accidents, je pensais que les Vietnamiens sont des champions de la conduite automobile ! En circulant en taxi ou en touk-touk en

ສະເພາະແມ່ນຂອງເພດກົງກັນຂ້າມ, ແຕ່ຢູ່ອິນເດັຍ, ແມ່ນພວກເຂົາເອງມາຂໍໃຫ້ເຮົາຖ່າຍຮູບໃຫ້!

ເມື່ອເວົ້າເຖິງການເຊື່ອຖື, ແລະເນື່ອງຈາກຄວາມຫລາກຫລາຍຂອງປະຊາຊົນ ຈຶ່ງມີຄວາມເຊື່ອຖືທີ່ແຕກຕ່າງກັນເຊັ່ນ: ຮິນດູ, ມຸສລິມ, ພຸທ, ຄຣິສຕຽນ ແລະອື່ນໆ... ຫາກແຕ່ວ່າຄົນສ່ວນມາກກໍມີຄວາມສັດທາໃນສາສນາ ຮິນດູ.

ສິ່ງທີ່ຄົນຊາດອື່ນຍັງເຂົ້າໃຈບໍ່ທັນເຖິງຖອງແມ່ນລະບົບການຈຳແນກຊັ້ນໃນທ່າມກາງປະຊາຊົນ. ຕັ້ງແຕ່ໃດໆມາ, ສັງຄົມຂອງອິນເດັຍຄົງຕົວຢູ່ໄດ້ດ້ວຍຊັ້ນ, ມີທັງໝົດສີ່ຊັ້ນຄື: ກະສັດ, ພາມ, ແພດ ແລະສູດ; ຊັ້ນຕ່ຳກວ່າໝູ່ແມ່ນສູດທີ່ສ່ວນມາກຈະເປັນຄົນຍາກຈົນທຳມາຫາກິນດ້ວຍການເປັນຂ້າທາດ, ເປັນກັມມະກອນຊັ້ນຕ່ຳ ແລະເປັນຄົນຂໍທານ. ເຖິງແມ່ນວ່າພວກເຮົາຫາກອາສັຍຢູ່ໃນສັດຕະວັດທີ 21 ຊຶ່ງເປັນສັດຕະວັດຂອງຄວາມຈະເຣີນກ້າວໜ້າແລ້ວກໍຕາມ, ແຕ່ລະບົບການແບ່ງຊັ້ນວັນນະຢູ່ ອິນເດັຍ ນີ້ປາກົດວ່າເປັນຂອງທຳມະດາ ແລະຄືກັນກັບວ່າໃຜໆກໍຍອມຮັບວ່າມັນເປັນຕາມບຸນຕາມກັມ (ບຸເພສັນນິວາດ) ທີ່ຕົນໄດ້ເກີດໃນຊັ້ນນັ້ນໆ... ສາສນາຄວາມເຊື່ອຖືອາດຈະເປັນປະເດັນສຳຄັນເພື່ອຊ່ອຍໃຫ້ຄົນຍອມຮັບສະພາບແລະຖານະຂອງຕົນເອງໂດຍບໍ່ຢາກທັກທ້ວງສິດທິດ້ວຍປະຕິກິຣິຍາອັນຮຸນແຮງ ດັ່ງທີ່ພວກເຮົາເຄີຍເຫັນຊາວຕາວັນຕົກພາກັນເຮັດຢູ່ເປັນປະຈຳເມື່ອພວກເຂົາບໍ່ພໍໃຈແລະບໍ່ຍອມຮັບສະພາບທີ່ເຂົາກຳລັງປະສົບຢູ່.

ປີກ່ອນ, ພວກຂ້າພະເຈົ້າໄດ້ໄປທ່ຽວຢູ່ປະເທດ ຫວຽດນາມ ແລະພົບເຫັນການສັນຈອນໄປມາຢ່າງໄຮ້ລະບົບລະບຽບ ແລະຄິດໃນໃຈວ່າຄົນຫວຽດນາມເປັນຄົນທີ່ຂັບຍວດຍານພາຫານະໂດຍບໍ່ນັບຖືກົດຈາຣະຈອນທີ່ຊ່ຽວຊານກວ່າປະເທດອື່ນ. ແຕ່ຖ້າປຽບໃສ່ຄົນຂັບຣົດຢູ່ ອິນເດັຍແລ້ວ, ຊາວອິນເດັຍ ຄົງຈະຊຳນານກວ່າກ່ຽວກັບເຣື່ອງການບໍ່ນັບຖືກົດຈາຣະຈອນເພາະເຖິງແມ່ນການສັນຈອນຈະໜາແໜ້ນ, ນັກຂັບຂີ່ບໍ່ພຽງແຕ່ແລ່ນໄວເທົ່ານັ້ນ ແຕ່ເຂົາຍັງມີວິທີຕັດໜ້າແລະແຊງຣົດຄັນອື່ນຂຶ້ນໄປແບບຫວາດສຽວໜ້າຢ້ານແຕ່ບໍ່ມີອຸປະຕິເຫດ ແລະວິທີຂັບຍານພາຫານະແບບນີ້ຍັງຫລີກເວັ້ນຈາກການມີຣົດຕິດອີກດ້ວຍ!

## ຄວາມທຸກຍາກຂອງພົລເມືອງສ່ວນນຶ່ງ

ເຖິງແມ່ນວ່າປັດຈຸບັນນີ້, ປະເທດອິນເດັຍ ເປັນປະເທດ "ແຫ່ງການຮື້ຟື້ນ" ທາງເສຖກິດປະເທດນຶ່ງທີ່ອາດຈະກ້າວໜ້າໄປກວ່າຫລາຍໆປະເທດທາງຕາວັນຕົກກໍຕາມ, ແຕ່ຄວາມທຸກຍາກຢ່າງສຸດແສນຂອງປະຊາຊົນສ່ວນນຶ່ງກໍເຫັນໄດ້ກັບຫູກັບຕາ. ພຽງແຕ່ສັງເກດເບິ່ງກະທ່ອມ, ເບິ່ງຄອບຄົວທີ່ມີລູກຫລາຍໆ, ເບິ່ງການນຸ່ງຖືຂອງພວກເຂົາເທົ່ານັ້ນ ກໍພໍເດົາອອກໄດ້ແລ້ວວ່າພວກເຂົາເປັນຄົນຊັ້ນໃດ. ບໍ່ວ່າຈະເປັນກາງເວັນ ຫລືກາງຄືນ, ການທີ່ເຫັນຜູ້ຄົນໂດຍສານນອນຢູ່ຕາມຄິວຣົດ ຫລືຕາມສະຖານີຣົດໄຟນັ້ນ ມັນເປັນພາບທີ່ລຶ້ງຫູລຶ້ງຕາແລ້ວ. ຕາມໜ້າຮ້ານຄ້າ ແລະຕາມແຄມຖນົນຫົນທາງ, ຄົນທຸກຍາກພາກັນນອນເດັຍຣະດາດກັນຢູ່ຄືກັນກັບບໍ່ມີຄວາມວິຕົກກັງວົນຫຍັງເລີຍ...ການທີ່ນັກທ່ອງທ່ຽວຖືກລົບກວນລັງແຄຈາກພວກຄົນຂໍທານກໍເປັນຂອງທຳມະດາ ແລະຄົນທີ່ມີນ້ຳໃຈຢາກຊ່ອຍເຫລືອຄົນຍາກຈົນ ກໍສາມາດກາຍມາເປັນຄົນໃຈແຂງໄດ້ໃນຊົ່ວຂະນະດຽວໄດ້ໃນເມື່ອຖືກຫຸ້ມລ້ອມດ້ວຍພວກຄົນຂໍທານ ແລະບໍ່ສາມາດຊ່ອຍເຫລືອໝົດທຸກຄົນໄດ້!

ສິ່ງນຶ່ງອີກທີ່ເປັນພາບພົດຕິດຕາຕິດໃຈຂອງຂ້າພະເຈົ້າມາຕລອດຄືຄວາມເປິເປື້ອນຂອງຖນົນຫົນທາງແລະຂອງສະຖານທີ່ສາທາຣະນະຊົນ. ບໍ່ວ່າຈະເປັນຕລາດ, ຄິວຣົດ, ສະຖານີຣົດໄຟ, ຂອບຖນົນ, ກຳແພງບ້ານເຮືອນໃນຕົວກາງເມືອງ ແລະທຸກສະຖານ



Un temple bahaï à New Dehli

Inde, je me suis dit que les Indiens sont encore plus doués que les Vietnamiens. Des véhicules de types variés slaloment pour dépasser la file ou doubler les véhicules qui se trouvant devant eux ou à côté avec une rapidité et une agilité à vous couper le souffle ! Très peu de conducteurs respectent réellement le codes de la route, et chose étonnante, il ne se produit pas beaucoup d'accidents, et la circulation est étonnamment plus fluide que dans les pays où l'on respecte rigoureusement les limitations de vitesse et le codes de la route !

## La pauvreté criante d'une partie de la population

Dire que l'Inde est un pays pauvre, c'est d'aller un vite en besogne et c'est une généralisation abusive! Une bonne partie de la population vit en effet très bien, avec un standard de vis au même niveau qu'en Europe. L'Inde est un «pays émergent» sur le plan économique, et dépasse même bien des pays européens, mais la pauvreté absolue d'une partie de sa population frappe l'œil. Il suffit pour les touristes de regarder les maisons, les nombreux enfants, les modes d'habillement de cette catégorie pauvre de la population pour savoir à quelle caste ils appartiennent. Jour et nuit, des gens dorment partout où ils peuvent, dans les gares comme aux stations d'autobus… les mendiants nous harcèlent sans relâche. Devant cette extrême pauvreté extrême et face à ce harcèlement de la mendicité, même ceux qui ont le cœur sensible deviennent vite incrédules et insensible, car il serait impossible d'aider tout le monde.

Une autre image de l'Inde qui m'a frappé, c'est la saleté des rues et des places publiques. Nous avons

ທີ່ໆມີບ່ອນລັບບັງເລັກນ້ອຍກໍກາຍມາເປັນບ່ອນຖ່າຍເບົາຂອງທຸກຄົນອັນສົ່ງກິ່ນເໝັນສະເອືອນ ຊານຊາຖ້າຝົນຮ່າໃຫຍ່ຕົກລົງມາລ້າງເອງ!

## ການຂົ່ມເຫັງແລະຄວາມກ້າວໜ້າຂອງຄຣິສຕຽນ

ຢູ່ໃນບາງເຂດຂອງປະເທດອິນເດັຍ, ພວກຖືສາສນາຄຣິສຕຽນຊຶ່ງມີຈຳນວນສ່ວນນ້ອຍກໍຖືກການຂົ່ມເຫັງຈາກຊາວ ຮິນດູ. ອາຄານໂບດກໍຖືກມ້າງເພ ຫລືຈູດເຜົາ ແລະຜູ້ນຳຫລາຍໆຄົນກໍຖືກລອບສັງຫານຫລືຖືກຕິດຄຸກຕິດຕະລາງ. ສະພາບການແບບນີ້ ກໍຄ້າຍໆກັນກັບຊາວຄຣິສຕຽນຢູ່ປະເທດລາວເມື່ອສອງສາມປີທີ່ຜ່ານມາທີ່ບາງຄົນຖືກຈັບ ແລະຫລາຍຄົນກໍຖືກນາບຂູ່ໃຫ້ເຊັນໜັງສືລາອອກຈາກຄວາມເຊື່ອໃນສາສນາຕ່າງປະເທດ ແລະຫລາຍໆຄອບຄົວກໍຖືກເນຣະເທດອອກຈາກບ້ານເກີດຂອງພວກເຂົາ. ໃນແຂວງນຶ່ງທາງທິດຕາເວັນຕົກຂອງປະເທດອິນເດັຍ, ສີ່ເດືອນກ່ອນທີ່ກຸ່ມຂອງຂ້າພະເຈົ້າໄປເຖິງ, ມີຄຣິສຕຽນ 40 ຄົນໄດ້ຖືກລອບສັງຫານຈາກກຸ່ມຂວາຈັດຊາວ ຮິນດູ ຈິນວ່າພວກເຮົາຕ້ອງລັກລີ້ເຂົ້າໄປພົບນັກສຶກສາໃນສູນຝຶກອົບຮົມເພື່ອນະມັສການຮ່ວມກັນກັບພວກເຂົາ. ກ່ອນຈະຮ້ອງເພງ, ກໍຕ້ອງໄດ້ປິດໜ້າຕ່າງຢ່າງແຈບຈິ່ມ ແລະປິດຜ້າກັ້ງໄວ້ເພື່ອບໍ່ໃຫ້ຄົນຮິນດູ ທີ່ຢູ່ໃກ້ຄຽງຮູ້ວ່າມີແຂກຕ່າງປະເທດໄປພົວພັນກັບພວກເຂົາ. ຢູ່ແຂວງນຶ່ງທາງພາກເໜືອຂອງປະເທດອິນເດັຍ, ການຂົ່ມເຫັງຄົນຄຣິສຕຽນຍິ່ງຮ້າຍແຮງກວ່າໃນບ່ອນອື່ນໆເພາະຄຣິສຕຽນຫລາຍໆສິບຄົນເສັຍຊີວິດດ້ວຍການລອບສັຫງຫານ ແລະໂບດຫລາຍໆສິບບ່ອນຖືດຈູດເຜົາ. ແຕ່ເຖິງປານນັ້ນ, ພວກຄຣິສຕຽນກໍຍັງສືບຕໍ່ງານການຂອງພຣະເຈົ້າດ້ວຍການ

Rencontre avec des responsables d'Églises



l'impression que les autorités n'accordent guère d'importance à la propreté du marché, des stations de bus, des gares, ou des trottoirs… Les murs d'immeubles au centre ville ou tous les endroits un peu cachés servent d'urinoir public… avec des odeurs pestilentielles qui n'attendent que la pluie du ciel pour les évacuer !

## Des persécutions intenses dans certaines régions

Dans certaines régions de l'Inde (notamment dans la province d'Orissa) les chrétiens, minoritaires, subissent d'intenses persécutions de la part de certains groupes hindouistes. Dans ces régions, de nombreux bâtiments d'église ont été détruits ou incendiés et beaucoup de responsables d'Églises ont été arrêtés et emprisonnés. Cette situation est un peu semblable à ce qui s'est passé au Laos il y a quelques années, où les chrétiens ont été arrêtés et ont reçu des menaces d'intimidation pour signer des papiers de renoncement à la foi dans une religion étrangère, et où certaines familles ont été expulsées de leur village. Dans une province à l'ouest de l'Inde, il y a de cela quatre ans, une cinquantaine de chrétiens ont été tués par des activistes hindous.

## Le zèle des bâtisseurs d'Églises indiens nous interpelle

En raison de ces persécutions, nous avons pris beaucoup de précautions pour ne pas être vus des voisins avant d'aller voir les étudiants dans leur centre de formation. Dans les moments de louange, nous avons soigneusement fermé les volets de toutes les fenêtres, et pour entrer et sortir de la maison, nous devons déchausser à l'intérieur. Dans une autre province située dans le nord, la persécution des chrétiens est plus violente qu'ailleurs, car on continue à assassiner les chrétiens et plusieurs bâtiments d'églises ont été incendiés. Mais malgré tout, les chrétiens continuent à témoigner et à annon-

ປະກາດຂ່າວປະເສີດ ແລະສນັບສນູນເລື້ອງສວັດດີການສັງຄົມໂດຍການສ້າງຕັ້ງສູນຝຶກວິຊາອາຊີບ ໃຫ້ພວກຜູ້ຍິງແລະຕ້ອນຮັບເດັກກຳພ້າ...ການກະທຳດັ່ງກ່າວນີ້ໄດ້ກາຍມາເປັນພະຍານໃນຕົວແລະໄດ້ນຳພາໃຫ້ຊາວຮິນດູຫລາຍໆຄົນຫັນມາຫາພຣະເຈົ້າ.

ດ້ານສວັດດີການສັງຄົມທີ່ກ່າວມານີ້ກໍເປັນພຽງແຕ່ພາກສ່ວນນຶ່ງເທົ່ານັ້ນຂອງການນຳວິນຍານ ແຕ່ພາກສ່ວນສຳຄັນແມ່ນການປ່າວປະກາດຂ່າວດີດ້ວຍຊາວຄຣິສຕຽນເອງ. ສະນັ້ນ, ອົງການແອັມປາກຕ໌ ຊຶ່ງມີສຳນັກງານຢູ່ ອອສຕຣາລີ, ຢູ່ສວິສເຊີແລັນ, ການາດາ, ອະເມຣິກາ ໄດ້ສ້າງຕັ້ງໃຫ້ມີສູນຝຶກອົບຮົມພວກຜູ້ປະກາດ 13 ແຫ່ງໃນທົ່ວປະເທດອິນເດັຍ. ພວກທີ່ມາຮັບການຝຶກອົບຮົມນີ້ ເປັນຄົນທຳມະດາສາມັນທີ່ໄດ້ຍອມເຊື່ອໃນພຣະຄຣິດແລະໄດ້ອຸທິດເວລາແລະຄອບຄົວຂອງພວກເຂົາມາຮັບການອົບຮົມສິບເດືອນ. ຫລັງຈາກນັ້ນແລ້ວ, ພວກເຂົາຕ້ອງກັບຄືນໄປໃນບ້ານເດີມຂອງພວກເຂົາແລະປະກາດຂ່າວປະເສີດເພື່ອໃຫ້ເກີດມີຄຣິຕະຈັກ. ເຖິງປີ 2030, ອົງການດັ່ງກ່າວຕັ້ງເປົ້າໝາຍໄວ້ວ່າຕ້ອງຕັ້ງຄຣິສຕະຈັກໃຫ້ໄດ້ຮ້ອຍພັນ (ແສນ) ໜ່ວຍຢູ່ປະເທດອິນເດັຍ ! ເປັນການທ້າທາຍທີ່ອາດທະນົງຕົວກໍເປັນໄດ້ ຫາກແຕ່ວ່າເປັນແຮງຈູງໃຈສຳລັບຜູ້ສ້າງຕັ້ງຄຣິສຕະຈັກຄຣິສຕະຈັກ. ຄວາມຮ້ອນຮົນແລະຄວາມກະຕືລືລົ້ນຂອງບັນດາຊາຍໜຸ່ມ ຫລືຜູ້ເປັນຫົວໜ້າຄອບຄົວເລົ່ານີ້ ບໍພຽງແຕ່ເປັນພຣະພອນແລະກຳລັງໃຈສຳລັບພວກຄະນະສາສນາຈານທີ່ຮ່ວມເດີນທາງໄປນຳກັນເທົ່ານັ້ນ ແຕ່ສະພາບແຫ່ງຄວາມເຊື່ອຖືຂອງພວກເຂົາຍັງນຳໃຫ້ພວກເຮົາພາກັນຊັກຖາມຕົວເອງ ແລະວັດແທກຄວາມສະດວກສະບາຍແລະຄວາມເພີດເພີນຂອງພວກເຮົາຢູ່ທາງຕາວັນຕົກກັບຄວາມຍາກຈົນຂາດເຂີນຂອງພວກເຂົາອີກດ້ວຍ.



Centre de formation à Vadodara

cer l'Évangile. Ils pratiquent des œuvres sociales en ouvrant des ateliers de couture pour les femmes et en favorisant l'accueil des orphelins dans les familles des chrétiens. Par tous ces efforts, les chrétiens amènent beaucoup d'hindous à découvrir la foi en Dieu.

Cette œuvre sociale n'est qu'une petite partie de ce qui permet aux gens de connaître Dieu. Les chrétiens indiens accordent beaucoup d'importance au témoignage verbal. C'est pourquoi, la mission EMPART, qui a des antennes dans plusieurs pays, notamment en Australie, en Suisse, aux Etats-Unis et au Canada, possède aujourd'hui 13 centres de formation dans toute l'Inde. Les jeunes qui viennent se former sont des gens simples qui croient en Christ et qui consacrent 10 mois pour suivre une formation, après quoi ils retournent dans leurs villages pour être à leur tour des «bâtisseurs d'Église». Cette mission s'est fixé comme objectif de bâtir 100 000 églises en Inde et au Pakistan d'ici à 2030. C'est un objectif très ambitieux certes, mais ce but constitue en même temps un défi et une grande motivation pour tous ces bâtisseurs. Leur zèle pour le service et la ferveur de leur foi représentent non seulement un encouragement et une grande bénédiction pour notre délégation, mais ils nous interpellent personnellement sur notre manière de vivre notre foi dans le luxe et la facilité de l'occident, quand nous voyons leur ardeur à témoigner de leur foi dans la situation de pauvreté qui est la leur et les difficultés auxquelles ils sont confrontés dans leur pays.

## ການຢ້ຽມຢາມພາກໃຕ້

ຂ້າພະເຈົ້າເອງກໍຈຳໄດ້ຍາກວ່າເປັນຄັ້ງທີເທົ່າໃດແລ້ວທີ່ຂ້າພະເຈົ້າໄດ້ກັບໄປປະເທດລາວ. ທີ່ຈິງກໍໄດ້ກັບໄປຢາມທຸກໆປີ ແລະທຸກເທື່ອທີ່ໄປເຖິງກໍຮູ້ສຶກຕື່ນຕາຕື່ນໃຈກັບສິ່ງໃໝ່ໆທີ່ໄດ້ພົບເຫັນ, ກັບຜູ້ຄົນທີ່ໄດ້ພົບພໍ້, ກັບຄວາມອົບອຸ່ນຂອງຄົນໃນຄອບຄົວແລະຂອງເພື່ອນໆ... ຊ່າງເປັນຄວາມຮູ້ສຶກອັນປາບປື້ມທີ່ອະທິບາຍໄດ້ຍາກແທ້ທຸກເທື່ອທີ່ໄດ້ສຳຜັດດ້ວຍຕີນເອງກັບແຜ່ນດິນຊຶ່ງເປັນບ່ອນຝັງສາຍແຫ່ແຜ່ສາຍບື!

ສິ່ງໃໝ່ໆຂອງການພັທນາ...

ດັ່ງທີ່ທຸກຄົນຊາບແລ້ວວ່າໃນທ້າຍປີ 2009 ນີ້, ປະເທດລາວຈະເປັນເຈົ້າພາບເພື່ອຈັດການແຂ່ງຂັນມະຫາກິລາຄັ້ງທີ 25 ໃນເຂດພາກພື້ນອາຊີ. ການກະກຽມໄດ້ລົງມືມາໄດ້ຫລາຍປີແລ້ວ ເຊັ່ນການສ້າງສນາມກິລາ, ສະຖານທີ່ຕ້ອນຮັບພັກເຊົານັກກິລາແລະແຂກຕ່າງປະເທດ, ການຂຍາຍຖນົນຫົນທາງ, ການຝຶກແອບນັກກິລາຣະດັບຊາດ ແລະການຈັດອົບຮົມປະຊາຊົນຕລອດທັງແມ່ຄ້າຊາວຂາຍໃນນະຄອນວຽງຈັນເພື່ອໃຫ້ມີມາຣະຍາດອັນດີກັບແຂກຕ່າງປະເທດທີ່ຈະມາຮ່ວມໃນງານມະຫາກັມກິລາດັ່ງກ່າວນີ້.

ເວົ້າເຣື້ອງການສ້າງສາ, ສນາມກິລາອັນໃຫຍ່ໂຕມະໂຫຣານ ພ້ອມດ້ວຍຕຶກອາຄານພັກເຊົາຂອງນັກກິລາພ້ອມຄະນະ ກໍໄດ້ສ້າງສຳເຣັດເສັດສິ້ນລົງແລ້ວຢູ່ຄຸ້ມ ດອນໜູນ ຕັ້ງແຕ່ທ້າຍເດືອນ ມີນາ 09. . ຖນົນຈາກວຽງຈັນ ລົງໄປຫາສນາມກິລາໃໝ່ກໍໄດ້ຖືກບຸກເບີກແລະຂຍາຍໃຫ້ເປັນທາງຫລວງສີ່ສາຍ ເພື່ອຄວາມສະດວກໃນການສັນຈອນໄປມາ. ທັງໝົດນີ້ລັດຖະບານໄດ້ປ່ອຍມືໃຫ້ບໍຣິສັດໃຫຍ່ໆຂອງຈີນເປັນຜູ້ສ້າງ ໂດຍການຍົກທີ່ດິນໃນເຂດບຶງ

## Un voyage dans le sud

Je commence à avoir des difficultés à me rappeler précisément combien de voyages j'ai effectué au Laos! Depuis quelques années, j'ai en effet le privilège d'y retourner une ou parfois deux fois par année. A chaque voyage, je suis émerveillé de découvrir de nouvelles infrastructures, de rencontrer toutes sortes de gens et de bénéficier de l'accueil très chaleureux de ma famille et de mes amis, ainsi que les frères et sœurs qui partagent les mêmes convictions que moi. Je ne sais trop comment décrire ce mélange de joie et d'émotion que je ressens chaque fois que je pose les pieds sur ma terre natale.

**Signes de développement…**

Comme beaucoup le savent déjà, le Laos accueillera en la 25ème édition des Jeux Olympiques du Sud-Est asiatique (*SEA Games*), qui auront lieu du 9-18 décembre 2009 à Vientiane. Les travaux de préparation ont débuté depuis plusieurs années : construction d'un grand stade et logements pour accueillir les sportifs, agrandissement des routes, entraînement des sportifs nationaux et sensibilisation de la population et des commerçants de la capitale sur la politesse et sur le comportement à tenir pour accueillir les étrangers qui participeront à ce grand événement historique.

Les travaux de construction du grand stade, avec ses équipements modernes, y compris les logements pour les sportifs, à *Done Noune*, se sont terminés à la fin mars. La route reliant la capitale à cette commune a été élargie à quatre voies pour faciliter la circulation. Tous ces travaux de construction et d'infrastructure ont été confiés à des sociétés chinoises, et en contre-partie, le gouvernement laotien a accordé à la Chine, sous forme de location à longue durée, un terrain de plusieurs dizaines d'hectares dans les environs de l'étang de That Luang à Vientiane pour l'implantation de la communauté chinoise, une sorte de *China Town* au Laos.




Le nouveau stade accueillera les 25e jeux olympiques d'Asie du Sud-Est (*SEA Games*)



ທາດຫລວງໃຫ້ເປັນເຂດພັທນາຂອງຊຸມຊົນຊາວຈີນໂດຍມີເວລາກຳນົດເພື່ອເປັນການແລກປ່ຽນແລະເພື່ອເປັນການສົມມະນາຄຸນ.

ນອກຈາກການພັທນາກ່ຽວກັບມະຫາກັມກິລາຄັ້ງນີ້ແລ້ວ, ຍັງມີແນວໃໝ່ອີກທີ່ກຳລັງເກີດຂຶ້ນຢູ່ໃນສາຍທາງເລກທີ 13 ຄືລະຫວ່າງ ວຽງຈັນ ກັບ ປາກຊັນ. ຢູ່ຫລັກທີ 21, ການສ້າງສຸສານສຳລັບວິຣະຊົນ ຜູ້ທີ່ໄດ້ສະລະຊີວິດແລະເລືອດເນື້ອເພື່ອຍາດແຍ່ງເອົາເອກກະຣາດ ກຳລັງດຳເນີນໄປຢູ່. ການສັງເກດເບິ່ງຮົ້ວອ້ອມທີ່ຍາວຢຽດຫລາຍໆຮ້ອຍແມັດແຄມທາງຖນົນ ແລະເຮັດດ້ວຍຕາໜ່າງເຫລັກ ແລະເຄືອບສີຄຳທັງໝົດຂອງສຸສານໃໝ່ນີ້ ກໍມີສີສວຍງົດງາມແລະທຳໃຫ້ຜູ້ຄົນເຂົ້າໃຈແລ້ວວ່າປະເທດລາວກໍບໍ່ນ້ອຍໜ້າປະເທດອື່ນເລີຍໃນການຈາຣຶກເຖິງນັກຣົບຜູ້ອົງອາດກ້າຫານທີ່ໄດ້ເສັຍຊີວິດໄປແລ້ວ. ຖ້າແມ່ນວ່າໃນບາງປະເທດມີພຽງແຕ່ເສົາສີລາລຶກທີ່ມີຊື່ຂອງວິຣະຊົນຊຽນໄວ້ເທົ່ານັ້ນເພື່ອຄວາມຊົງຈຳ, ປະເທດລາວກໍສາມາດສະແດງຄວາມກະຕັນຍູຂອງຊາດອອກຕໍ່ວິຣະຊົນຂອງຕົນໄດ້ດ້ວຍສິ່ງມະຫຶມະເຊັ່ນກັນ ແລະດ້ວຍວິທີດັ່ງກ່າວນີ້ບໍ່ພຽງແຕ່ເປັນການອ້າງເຖິງຄວາມສາມາດຂອງພັກລັດເທົ່ານັ້ນ ແຕ່ຍັງເປັນການທ້າທາຍໃຫ້ຄົນລຸ້ນຫລັງຮັບຮູ້ແລະຈົດຈຳຄຸນຄ່າຂອງປວັດສາດໄວ້ອີກດ້ວຍ.

ທ່າແຂກ:

ການສ້າງຂົວຂ້າມແມ່ນ້ຳຂອງແຫລ່ງທີສີ່ລະຫວ່າງລາວກັບໄທໄດ້ເລີ້ມລົງມືແລ້ວຢູ່ທ່າແຂກຂ້າມໃສ່ນະຄອນພະນົມ. ເມື່ອການສ້າງຂົວແຫ່ງນີ້ສຳເລັດເສັດສິ້ນລົງແລ້ວ, ການຄົມມະນາຄົມຂອງຄົນ ແລະຂອງສິນຄ້າຈາກປະເທດໄທໄປຫາວຽດນາມກໍຈະສະດວກ ແລະປຢັດເວລາໄດ້ຫລາຍຂຶ້ນອີກດ້ວຍ.

ທ່າແຂກເປັນແຂວງນຶ່ງທີ່ມີການສັມປະທານທີ່ດິນສຳລັບການປູກຢາງພະລາຫລາຍກວ່າແລະກ່ອນແຂວງອື່ນໆໃນປະເທດລາວ. ການເກັບກ່ຽວຜົນແຮກຂອງຢາງພະລາກໍປາກົດວ່າໄດ້ເກີນຄວາມຄາດໝາຍ ຫາກແຕ່ວ່ານັບຕັ້ງແຕ່ເກີດມີວິກິດຂອງໂລກ, ພໍ່ຄ້າໄທກໍບໍ່ຢາກຮັບຊື້ ແລະຖ້າຊື້ກໍໃຫ້ຣາຄາຕ່ຳ... ຈົນເຈົ້າຂອງສວນບໍ່ມີກຳລັງໃຈຢາກຈະໄປຂີດແລະເກັບຢາງ. ຫວັງວ່າສະພາບດັ່ງກ່າວນີ້ຈະບໍ່ຍືດເຍື້ອຍາວນານອອກໄປກວ່ານີ້ເພາະຖ້າຍັງດຳເນີນໄປແບບປັດຈຸບັນນີ້, ການຢູ່ກິນຂອງປະຊາຊົນອາດຈະຝືດເຄືອງເພາະສຳລັບປະຊາຊົນຫລາຍໆຄອບຄົວໃນແຂວງນີ້, ລາຍໄດ້ຫລັກກໍຄືການຂາຍຢາງ. ພວກເຂົາໄດ້ສະລະລະຖິ້ມການປູກຝັງຢ່າງອື່ນແລ້ວທຸ້ມເທເນື້ອທີ່ທັງໝົດສຳລັບການປູກຢາງພະລາຢ່າງດຽວ.

ສວັນນະເຂດ:

ແນວໃໝ່ຂອງການພັທນາຢູ່ໃນຕົວເມືອງສວັນນະເຂດກໍຄືການເປີດ ກາຊີໂນ ສວັນ ເວກັສ. ເປັນສະຖານທີ່ຂອງການພະນັນທີ່ໃຫຍ່ແລະສວຍງາມຢູ່ທາງພາກໃຕ້ຂອງປະເທດລາວ. ນັກຫລິ້ນສ່ວນມາກກໍຈະເປັນຄົນໄທ ແລະຄົນຈີນ; ສ່ວນຄົນລາວນັ້ນພຽງແຕ່ເປັນພະນັກງານຕ້ອນຮັບ, ພະນັກງານປະຈຳໂຕະການພະນັນ, ປະຈຳໂຮງແຮມ ແລະຮ້ານອາຫານ ເພາະໃນ ກາຊີໂນ ທຸກສິ່ງກໍມີຕຽມພ້ອມແລ້ວເພື່ອໄວ້ບໍຣິການນັກຫລິ້ນການພະນັນທັງຫລາຍ... ຣົດຕູ້ພິເສດຂອງ ກາຊີໂນ ແລ່ນໄປມາເປັນປະຈຳເພື່ອທ່ຽວຮັບ ແລະສົ່ງນັກພະນັນມາຈາກ

En plus de cette imposante construction du nouveau stade et de l'ensemble des équipements sportifs, un nouveau chef d'œuvre architectural émerge au kilomètre 21 sur la route numéro 13 entre Vientiane et Paksane : le nouveau cimetière pour les héros de la guerre dont la construction a commencé cette année. Rien qu'à voir la belle et longue clôture en fer massif soudé et plaqué or, on comprend déjà la volonté du parti et du gouvernement d'honorer et de commémorer les combattants morts pour la nation. Dans beaucoup d'autres pays en Europe, on inscrit les noms des soldats morts pour la nation sur de simples stèles ou des monuments en ciment ou en pierre. Le Laos, par cette réalisation grandiose en taille et en beauté, veut montrer lui aussi sa capacité et surtout son souci de perpétuer la mémoire de ses combattants. Ces œuvres monumentales constituent également un défi à la nouvelle génération de se rappeler et de reconnaître la valeur de l'histoire de leur pays.

**Tha Khèk…**

La construction du quatrième pont sur le Mékong vient de commencer entre Nakhorn Phanom en Thaïlande et Thakhèk au Laos. Ce nouveau pont facilitera la circulation des personnes et des marchandises entre la Thaïlande et le Vietnam, en reliant le port de Vinh par la route n° 8. Ce pont permettra également d'économiser du temps et de raccourcir considérablement la distance entre ces deux pays.

Thakhèk est une province pilote pour la plantation d'hévéa et la surface cultivée de cette nouvelle plantation est plus vaste que dans d'autres provinces. La première récolte de caoutchouc était prometteuse, mais avec la crise mondiale, la vente aux seuls commerçants Thaï est en baisse, et quand ils achètent, c'est à un prix très bas. Cette situation décourage beaucoup les propriétaires privés. Nous espérons que cette situation de crise ne durera pas trop longtemps, sinon une bonne partie de la population de cette province, dont le revenu principal provient de la vente de caoutchouc, en subira des conséquences désastreuses, car ils ont abandonné les autres cultures pour consacrer toute la surface cultivable à la plantation d'hévéa.

**Savannakhet**

Ce qui est nouveau à Savannakhet c'est l'ouverture du grand Casino « **Savanh Végas** ». Ce haut-lieu des jeux d'argent est le plus grand et le plus luxueux dans le sud du pays. Les joueurs sont principalement des Thaïlandais et des Chinois ; de nombreux Laotiens y travaillent comme employés ou agents d'entretien et de sécurité. On trouve dans l'enceinte du casino des hôtels, des restaurants, une piste de danse et tout le confort pour répondre aux attentes et aux exigences de ce genre de clientèle. Des minibus spécialement conçus en VIP font des navettes incessantes pour aller chercher ou ramener les joueurs arrivant de Mukdaharn, de l'autre côté du Mékong. L'aéroport de Savannakhet est en travaux d'agrandissement et sera loué aux compagnies thaïlandaises pour l'exploitation.

ມຸກດາຫານ ປະເທດໄທ. ສນາມບິນສວັນນະເຂດກຳລັງຖືກບຸກເບີກ ແລະ ຂຍາຍໃຫ້ກວ້າງຂວາງ ເພື່ອອະນຸຍາດໃຫ້ຍົນຂນາດກາງສາມາດລົງໄດ້. ທີ່ຈິງແລ້ວ, ແມ່ນບໍຣິສັດການບິນໄທເປັນຜູ້ເຊົ່າສນາມບິນດັ່ງກ່າວ ແລະສນາມບິນສວັນນະເຂດ ຈະເປັນສນາມບິນເມືອງ ມຸກດາຫານ ຂອງໄທ.

ການສ້າງເມືອງໃໝ່ຢູ່ໃກ້ໆຂົວຂ້າມທາງຝັ່ງລາວ ທີ່ມີຊື່ວ່າ ສວັນຊິທີ ກໍກຳລັງຈະລົງມືສ້າງແລ້ວ. ໂຮງງານໃຫຍ່ຂອງໄທ ແລະຂອງຈີນ ຫລາຍໆໂຮງງານກຳລັງລົງມືສ້າງຢູ່ລະຫວ່າງຫລັກ 7 ເປັນຕົ້ນໄປຕາມສາຍທາງອອກຈາກສວັນໄປເມືອງ ເຊໂນ. ຢູ່ເໜືອຫລັກສາມສິບຫ້າ (ທາງແບ່ງໄປ ແກ້ງກອກ) ຂຶ້ນມາທາງເຊໂນ, ບໍຣິສັດໄທ ໄດ້ລົງທຶນປູກອ້ອຍຫລາຍໆພັນເຮັກຕາເພື່ອສົ່ງເຂົ້າໂຮງງານນ້ຳຕານຂອງໄທເອງທີ່ສ້າງຂຶ້ນຢູ່ໃກ້ໆ ເຊໂນ ຕາມສາຍທາງເລກທີ 9.

ປາກເຊ

ການຂຍາຍຕົວຂອງເມືອງປາກເຊກໍດຳເນີນໄປຢ່າງວ່ອງໄວເຊ່ນກັນ. ສິ່ງໃໝ່ທີ່ສັງເກດເຫັນໄດ້ກໍຄືການຂຍາຍເສັ້ນທາງໃໝ່ຈາກຕລາດດາວເຮືອງຕັດອອກໄປໃສ່ຫລັກ 9 ທາງເລກທີ 13 ແລະທາງຂຶ້ນປາກຊ່ອງ. ເປັນທາງຫລວງສີ່ສາຍ; ທາງຂຶ້ນສອງແລະທາງລ່ອງສອງ ຂັ້ນດ້ວຍກຳແພງຊີມັງທາງກາງ.

ນອກຈາກນີ້ແລ້ວ, ເມືອງປາກເຊກຳລັງຂຍາຍການສ້າງໂຮງແຮມຫ້າດາວຢູ່ທາງສອງສົ້ນຂອງຂົວ. ໂຮງແຮມຫ້າດາວຂອງບໍຣິສັດຕັງຈະເຣີນ ຕັ້ງຢູ່ສົ້ນຂົວເບື້ອງຕລາດດາວເຮືອງໄດ້ເປີດບໍຣິການແລ້ວ. ເວລານີ້ບໍຣິສັດດັ່ງກ່າວກຳລັງສ້າງໂຮງແຮມຫ້າດາວຫລັງທີສອງຢູ່ຟາກນ້ຳຂອງອີກເບື້ອງນຶ່ງຊຶ່ງຕິດກັບຕີນພູແຊ່ເຫລົ້າ.

ສົງຄາມຂີ້ງົວ...

ຢູ່ຕາມຊົນນະບົດ, ການຜິດຖຽງກັນລະຫວ່າງເຈົ້າຂອງນາ ກັບຊາວບ້ານທີ່ຫາເລາະເກັບຂີ້ງົວແຫ້ງ ໄດ້ເກີດມີຂຶ້ນເປັນເນື່ອງນິດ. ຊາວບ້ານທີ່ບໍ່ມີລາຍໄດ້ເປັນປະຈຳ ພາກັນໄປເກັບເອົາຂີ້ງົວຕາມທົ່ງມາປະສົມກັບຕົມ, ປັ້ນເປັນແຜ່ນແລ້ວຕາກໃຫ້ແຫ້ງເພື່ອຂາຍໃຫ້ພໍ່ຄ້າຫວຽດນາມກະສອບລະຊາວພັນກີບ ອັນໄດ້ສ້າງຄວາມບໍ່ພໍໃຈໃຫ້ເຈົ້າຂອງນາທີ່ຢາກປະໃຫ້ຂີ້ງົວກາຍເປັນຝຸ່ນທຳມະຊາດສຳລັບການປູກເຂົ້າ. ປະຊາຊົນຕາມຊົນນະບົດຫລາຍຄົນ ກໍໄດ້ສອຍ



Un immense casino à Savannakhet !!!

Dans l’avenir, cet aéroport sera donc un aéroport thaïlandais de Mukdaharn, mais sur sol laotien.

La construction de la nouvelle ville « **Savanh city** », tout près du pont sur le Mékong, est en projet, et sa réalisation sera pour très bientôt. Aujourd’hui, plusieurs sociétés thaïlandaises et chinoises prévoient développer leurs activités en construisant des usines à partir du kilomètre 8 sur la route de Savannakhet à Séno. Un peu plus au nord du kilomètre 35, à la bifurcation de Kèng Kok, une nouvelle plantation de canne à sucre occupe un terrain de plusieurs milliers d’hectares, irriguée par un barrage construit à proximité de là par les Japonais (destiné initialement à l’irrigation des rizières), et une usine de sucre appartenant à la même société thaïlandaise a été construite tout près de Séno sur la route numéro 9.

**Paksé**

Paksé se développe aussi à une vitesse vertigineuse, elle aussi ! Ce qui est nouveau par rapport à l’année dernière à la même époque, c’est la nouvelle route à quatre voies, séparées par un terre-plein, qui relie le nouveau marché *Daoheuang* au kilomètre 9 sur la route de Muang Khong et celle de Paksong.

On remarque également la construction de deux hôtels de luxe à cinq étoiles aux deux extrémités du pont, le premier, appartenant au groupe *Tang Chaleun,* a déjà ouvert ses portes aux clients fortunés. Le deuxième situé à l’autre côté du Mékong est en construction.

**Conflits autour de la bouse de vaches !**

A la campagne, il n’est pas rare d’assister à des disputes entre les propriétaires de champs et des villageois qui ramassent tous les matins la bouse de vache pour en faire des galettes qu’ils font sécher pour les revendre aux commerçants vietnamiens 20 000 kips le sac. Le propriétaires sont mécontents, car ils ont besoin de ce fumier naturel qu’est la bouse de vache pour la culture du riz à la saison des pluies, tandis que les villageois qui revendent cet engrais naturel aux Vietnamiens leur achètent plus tard dans la saison des engrais chimiques pour leurs propres cultures – et à un prix bien plus élevé !

ໂອກາດເຮັດວຽກຢ່າງນີ້ເພື່ອຫາລາຍໄດ້ເລັກນ້ອຍເພີ້ມໃນຄອບຄົວ. ແຕ່ຜົນເສຍກໍຄືວ່າພາຍຫລັງພວກເຂົາຈໍາເປັນຕ້ອງໄດ້ຊື້ຝຸ່ນສໍາເລັດຮູບຜລິດຈາກໄທຫລືຈາກວຽດນາມຊຶ່ງມີຣາຄາແພງກວ່າຫລາຍເທົ່າມາໃສ່ເຂົ້າໃນນາຂອງຕົນເອງ !

## ບັນຫາເຣື້ອງການສັມປະທານທີ່ດິນ

ທາງພາກເໜືອຂອງປະເທດລາວ, ດິນຫລາຍໆໝື່ນເຮັກຕາໄດ້ຖືກສັມປະທານໃຫ້ແກ່ກຸ່ມບໍຣິສັດຂອງຈີນສໍາລັບການປູກຢາງພະລາ. ສ່ວນທາງພາກໃຕ້ແມ່ນກຸ່ມບໍຣິສັດຂອງວຽດນາມເປັນຜູ້ໄດ້ຮັບດິນສັມປະທານຫລາຍໆແສນເຮັກຕາ. ການສັມປະທານເນື້ອທີ່ດິນດັ່ງກ່າວນີ້ໄດ້ນໍາຄວາມເດືອນຮ້ອນມາສູ່ປະຊາຊົນຢ່າງຫລວງຫລາຍເນື່ອງຈາກວ່າລະບຽບການຂອງການສັມປະທານທີ່ດິນບໍ່ໄດ້ຖືກຣະບຸໄວ້ຢ່າງຈະແຈ້ງ ແລະບໍ່ໄດ້ຖືກຄວບຄຸມຢ່າງເຂັ້ມງວດຈາກອໍານາດກ່ຽວຂ້ອງໃນເວລາຜ່ານມາ. ສະນັ້ນ, ດິນໄຮ່ ດິນສວນ ຊຶ່ງເປັນບ່ອນທໍາມາຫາກິນຂອງປະຊາຊົນກໍໄດ້ຖືກຍຶດເອົາໄປປ່ອຍໃຫ້ພວກເຂົາຂາດບ່ອນທໍາມາຫາກິນແລະທຸກຈົນລົງນັບມື້. ຫວ່າງມໍ່ໆມານີ້, ທາງຣັຖບານໄດ້ອອກມະຕິໃໝ່ເພື່ອກໍານົດເນື້ອທີ່ຂອງດິນທີ່ສາມາດສັມປະທານໄດ້.

ນອກຈາກການສັມປະທານທີ່ດິນສໍາລັບປູກຢາງພະລານີ້ແລ້ວ, ຍັງມີບັນຫາເຣື້ອງໂຄງການຂຸດຄົ້ນບໍ່ແຮ່ ບອກໄຊ ຢູ່ແຂວງອັດຕະປືຊຶ່ງຈະຄວບງໍາໄປເຖິງເຂດເມືອງປາກຊ່ອງ ອີກດ້ວຍ. ສະນັ້ນ, ສະມາຄົມກາເຟເມືອງປາກຊ່ອງຈຶ່ງຂໍຮ້ອງໃຫ້ຣັຖບານກໍານົດເນື້ອທີ່ດິນສໍາລັບປູກຝັງໄວ້ຄັກແນ່ເພາະຖ້າຫາກການຂຸດຄົ້ນບໍ່ແຮ່ລາມໄປເຖິງບ່ອນໃດແລ້ວ ທີ່ດິນຕອນນັ້ນໆກໍຈະໃຊ້ປູກພືດພັນແນວອື່ນບໍ່ໄດ້ອີກເລີຍ.

## ການຕັດໄມ້ຢູ່ເຂດສາມຫລ່ຽມມໍຣະກົດ

ເນື່ອງຈາກມີອະນຸມັດຈາກຂັ້ນເທິງໃຫ້ຕັດໄມ້ທ່ອນອອກຈາກເຂດສາມຫລ່ຽມມໍຣະກົດອັນມີລາວ, ໄທ, ຂເມນ. ທາງຝ່າຍລາວ ຢູ່ເຂດເມືອງມຸນລະປະໂມກປັດຈຸບັນນີ້ມີໂຮງເລື່ອຍໄມ້ຫລາຍໆໂຮງຕັ້ງຂຶ້ນ ແລະເຈົ້າຂອງຣົດແກ່ໄມ້ຫລາຍຄົນກໍໄປເຮັດວຽກແກ່ໄມ້ທ່ອນຢູ່ທາງເຂດນັ້ນ. ເມືອງມຸນລະປະໂມກ ກໍາລັງພັທນາຢ່າງວ່ອງໄວ. ເຮືອນ ວິລລ່າ ຫລັງໃຫຍ່ໆ, ບ້ານພັກ, ໂຮງແຮມ, ຮ້ານກິນດື່ມ, ຮ້ານເຕັ້ນລໍາ ກໍາລັງຖືກສ້າງຂຶ້ນຫລາຍໆຫລັງ. ຕາມທໍາມະດາແລ້ວ, ການອະນຸມັທດຕັດໄມ້ໃນເຂດນີ້ກໍມີ ໂກຕາ ຄືກັນກັບເຂດອື່ນໆແຕ່ຫາກວ່າການຕັດໄມ້ກາຍ ໂກຕາ ຢ່າງນ້ອຍສຸດທົບເຄິ່ງກໍເປັນການປະຕິບັດແບບປົກກະຕິຢູ່. ເຊ່ນວ່າມີໂກຕາໃຫ້ຕັດໄດ້ 300 ແມັດກ້ອນ, ແຕ່ໃນຄວາມເປັນຈິງແລ້ວ, 300 ແມັດກ້ອນຕື່ມ ຫລືບາງເທື່ອກໍຫລາຍກວ່ານັ້ນ ກໍບໍ່ມີຜູ້ໃດ



La bouse de vache,
un engrais convoité

### Le problème de l'attribution des terres

Dans le nord du Laos, des milliers d'hectares de terrain ont été attribués à des sociétés commerciales chinois pour la plantation d'hévéa. Dans le sud, ce sont des sociétés vietnamiennes qui en bénéficient. Cette attribution a causé pas mal de problèmes pour la population locale, car le règlement et les conditions d'attribution n'ont pas été définis clairement et les contrôles sont quasi inexistants. C'est pourquoi, dans bien des cas, les paysans se voient privé de leurs terrains, réservé jusque là aux cultures vivrières traditionnelles, confisqués au profit de ces sociétés étrangères, privant ainsi les propriétaires de la terre qui leur permettait de vivre et les rendant ainsi plus pauvres. Tout récemment, le gouvernement a signé un décret pour déterminer quel type de terrain peut être attribué à ces sociétés. On attend l'application de ce décret avec impatience.

Des problèmes analogues se profilent avec un autre projet dans le sud, concernant l'exploitation d'une mine dans les montagnes d'Attopeu, et qui pourrait s'étendre jusqu'à la région de Paksong. L'association de café Muang Paksong a déposé une demande exprès au gouvernement pour que ce dernier préserve leurs terres pour la culture du café, estimant qu'après l'exploitation d'une mine, la terre ne sera plus cultivable ni pour le café, ni pour d'autres cultures.

### L'abattage de bois au Triangle d'Emeraude

Le gouvernement a donné les autorisations d'abattre les arbres de la nouvelle zone de développement commun des trois pays, le Laos, la Thaïlande et le Cambodge, appelé le triangle d'Emeraude. A Muang Mounlapamok, du côté laotien, beaucoup de scieries s'installent, et les propriétaires de camions de transport de bois trouvent du travail facilement dans cette région. Cette petite bourgade n'était auparavant qu'un simple district de campagne et elle devient aujourd'hui une ville florissante avec beaucoup de belles villas, des bâtiments administratifs flambant neuf, des *guest houses*, des hôtels, et des restaurants – sans oublier bien sûr les boîtes de nuit…

Normalement, le gouvernement accorde un quota précis pour la coupe d'arbres centenaires, mais le dépassement du quota autorisé est une pratique courante. Par exemple, le gouvernement autorise à couper 300 $m^3$, mais personne ne dit rien si vous en coupez le double, voire même le triple ! Il y a certes un garde forestier à la frontière qui est sensé travailler en étroite collaboration avec les agents des eaux et des forêts du

ເວົ້າຫຍັງໃຫ້ດອກ! ຈິງຢູ່ທີ່ມີ ກອງກຳລັງທະຫານຮັກສາຊາຍແດນ ເຮັດວຽກຮ່ວມກັນກັບພະນັກງານປ່າໄມ້ປະຈຳເມືອງ ແລະປະຈຳບ້ານເພື່ອກວດກາ ແລະຄວບຄຸມການຕັດໄມ້, ຫາກແຕ່ວ່າພວກເຖົ້າທີ່ມີເງິນແລະມີເສັ້ນສາຍກໍຍັງສາມາດຫລັກໂລບໄດ້ຢູ່. ຢູ່ປະເທດລາວ, ການທີ່ພໍ່ຄ້າໃຫຍ່ໆຊື້ຈ້າງຈອບອອຍພະນັກງານທ້ອງຖິ່ນຂອງພັກລັດ ມັນບໍ່ເປັນຄວາມປິດລັບສຳລັບຜູ້ນຶ່ງຜູ້ໃດເລີຍ... ນອກຈາກນີ້ແລ້ວ, ປະຊາຊົນທີ່ອາສັຍຢູ່ຕາມໝູ່ບ້ານໃກ້ໆກັບຕໍ່ເຂດຂອງປະເທດໄທ ກໍໄດ້ສ່ຽງຊີວິດຂອງຕົນໃນຍາມກາງຄືນເພື່ອໄປລັກສິນຄ້າໜີພາສີເຂົ້າປະເທດລາວເພາະເຖົ້າແກ່ຄົນຫວຽດຫລືຄົນຈີນເປັນຜູ້ຈ້າງ. ຍາມຄ່ຳມາ, ລາງຄົນກໍຍັງໄດ້ໃຊ້ຣົດ ຕ໊ອກ ຕ໊ອກ ຂອງຕົນເອງລັກເອົາໄມ້ສຳເຣັດຮູບຂາຍສົ່ງໄປຝັ່ງໄທ.

## ສາມຫລ່ຽມພັທນາ

ປະເທດລາວ, ປະເທດຂເມນ ແລະປະເທດ ຫວຽດນາມ ຍັງມີໂຄງການພັທນາຮ່ວມກັນໃນເຂດແຂວງທີ່ມີຊາຍແດນເຊື່ອມຕໍ່ກັນ. ສ່ວນຢູ່ປະເທດລາວແມ່ນມີສາມແຂວງພາກໃຕ້ຄື: ສາລະວັນ, ອັດຕະປື ແລະ ເຊກອງ. ປະເທດຍີ່ປຸ່ນເປັນຜູ້ສົ່ງເສີມໂຄງການພັທນາດັ່ງກ່າວນີ້ແລະໄດ້ອະນຸມັດເງິນໃຫ້ສາມປະເທດນີ້ແລ້ວ 20 ລ້ານ ດອນລ່າ ຕັ້ງແຕ່ປີ 2007. ແຕ່ລະແຂວງຂອງປະທດລາວທີ່ກ່າວມານີ້ໄດ້ຮັບສ່ວນແບ່ງສເມີກັນຄື 2,6 ລ້ານຫລຽນສະຫາຣັດ. ນອກຈາກໂຄງການນີ້ແລ້ວ, ຣັຖບານຍີ່ປຸ່ນຍັງຢາກສຶກສາການເປັນໄປໄດ້ຂອງການສ້າງທາງສາຍເລກນຶ່ງຈາກແຂວງອັດຕະປື ປະເທດລາວເຊື່ອມໄປຍັງແຂວງ ຣັດຕະນະຄີຣີ ປະເທດ ກຳພູຊາ.

## ບັນຫາທີ່ຍັງຄ້າງຄາໃຈ

ເຮັດຢ່າງໃດຄົນຕ່າງຊາດເຊັ່ນຄົນຈີນ, ຄົນຫວຽດນາມ, ຄົນໄທ ແລະອື່ນໆ ຢູ່ປະເທດລາວຈຶ່ງມີກັມມະສິດໃນອະຫັງສະຣິມະຊັບໄດ້ ທັງໆທີ່ຄົນເປັນເຊື້ອຊາດລາວແທ້ໆເຊັ່ນຊາວອົພຍົບບໍ່ມີສິດດັ່ງກ່າວນີ້ເລີຍ? ຄຳຕອບ ແມ່ນມາຈາກພວກເຂົາເອງຄືວ່າ ຜູ້ທີ່ໄດ້ອາສັຍຢູ່ປະເທດລາວດົນແລ້ວ ແລະໄດ້ສັນຊາດລາວແລ້ວ ກໍມີສິດເທົ່າທຽມກັນກັບປະຊາຊົນລາວເຊັ່ນພວກເຂົາສາມາດຊື້ດິນ, ຊື້ບ້ານແລະປຸກສ້າງເຄຫາສະຖານ, ຕັ້ງບໍ່ຣິສັດທຸກຢ່າງໄດ້ ບໍ່ພຽງແຕ່ສຳລັບພວກເຂົາເອງເທົ່ານັ້ນ ແຕ່ເຂົາກໍຍັງໃຊ້ຊື່ຂອງພວກເຂົາເພື່ອກະທຳສິ່ງດັ່ງກ່າວນີ້ສຳລັບພີ່ນ້ອງແລະໝູ່ເພື່ອນຂອງພວກເຂົາທີ່ຢາກຍ້າຍມາທຳມາຫາກິນຢູ່ປະເທດລາວອີກດ້ວຍ. ການກະທຳແບບນີ້, ຊາວອົພບຍົບໃນຕ່າງປະເທດກໍສາມາດເຮັດໄດ້ ແລະຫລາຍໆຄົນກໍໄດ້ເຮັດມາແລ້ວຫາກແຕ່ວ່າປະສົບປະການຂອງບາງຄົນຊີ້ໃຫ້ເຫັນແລ້ວວ່າມັນໄດ້ນຳບັນຫາຄວາມຜິດຂ້ອງຕ້ອງຖຽງກັນລະຫວ່າງອ້າຍນ້ອງ ຫລືຄົນໃນຄອບຄົວດຽວກັນມາພ້ອມ. ແລະສິ່ງທີ່ໜ້ານ້ອຍໃຈກໍຄືວ່າໃນຂະນະທີ່ຊາວລາວພົ້ນທະເລຜູ້ມີທຶນແລະມີຄວາມປະສົງຢາກຈະກັບຄືນໄປອາໃສຢູ່ບ້ານເກີດເມື່ອແກ່ຊະຣາແລ້ວ ຍັງເຍື້ອນເວລາຂອງການປຸກສ້າງອອກໄປອີກເພາະບໍ່ມີຄວາມໄວ້ວາງໃຈກັບຄົນ

district et du village pour contrôler les coupes, mais les patrons, qui ont la main longue, parviennent sans peine à outrepasser les règlements sans se faire inquiéter. Au Laos, la pratique généralisée des dessous de table et de la corruption n'est plus un secret pour personne. D'ailleurs, une autre pratique risquée consiste à faire entrer illégalement des marchandises de Thaïlande pour le compte des commerçants chinois ou vietnamiens. Et ceux qui habitent tout près de la frontière transportent souvent du bois sur leur toc-toc pendant la nuit pour le vendre en Thaïlande.

**Le triangle de développement**

Le Laos, le Cambodge et le Vietnam ont un projet commun de développement dans les provinces qui ont une frontière commune. Au Laos, ce sont trois provinces du sud : Salavan, Attapeu et Sékong qui répondent aux critères de ce projet. Le Japon, initiateur de ce projet, a déjà accordé une aide globale de 20 millions de dollars à cet effet en 2007. La part qui revient à chacune des provinces du Laos s'élève à 2,6 millions de dollars. En outre, le gouvernement japonais est en train d'étudier la faisabilité de la construction d'une nouvelle route reliant la province d'Attopeu à la province de Rattanakhiri, au Cambodge.

**Un problème insoluble…**

Beaucoup de nos compatriotes Laotiens de l'étranger se demandent comment il se fait que des étrangers – Thaïlandais, Vietnamiens, Chinois et autres – parviennent à acquérir des maisons et des terrains, tandis que les réfugiés laotiens eux-mêmes ne peuvent pas acheter de maison ou de terrain en leur propre nom. J'ai posé la question à certains de ces étrangers vivant aux Laos : ceux qui s'y sont établis depuis un certains temps et qui ont pu obtenir la nationalité laotienne jouissent des mêmes droits que les Laotiens de souche. Ils peuvent acheter, construire, exercer un métier, créer les sociétés… au même titre que les nationaux, et ils usent de leurs droits, de leurs avantages et de leur nom pour effectuer les transactions nécessaire pour permettre à leurs familles et à leurs amis qui le souhaitent de venir s'installer et vivre au Laos. Les réfugiés peuvent en faire autant, mais les expériences de certains nous découragent, car cette pratique amène souvent de la jalousie et suscite des disputes qui vont parfois jusqu'à la rupture complète des relations familiales et amicales. Ce qui est vraiment dommage pour les Laotiens d'outre-mer ayant le désir de rentrer définitivement au pays et le moyen de faire construire une maison au pays. Ces craintes retardent la réalisation de leur rêve, par manque de confiance envers leurs proches restés au pays, laissant ainsi les étrangers vivant sur place profiter de la situation pour acheter maisons et terrains. Quand les Chinois ou les Vietnamiens ne discutent même pas le prix, le propriétaire du terrain ou de la maison n'hésite pas à vendre son bien! Beaucoup de propriétaires de terrains ou de maisons situées au centre ville vendent ou louent à des étran-

ໃນຄອບຄົວດຽວກັນ.ລະຍະຂອງການລ້າຊ້ານີ້ ກໍພໍດີເປັນໂອກາດສຳລັບຄົນຕ່າງດ້າວຢູ່ປະເທດລາວທີ່ສວຍໃຊ້ເພື່ອຊື້ເອົາບ້ານເຮືອນ ຫລືດິນດອນຕ່ອນຫຍ້າອັນເໝາະສົມນັ້ນໄປກ່ອນ. ໃນເມື່ອພວກຊາວຕ່າງດ້າວຫາກໃຫ້ຣາຄາແພງກວ່າ, ເຈົ້າຂອງທີ່ດິນ ຫລືບ້ານກໍຍອມຂາຍໂລດໂດຍບໍ່ຄຳນຶງເຖິງຜົນເສັຍສຳລັບຕົນເອງ ແລະສຳລັບປະເທດຊາດທີ່ອາດຈະຕາມມາໃນພາຍໜ້ານັ້ນເລີຍ. ປັດຈຸບັນນີ້, ຄົນລາວຜູ້ທີ່ມີບ້ານເຮືອນຢູ່ໃນຕົວເມືອງ ກໍມັກຂາຍຫລືເຊົ່າໃຫ້ຄົນຕ່າງດ້າວຢູ່ ແລະພາກັນຍ້າຍອອກໄປຢູ່ນອກຕົວເມືອງບ່ອນທີ່ກວ້າງຂວາງແລະສວາດສເວີຍກວ່າ. ແມ່ນຕັ້ງແຕ່ດິນຢູ່ຊານເມືອງທີ່ທາງການຈັດສັນໃຫ້ຄອບຄົວທີ່ຕ້ອງຍົກຍ້າຍອອກຈາກບ່ອນຄັບແຄບຫລືມີອັນຕະຣາຍດິນເຈື່ອນ ຫລືນ້ຳຖ້ວມ, ບາງຄອບຄົວກໍຍັງຂາຍຕໍ່ໃຫ້ຄົນຕ່າງດ້າວເພາະຕ້ອງການເງິນໃຊ້!

## ຄຣິສຕະຈັກຂ່າວປະເສີດ

ທຸກຄັ້ງທີ່ຂ້າພະເຈົ້າໄປຢາມປະເທດລາວກໍພະຍາຍາມແວ່ຢາມຊາວຄຣິສຕຽນໃນຫລາຍທີ່ຫລາຍບ່ອນເທົ່າທີ່ຈະໄປໄດ້ເພື່ອຊຸດໜູນຄວາມເຊື່ອຂອງພວກເຂົາ. ເມື່ອກັບມາເຖິງຝຣັ່ງເສດແລ້ວ, ເຖິງຈະມີຄວາມອິດເມື່ອຍທາງກາຍຍ້ອນການເດີນທາງອັນກວ້າງໄກຫລາຍປານໃດກໍຕາມ ແຕ່ຂ້າພະເຈົ້າເອງກໍໄດ້ຮັບພະລັງທາງດ້ານຄວາມເຊື່ອເພາະໄດ້ເຫັນຂ່າວປະເສີດຂຍາຍອອກໄປຢ່າງກວ້າງຂວາງໃນສັງຄົມຂອງຄົນລາວເຮົາເຖິງແມ່ນວ່າປັດຈຸບັນນີ້, ໃນບາງເຂດຍັງມີການເກືອດຫ້າມຢູ່ກໍຕາມ. ເມື່ອພົບກັນກັບບາງຄົນທີ່ຫາກໍອອກຈາກຄຸກ ຫລືຖືກບັງຄັບໃຫ້ຍົກຍ້າຍອອກຈາກບ້ານເກີດຍ້ອນພວກເຂົາບໍ່ຍອມປະຕິເສດຄວາມເຊື່ອຖື ກໍທຳໃຫ້ຂ້າພະເຈົ້າຮູ້ສຶກເປັນຜູ້ເລັກນ້ອຍທີ່ສຸດຕໍ່ໜ້າເຂົາ. ຢ່າງໃດກໍຕາມ, ຂ້າພະເຈົ້າໄດ້ຮຽນບົດຮຽນກ່ຽວກັບຄວາມອົດທົນ ແລະການຍອມເສັຍສະລະຂອງຄວາມເຊື່ອຈາກພວກເຂົາຫລາຍກວ່າພວກເຂົາໄດ້ຮັບພຣະພອນ ແລະບົດຮຽນຕ່າງໆທີ່ຂ້າພະເຈົ້າໄດ້ ສັ່ງສອນ ແລະຖ່າຍທອດໃຫ້ແກ່ພວກເຂົາອີກຊ້ຳ!

gers et préfèrent s'installer carrément en dehors de la ville. Certaines familles, pour des raisons financières, vendent même du terrain qui leur a été attribué gratuitement par le gouvernement après qu'ils aient été expulsés de leur ancienne habitation, soit parce qu'elle se situe dans une zone présentant un risque d'érosion ou d'inondation, soit parce qu'elle se trouve dans la zone du développement.

### Encouragé par les visites aux chrétiens

Ces visites sont chaque fois l'occasion de rendre visite aux chrétiens dans divers lieux où c'est possible pour les encourager dans la foi. Je rentre fatigué après les nombreux kilomètres parcourus, mais encouragé et renouvelé dans ma foi en voyant les progrès de l'Évangile dans la société laotienne, même s'il y a pas mal de restrictions dans certaines régions. J'ai eu l'occasion de rencontrer certains chrétiens qui venaient de sortir de prison ou qui ont été chassés de leur village en raison de leur foi, et je me sens tout petit devant eux. C'est une vraie leçon de consécration et de persévérance qu'ils nous donnent, et j'ai reçu d'eux bien plus que je n'ai pu leur apporter en termes d'encouragement ou d'enseignement!



Nouvelle chapelle en construction à Nakham (province de Savannakhet)



## Église catholique – Un prêtre nouvellement ordonné

*Eglises d'Asie*, 23 janvier 2009

Une nouvelle ordination sacerdotale vient renforcer l'Eglise renaissante du Laos

Pour la petite communauté des catholiques du Laos, qui manque cruellement de prêtres, l'ordination du P. Matthieu Somdet Kaluan, le 10 janvier dernier, dans le vicariat apostolique de Savannakhet (1) a revêtu une importance particulière. Plus de 2000 catholiques, 22 prêtres locaux, trois prêtres vietnamiens, deux prêtres thaïlandais et trois moines bouddhistes laotiens ont assisté en la cathédrale St Louis de Thakhek, à la cérémonie présidée par Mgr Jean Sommeng Vorachak, vicaire apostolique de Savannakhet.

Etaient également présents Mgr Louis Marie Ling Mangkhanekhoun, évêque de Pakse et Mgr Tito Banchong Thopayong, vicaire apostolique de Luang Prabang.

Selon l'agence *Ucanews*, le nouveau prêtre est originaire du district de Songhone, de la province de Savannakhet. Après avoir suivi trois ans de préparation au séminaire, il a étudié la philosophie et la théologie au grand séminaire de Thakhek (2), puis l'anglais aux Philippines.

La cérémonie s'est déroulée dans une atmosphère festive : danses et musiques traditionnelles ont précédé l'ordination, et pendant la messe, des branches de bambou garnies de billets, symbolisant la prospérité et le bonheur, ont été offertes à Mgr Jean Sommeng Vorachak, une coutume laotienne pour les célébrations importantes. Le prélat, âgé de 75 ans, a déclaré à la communauté combien cet événement était *« très important pour l'Eglise locale, qui a besoin de davantage de prêtres au service des fidèles ».* Il a également encouragé l'ordinand dans son souhait d'« apporter la Bonne Nouvelle aux minorités ethniques qui n'en ont jamais entendu parler ».

Après la célébration, Mgr Salvatore Pennacchio, présent en tant que délégué apostolique au Laos (3), a exprimé en français (4) sa joie que Dieu ait donné un nouveau prêtre à l'Eglise locale. Après avoir transmis la bénédiction papale, il a rappelé l'intérêt du Saint-Siège pour l'Eglise du Laos et enjoint la communauté à prier pour que l'avenir suscite de nombreuses vocations chez les jeunes.

Depuis la révolution de 1975, qui a instauré la République démocratique populaire lao (RDPL), la liberté religieuse reste très limitée au Laos, pays majoritairement bouddhiste et animiste (5). Dans les années qui ont suivi l'arrivée au pouvoir du parti communiste, la persécution envers l'Eglise s'est traduite par la fermeture des institutions religieuses, la confiscation des biens ecclésiastiques, des hôpitaux et des écoles, l'expulsion des prêtres et congrégations, l'interdiction de la pratique religieuse.

Aujourd'hui, l'Eglise laotienne renaît lentement, à partir de la structure ecclésiale des pays de mission (elle

## ການສະຖາປະນານັກບວດ ຄາໂທລິກ

ຄັດອອກຈາກແຫຼ່ງຂ່າວ: ຄຣິສຕະຈັກ ອາຊີ (***Eglises d'Asie*, 23 janvier 2009**)

***ການສະຖາປະນານັກບວດຄົນໃໝ່ເປັນພະລັງແຮງສຳລັບຄຣິສຕະຈັກທີ່ເກີດຂຶ້ນໃໝ່ຢູ່ປະເທດລາວ***

ສຳລັບຊຸມນຸມຊົນນ້ອຍໆຂອງຊາວຄາໂທລິກໃນປະເທດລາວຊຶ່ງຂາດເຂີນນັກບວດຢ່າງຮ້າຍແຮງ, ການສະຖາປະນາຄຸນພໍ່ ມັດທາຍ ສົມເດັດກະລວນ ເມື່ອວັນທີ 10 ມົກກະຣາ 2009 ທີ່ຜ່ານມານີ້ຢູ່ທີ່ສຳນັກບາດຫລວງເຈົ້າອາວາດແຂວງສວັນນະເຂດ (1) ໄດ້ມີຄວາມສຳຄັນແບບພິເສດ. ມີຊາວຄາໂທລິກ 2000 ກວ່າຄົນ, ນັກບວດທ້ອງຖິ່ນ 22 ອົງ, ນັກບວດວຽດນາມສາມອົງ, ນັກບວດໄທສອງອົງ ແລະພຣະອາຈານຂອງພຸທສາສນາສາມອົງທີ່ເຂົ້າຮ່ວມໃນພິທີດັ່ງກ່າວທີ່ໄດ້ຈັດຂຶ້ນຢູ່ໂບດໃຫຍ່ ແຊັງລຸຍ ຂອງເມືອງທ່າແຂກ ຊຶ່ງແມ່ນພຣະສັງຄະຣາດ ຢວງ ສົມເມັງ ວໍຣະຈັກ, ເຈົ້າອາວາດໂບດສວັນນະເຂດ ເປັນຜູ້ນຳພິທີ.

ແຂກຜູ້ເຂົ້າຮ່ວມໃນພິທີກໍຍັງມີ ພຣະສັງຄະຣາດ ລຸຍ ມາຣີ ລິງ ມັງຄານຄຸນ, ພຣະສັງຄະຣາດປະຈຳຢູ່ສຳນັກເມືອງ ປາກເຊ ແລະພຣະສັງຄະຣາດ ຕີໂຕ ບັນຈົງ ໂທປະຍົງ, ບາດຫລວງເມືອງຫລວງພະບາງ.

ຕາມຂ່າວຈາກກະແສຂ່າວ Ucanews ແຈ້ງໃຫ້ຊາບວ່າ, ນັກບວດຜູ້ໃໝ່ນີ້ມາຈາກເມືອງສອງຄອນ ແຂວງ ສວັນນະເຂດ. ຫລັງຈາກໄດ້ເຂົ້າຕຽມການສັມມະນາສາມປີແລ້ວ, ຜູ້ກ່ຽວກໍໄດ້ຮຽນວິຊາປຣັຊຍາ ແລະວິຊາເທວະນິຍົມ ໃນໂຮງຮຽນສັມມະນາຢູ່ເມືອງທ່າແຂກ (2) ແລະກໍໄດ້ໄປຮຽນພາສາອັງກິດຕໍ່ຢູ່ປະເທດ ຟີລິບປິນ.

ພິທີດັ່ງກ່າວໄດ້ເປີດຂຶ້ນດ້ວຍບັນຍາກາດຂອງງານອັນລື້ນເລີງມ່ວນຊື່ນເຊັ່ນວ່າ: ມີການຟ້ອນ ແລະມີດົນຕຣີພື້ນເມືອງກ່ອນຈະມີການສະຖາປະນາ, ແລະໃນການທຳ ມິຊາ, ໝູ່ຊຸມນຸມກໍໄດ້ມອບລຳໄມ້ໃຜ່ອັນເປັນສັນຍາຂອງຄວາມອຸດົມສົມບູນແລະຄວາມສຸກສວັດດີໃຫ້ແກ່ພຣະສັງຄະຣາດ ສົມເມັງ ວໍຣະຈັກ. ການທຳແບບນີ້ກໍເປັນປະເພນີຂອງຊາວລາວເຮົາໃນເມື່ອມີການປະກອບພິທີອັນສຳຄັນພິທີນຶ່ງພິທີໃດ. ພຣະສັງຄະຣາດ ສົມເມັງ ຜູ້ມີອາຍຸ 75 ປີ ກໍໄດ້ຖແລງໃຫ້ໝູ່ຊຸມນຸມຊາບວ່າ: "ເປັນພິທີທີ່ສຳຄັນທີ່ສຸດສຳລັບຄຣິສຕະຈັກທ້ອງຖິ່ນ ທີ່ມີຄວາມຕ້ອງການຢາກໃຫ້ມີນັກບວດຫລາຍກວ່ານີ້ອີກເພື່ອຮັບໃຊ້ຊາວສາສນິກະຊົນທົ່ວໄປ". ໃນຄວາມປະສົງຂອງທ່ານນັ້ນ, ທ່ານຍັງໄດ້ສນັບສນູນນັກບວດຄົນໃໝ່ໃຫ້ "ນຳຂ່າວປະເສີດໄປຍັງບັນດາຊາວເຜົ່າທີ່ຍັງບໍ່ທັນເຄີຍໄດ້ຍິນຈັກເທື່ອ".

ຫລັງຈາກຈົບການນະມັສການແລ້ວ, ພຣະສັງຄະຣາດ ຊານວາຕໍ ປານາກີໂອ (3) ທີ່ໄດ້ໃຫ້ກຽດມາຮ່ວມໃນນາມເປັນຜູ້ຕາງໜ້າສົງແຫ່ງປະເທດລາວ ກໍໄດ້ກ່າວຄຳປາສັຍເປັນພາສາຝຣັ່ງເສດ (4) ເນັ້ນເຖິງຄວາມຍິນດີຂອງທ່ານທີ່ເຫັນວ່າພຣະເຈົ້າຊົງປະທານນັກບວດຄົນໃໝ່ໃຫ້ແກ່ຄຣິສຕະຈັກທ້ອງຖິ່ນ. ຫລັງຈາກໄດ້ກ່າວຄຳພຣະພອນຂອງສັນໂຕປະປາ ແລ້ວ, ທ່ານຍັງໄດ້ຢ້ຳເຖິງຄວາມຫ່ວງໃຍຂອງສຳນັກສັນໂຕປະປາສຳລັບຄຣິສຕະຈັກແຫ່ງປະເທດລາວອີກດ້ວຍ ແລະຍັງຂໍຮ້ອງໃຫ້ໝູ່ຊຸມນຸມພາກັນອະທິຖານໄຫວ້ວອນນຳພຣະເຈົ້າເພື່ອວ່າໃນອະນາຄົດຈະໄດ້ມີຄຳຮຽກຮ້ອງໃນທ່າມກາງພວກເຍົາວະຊົນໃຫ້ຫລາຍກວ່າເກົ່າ.

ນັບຕັ້ງແຕ່ມີການປະຕິວັດເມືອປີ 1975 ທີ່ໄດ້ນຳໃຫ້ເກີດເປັນປະເທດສາທາລະນະລັດປະຊາທິປະໄຕ ປະຊາຊົນລາວເປັນຕົ້ນມາ, ເສຣີພາບໃນການເຊື່ອຖືກໍມີຂອບເຂດຈຳກັດ

est constituée de vicariats apostoliques), mais les autorités restent méfiantes envers les religions chrétiennes et exercent sur elles une étroite surveillance. Le culte, les ordinations et les déplacements des membres du clergé sont toujours soumis à l'autorisation du gouvernement (6).

Depuis 2006, date où, pour la première fois depuis trente ans, une ordination sacerdotale a été autorisée (7), les laïcs laotiens sur lesquels avait reposé une bonne part de la transmission de la foi pendant les périodes les plus sombres de la persécution, ont vu peu à peu grandir l'espoir du renouvellement du clergé catholique. Cependant, le nombre de prêtres ordonnés reste encore très faible. Le P. Joachim Bunlieta, 59 ans, curé de la cathédrale (environ 1 100 paroissiens), a expliqué à *Ucanews* les prêtres locaux, issus de familles rurales pour la plupart d'entre eux, desservaient jusqu'à 10 à 25 paroisses.

Selon Mgr Jean Sommeng Vorachak, son vicariat de Savannakhet compte aujourd'hui neuf prêtres et 98 religieux pour les 13 000 catholiques qui vivent leur foi au milieu d'une population de trois millions de bouddhistes.

*Notes*

(1) L'Eglise du Laos compte quatre vicariats apostoliques. Celui de Savannakhet se trouve dans la partie sud du pays.

(2) Selon *Ucanews,*le grand séminaire de Thakhek accueille à l'heure actuelle 16 séminaristes.

(3) Mgr Salvatore Pennacchio est nonce apostolique en Thaïlande, au Cambodge et à Singapour, et délégué apostolique au Brunei, au Laos, en Malaise et en Birmanie

(4) Le français est encore en usage dans les milieux de l'administration, de l'éducation et du commerce.

(5) Selon des sources ecclésiastiques locales, l'Eglise laotienne compte environ 43 000 catholiques pour l'ensemble d'un pays peuplé de 6 millions d'habitants. Ils forment environ 1 % de la population, les bouddhistes atteignant plus de 65 % et les animistes, 33 %.

(6) La délivrance de ces autorisations dépend du *Lao Front for National Construction*, organisme d'Etat qui supervise la pratique religieuse.

(7) Cette première ordination sacerdotale a été celle de du P. Somphe Vilavongsy, Oblat de Marie Immaculée (OMI), le 18 juillet 2006. La cérémonie aurait dû avoir lieu en décembre mais le gouvernement qui était revenu sur son autorisation, a fait encercler l'église par l'armée pour empêcher l'ordination.

© Les dépêches d'*Eglises d'Asie* peuvent être reproduites, intégralement comme partiellement, à la seule condition de citer la source. – dépêche envoyée par la Rédaction d'*Eglises d'Asie*agence d'information des Missions Etrangères de Paris

ນ້ອຍທີ່ສຸດຢູ່ປະເທດລາວ ຊຶ່ງສ່ວນໃຫຍ່ເປັນປະເທດທີ່ມີຄົນສັດທາໃນພຸທສາສນາແລະໃນສັຍສາດຫລາຍກວ່າ (5). ໃນຊຸມປີຕໍ່ມາຫລັງຈາກພັກ ຄອມມູຍນິດ ກຳອຳນາດແລ້ວ ການຂົ່ມເຫັງຊາວຄຣິສຕຽນໄດ້ສຳແດງອອກດ້ວຍການສັ່ງປິດອົງການຈັດຕັ້ງຕ່າງໆຂອງສາສນາ, ການຍຶດເອົາສົມບັດຂອງໂບດ, ໂຮງໝໍ, ໂຮງຮຽນ, ການເນຣະເທດນັກບວດແລະບັນພະສັດທັງຫລາຍ, ການເກືອດຫ້າມບໍ່ໃຫ້ປະຕິບັດພິທີກັມທາງສາສນາ.

ປັດຈຸບັນນີ້, ຄຣິສຕະຈັກແຫ່ງປະເທດລາວກໍຄ່ອຍໆຟື້ນຕົວຂຶ້ນມາໃໝ່, ເລີ້ມຈາກໂຄງຮ່າງຄຣິ້ສຕະຈັກຂອງບັນດາປະເທດທີ່ຕ້ອງທຳພາຣະກິດ (ໂຄງຮ່າງນີ້ໄດ້ຈັດຕັ້ງຂຶ້ນໂດຍສຳນັກເຈົ້າອາວາດເອງ), ແຕ່ເຖິງປານນັ້ນ ອຳນາດການປົກຄອງກໍຍັງເກີດຄວາມລະແວງຕໍ່ສາສນາຄຣິສຕຽນ ແລະຍັງສິ້ງຊອມເບິ່ງພຶດຕິກັມຢູ່ຢ່າງໃກ້ຊິດ. ການນະມັສການ, ການສະຖາປະນາແລະການໄປມາຂອງສະມາຊິກໃນຄະນະສົງ ກໍຍັງຕ້ອງໄດ້ຂໍອະນຸຍາດນຳລັດຖະບານເສັຍກ່ອນ(6).

ກ່ອນປີ 2006 ຄືປີທີ່ໄດ້ຮັບອະນຸຍາດເພື່ອສະຖາປະນາສົງຄັ້ງທຳອິດພາຍໃນລະຍະ 30 ປີ, ແມ່ນພວກຄາຣະວາດຄົນລາວເອງທີ່ໄດ້ປະກອບສ່ວນອັນສຳຄັນໃນການທ່າຍທອດຄວາມເຊື່ອໃຫ້ລູກຫລານຕໍ່ໄປໃນລະຍະມືດມົນຂອງການຂົ່ມເຫັງ. ນັບຕັ້ງແຕ່ປີນັ້ນເປັນຕົ້ນມາ, ຄວາມຫວັງຂອງການຟັກຟື້ນສັງຄະມົນທົນຊາວຄາໂທລິກກໍຄ່ອຍໆເກີດມີຂຶ້ນມາ. ແຕ່ເຖິງປານນັ້ນກໍດີ, ຈຳນວນນັກບວດທີ່ໄດ້ຮັບການສະຖາປະນາກໍຍັງມີນ້ອຍເກີນໄປ. ຄຸນພໍ່ໂຢຣາກິມ ບຸນລິດຕາ, ອາຍຸ 59 ປີ ຊຶ່ງປະຈຳການຢູ່ໂບດໃຫຍ່ເມືອງທ່າແຂກເອງຊຶ່ງມີສະມາຊິກເຖິງ (1100 ຄົນ) ໄດ້ອະທິບາຍໃຫ້ຜູ້ສື່ຂ່າວ Ucanews ໃຫ້ຊາບວ່ານັກບວດຊຶ່ງສ່ວນມາຈາກຄອບຄົວຊາວຊົນນະບົດ, ຮັບໃຊ້ຄົນລະ 10 ຫາ 25 ໂບດພ້ອມໆກັນ.

ຕາມຄຳໃຫ້ການຂອງພຣະສັງຄະຣາດ ສົມເນັງ ວໍຣະຈັກ, ສຳນັກສົງຂອງທ່ານຢູ່ແຂວງສວັນນະເຂດ ມີນັກບວດທັກອົງ ແລະຄຸນແມ່ 98 ຕົນ ເພື່ອຮັບໃຊ້ຊາວຄາໂທລິກ 13 000 ຄົນທີ່ອາສັຍຢູ່ທ່າມກາງຊາວພຸທສາສນິກະຊົນຕັ້ງສາມລ້ານຄົນ.

(1) ຄຣິສຕະຈັກຢູ່ປະເທດລາວມີສຳນັກເຈົ້າອາວາດທັງໝົດສີ່ແຫ່ງ. ສຳນັກທີ່ຕັ້ງຢູ່ແຂວງສວັນນະເຂດເປັນສຳນັກສຳລັບພາກໃຕ້ຂອງປະເທດລາວ.

(2) ຕາມແຫລ່ງຂ່າວຈາກ Ucanews , ສູນກາງສັມມະນາສົງຢູ່ທ່າແຂກມີນັກຮຽນ 16 ຄົນທີ່ກຳລັງຮັບການສັມມະນາຢູ່ໃນຂະນະນີ້.

(3) ພຣະສັງຄະຣາດ ຊານວາຕໍ ເປັນນາກີໂອ ເປັນສັງຄະອັຄທູດປະຈຳຢູ່ປະເທດໄທ,ຂເມນແລະສິງກະໂປ, ແລະເປັນຜູ້ຕາງໜ້າອັຄທູດສຳລັບປະເທດ ບຣູນາຍ, ລາວ, ມາເລັຍເຊັຍ ແລະມ່ຽນມ້າ.

(4) ພາສາຝຣັ່ງເສດຍັງໃຊ້ຢູ່ສຳລັບທາງຣາຊການບາງກະຊວງ, ການສຶກສາ ແລະເສຖກິດ.

(5) ຕາມແຫລ່ງຂ່າວຈາກຄຣິສຕະຈັກທ້ອງຖິ່ນເອງ, ຄຣິສຕະຈັກໃນປະເທດລາວມີຊາວຄາໂທລິກປະມານ 43000 ຄົນໃນທົ່ວປະເທດທີ່ມີພົລເມືອງທັງໝົດຫົກລ້ານຄົນ. ສເລັ່ງແລ້ວຊາວຄາໂທລິກມີພຽງແຕ່ 1% ຂອງພົລເມືອງ; ຊາວພຸທ ມີຫລາຍກວ່າ 65% ແລະພວກທີ່ຍັງເຊື່ອໃນເທວະສາດມີ 33%.

(6) ການອອກໜັງສືອະນຸຍາດຕ່າງໆແມ່ນຂຶ້ນກັບສູນກາງແນວລາວສ້າງຊາດ ຊຶ່ງເປັນອົງການຈັດຕັ້ງນຶ່ງຂອງພັກລັດເພື່ອກວດກາການປະຕິບັດສາສນາ.

(7) ການສະຖາປະນາສົງຄັ້ງທຳອິດໄດ້ຈັດໃຫ້ມີຂຶ້ນໃນມື້ວັນທີ 18 ຊຸຍເຢ 2006 ໃຫ້ແກ່ນັກບວດ ສົມເພັດ ພິລາວົງສີ ຊຶ່ງສັງກັດຢູ່ໃນອົງການ ໂອ ເອັມ ອີ. ທຳອິດ, ພິທີດັ່ງກ່າວໄດ້ກະໃສ່ເດືອນ ທັນວາ ປີ 2005 ຫາກແຕ່ວ່າອຳນາດການປົກຄອງໄດ້ລົບລ້າງໃບອະນຸຍາດ ແລະໄດ້ສັ່ງໃຫ້ຕຳຣວດມາອ້ອມໂບດໄວ້ເພື່ອຫ້າມບໍ່ໃຫ້ທຳພິທີສະຖາປະນາ.

## Discours du Premier Ministre laotien à l'ambassade de France

## ປາທະກະຖາຂອງພະນະທ່ານ ບົວສອນ ບຸຟາວັນ



Jeudi 7 mai dernier, le Premier Ministre du Laos, M. Bouasone Bouphavanh, a fait une visite à Paris au retour d'un voyage officiel à Cuba. Comme à chacune de ses visites en France, l'Ambassade de la RDP Lao de Paris a invité quelques Laotiens de France pour rencontrer et écouter le Premier Ministre. J'ai eu le privilège de pouvoir le rencontrer pour la deuxième fois avec d'autres personnes.

Dans son discours, le Premier Ministre s'est expliqué longuement sur la politique du parti et du gouvernement dans le développement du pays au plan économique, social et sportif. Il s'est aussi exprimé sur les conséquences de la crise mondiale sur la société laotienne. Selon lui, pour atteindre le but fixé par le gouvernement pour le développement, «en raison du manque d'experts qualifiés dans tous les domaines, il convient d'utiliser au maximum les ressources naturelles pour faciliter le développement, à l'instar de bien d'autres pays avant nous».

A la question des Laotiens de l'étranger qui souhaiteraient pouvoir obtenir la double nationalité, il leur a répondu que ce n'était pas possible pour le moment, car il n'y a pas encore de loi autorisant cette possibilité. Mais le gouvernement pourrait leur accorder statut de « citoyen d'honneur » à toute personne d'origine laotienne qui serait en mesure d'investir une somme d'au moins 500 000 $. Ce même privilège pourrait être accordé à toute autre personne prêt à investir un montant de 1 000 000 $.

Qui parmi les laotiens d'outre-mer a les moyens de trouver une somme pareille pour racheter sa propre nationalité ? C'est la question que beaucoup se sont posée après ce discours du Premier Ministre.

ເມື່ອວັນທີ 07 ຂອງເດືອນ ພຶສພາ (5) 2009 ທີ່ຜ່ານມານີ້, ພະນະທ່ານ ບົວສອນ ບຸຟາວັນ, ນາຍຍົກຣັຖມົນຕຣີແຫ່ງ ສປປລາວ ພ້ອມດ້ວຍຄະນະໄດ້ແວ່ມາຢ້ຽມຢາມນະຄອນ ປາຣີສ ປະເທດຝຣັ່ງເສດ ຫລັງຈາກເສັດການຢ້ຽມຢາມປະເທດ ກຸຍບາ ແລ້ວ. ດັ່ງດຽວກັນກັບທຸກຄັ້ງຂອງການຢ້ຽມຢາມ, ສະຖານທູດແຫ່ງ ສປປລ ຢູ່ ປາຣີສ ກໍໄດ້ເຊື້ອເຊີນຊາວລາວບາງຄົນເພື່ອພົບປະສ້າງສັນແລະເພື່ອຟັງຄຳຖແລງນະໂຍບາຍການເມືອງຂອງຣັຖບານ ແລະຂອງພັກລັດ. ຂ້າພະເຈົ້າກໍໄດ້ມີໂອກາດເຂົ້າຮ່ວມເພື່ອຟັງປາທະກະຖາຂອງທ່ານນາຍຍົກຮ່ວມກັນກັບຄົນອື່ນໆ.

ທ່ານ ບົວສອນ ບຸຟາວັນ ໄດ້ອະທິບາຍຢ່າງຍືດຍາວເຖິງນະໂຍບາຍການເມືອງ, ເສດຖະກິດ, ສັງຄົມ, ແລະເປົ້າໝາຍຂອງພັກລັດເພື່ອຈະນຳປະເທດຊາດບ້ານເມືອງໄປສູ່ຄວາມຈະເຣີນຮຸ່ງເຮືອງ. ໃນຕອນນຶ່ງທ່ານໄດ້ກ່າວວ່າ: "ເນື່ອງຈາກປະເທດເຮົາຍັງຂາດພູມປັນຍາ, ຈຶ່ງຈຳເປັນຕ້ອງອາໃສຊັພຍາກອນທຳມະຊາດຂອງປະເທດເພື່ອສ້າງສາພັທນາ (...) ກ່ຽວກັບການທີ່ຄົນລາວພົ້ນທະເລຢາກຈະມີສອງສັນຊາດນັ້ນ, ເວລານີ້ຍັງບໍ່ທັນມີກົດໝາຍເທື່ອພຽງແຕ່ທາງລັດຖະບານມີເງື່ອນໄຂບາງຢ່າງເຊັ່ນວ່າກ່ອນທີ່ຣັຖບານຈະໃຫ້ຜູ້ນຶ່ງຜູ້ໃດຈະມີສັນຊາດລາວແບບກິຕິມະສັກໄດ້ນັ້ນ, ຜູ້ກ່ຽວມີຜົນງານດີຕໍ່ຊາດຄື: ຄົນທີ່ບໍ່ແມ່ນເຊື້ອຊາດລາວ ຕ້ອງລົງທຶນຢູ່ປະເທດລາວນຶ່ງລ້ານ ດອນລ່າ ຂຶ້ນໄປ; ສ່ວນຜູ້ທີ່ເປັນເຊື້ອຊາດລາວນັ້ນ (ກໍຣະນີຂອງຊາວອົພຍົບລາວທົ່ວໄປ) ຕ້ອງລົງທຶນຢ່າງຕ່ຳຫ້າແສນດອນລ່າ". ໃນທ່າມກາງຊາວລາວອົພຍົບໃນທຸກປະເທດຂອງໂລກ ຍັງຈະມີຈັກຄົນນໍຊິພໍມີເງິນຫລາຍຂນາດນີ້ເພື່ອໄປ "ຊໍຊື້" ເອົາສັນຊາດເດີມຂອງຕົນເອງຄືນມາໄດ້?



## Commerce facilité avec les Etats-Unis

Le président américain Barack Obama a signé deux mémorandums selon lesquels le Cambodge et le Laos avaient « cessé d'être des pays marxistes-léninistes », autorisant ainsi les entreprises américaines à s'adresser à la Banque d'import-export pour vendre leurs produits dans ces deux pays, relève l'agence internationale Reuters dans une dépêche datée de vendredi 12 juin.

La Banque d'import-export des États-Unis (Eximbank) fournit des garanties aux entreprises américaines, comme des assurances de crédits à l'exportation et des prêts garantis.

En 2008, les États-Unis avaient exporté pour 154 millions de dollars de biens au Cambodge et pour 18 millions de dollars au Laos.

Le Cambodge était alors encore enregistré sur la liste des « États marxistes-léninistes » sous le nom de « République populaire du Cambodge ». Sept États font encore partie de cette liste, empêchant l'Eximbank d'intervenir en faveur des entreprises américaines souhaitant y exporter leurs produits : la Corée du Nord, l'Afghanistan, la Chine, Cuba, la Serbie, le Viêtnam et le Tibet.

## ການຄ້າຂາຍ ກັບ ປະເທດອາເມລິກາສະດວກກວ່າເກົ່າ

ແຫລ່ງຂ່າວສາກົນ Reuters ຂອງວັນທີ 12 juin ໄດ້ແຈ້ງໃຫ້ຊາບວ່າ ປະທານາທິບໍດີ ໂອບາມາ ໄດ້ເຊັນບົດບັນທຶກສອງຂໍ້ຊຶ່ງໃນນັ້ນປະເທດ ກຳພູຊາ ແລະປະເທດລາວໄດ້ຖືກຖືວ່າ ”ຍຸຕິການເປັນປະເທດມາກຊິສ-ເລນິນນິສ”, ຊຶ່ງອະນຸຍາດໃຫ້ບັນດາບໍຣິສັດອະເມຣິກັນຈະໄດ້ບອກກັບທະນາຄານສິນຄ້ານຳເຂົ້າ-ອອກໃຫ້ຂາຍຜະລິດຕະພັນຂອງຕົນໃຫ້ແກ່ທັງສອງປະເທດນີ້ໄດ້.

ທະນາຄານນຳສິນຄ້າເຂົ້າ-ອອກຂອງສະຫາຣັດອະເມຣິກາຊື່ວ່າ Eximbank ໃຫ້ການຄ້ຳປະກັນແກ່ບໍຣິສັດຕ່າງໆຂອງອະເມຣິກາເຊ່ນປະກັນພັຍເງິນຜ່ອນເພື່ອສົ່ງສິນຄ້າອອກ ແລະປະກັນເງິນຢືມ.

ໃນປີ 2008, ສະຫາຣັດອະເມຣິກາໄດ້ສົ່ງສິນຄ້າອອກທີ່ມີມູນຄ່າເຖິງ 154 ລ້ານ ດອນລ່າ ໄປຍັງປະເທດ ກຳພູຊາ ແລະ 18 ລ້ານ ດອນລ່າ ໄປຍັງປະເທດລາວ.

ເມື່ອກ່ອນ, ປະເທດ ກຳພູຊາ ໄດ້ຖືກຈັດໄວ້ໃນລາຍຊື່ຂອງບັນດາ «ປະເທດ ມາກຊິສ - ເລນິນນິສ ໃນຊື່ວ່າ ສາທາຣະນະຣັດ ປະຊາຊົນຂເມນ. ປັດຈຸບັນນີ້ຍັງມີ 7 ປະເທດທີ່ມີລາຍຊື່ຢູ່ໃນບັນຊີດັ່ງກ່າວ ຊຶ່ງຫ້າມບໍ່ໃຫ້ທະນາຄານ Eximbank ໃຫ້ຄວາມຮ່ວມມືກັບບໍຣິສັດຕ່າງໆຂອງອະເມຣິກາທີ່ຢາກສົ່ງສິນຄ້າອອກຂາຍໃຫ້ເຂົານັ້ນໄດ້ເຊ່ນ : ປະເທດເກົາຫລີເໜືອ, ອັຟການິສຖານ, ຈີນ, ກຸຍບາ, ແຊັກບີ, ຫວຽດນາມ ແລະຕີເບ.

## Vol direct entre le Japon et le Laos

Selon l'agence *Thai News* du lundi 16 février 2009 dernier, une ligne directe entre le Japon et le Laos a été ouverte au début de cette année. Le premier avion volant sur cette ligne a quitté l'aéroport Narika, dans la banlieue de Tokyo pour atterrir à l'aéroport international de Vientiane le jeudi 12 février dernier avec, à son bord, 215 députés japonais venus au Laos pour une visite de cinq jours. Lors de cette visite, le gouvernement de la République Démocratique Populaire Lao leur a réservé un accueil très chaleureux. Ces députés ont rendu visite au Premier Ministre laotien, M. Bouasone Bouphavanh, avant d'entamer une visite à la capitale et à Luang Phrabang, ville du Patrimoine Mondial de l'Unesco.

Le gouvernement de la RDP Lao espère que le vol direct régulier entre le Japon et le Laos permettra aux nombreux touristes japonais de découvrir le pays et aidera ainsi le secteur du tourisme, principale ressource du pays, à se développer davantage.

## ຖ້ຽວບິນປະຖົມມະເລີດ ຈາກ ຍີ່ປຸ່ນ

ສຳນັກຂ່າວໄທ ໃຫ້ຖແລງການໃນມື້ວັນທີ 16 ກຸມພາ 2009 ທີ່ຜ່ານມານີ້ວ່າ ທ້ຽວບິນຕຣົງລະຫວ່າງປະເທດຍີ່ປຸ່ນ ກັບປະເທດລາວໄດ້ເປີດບໍຣິການແລ້ວ.

ຖ້ຽວບິນປະຖົມມະເລີດເສັ້ນທາງບິນຕຣົງຈາກສນາມບິນ ນາຣິຕາ ຊານກຸງ ໂຕກຽວຂອງຍີ່ປຸ່ນ ໄດ້ເດີນທາງທາງມາເຖິງນະຄອນວຽງຈັນແລ້ວໃນມື້ວັນພະຫັດ, ວັນທີ 12 ກຸມພາ 09 ທີ່ຜ່ານມາພ້ອມດ້ວຍຄະນະຜູ້ແທນຊາວ ຍີ່ປຸ່ນ 215 ທ່ານ ຊຶ່ງຈະມາພັກຢ້ຽມຢາມປະເທດລາວເປັນເວລາຫ້າວັນ. ເນື່ອງໃນໂອກາດນີ້, ຄະນະລັດຖະບານລາວໄດ້ຈັດພິທີຕ້ອນຮັບຄະນະຜູ້ແທນ ຍີ່ປຸ່ນ ຢ່າງອົບອຸ່ນ. ກ່ອນຈະເດີນທາງໄປຢ້ຽມຢາມເມືອງອື່ນໆ, ຄະນະຜູ້ແທນດັ່ງກ່າວຍັງໄດ້ເຂົ້າຢ້ຽມຢາມ... 

ແລະທັກທາຍທ່ານ ບົວສອນ ບຸຜາວັນ, ນາຍົກຣັຖມົນຕຣີແຫ່ງ ສສປລ ກ່ອນຈະໄປຢ້ຽມຢາມຊົມນະຄອນວຽງຈັນ ແລະເມືອງຫລວງພະບາງ ຊຶ່ງເປັນເມືອງມໍຣະດົກໂລກ.

ຣັຖບານລາວຄາດຫວັງວ່າການເປີດສາຍການບິນລະຫວ່າງຍີ່ປຸ່ນ ກັບລາວ ຈະມີນັກທ່ອງທ່ຽວຊາວຍີ່ປຸ່ນມາຢ້ຽມຢາມປະເທດລາວຢ່າງຫລວງຫລາຍ ຊຶ່ງຈະຊ່ອຍໃຫ້ອຸດສາຫະກັມທ່ອງທ່ຽວຊຶ່ງເປັນຣາຍໄດ້ຫລັກສຳລັບປະເທດຈະໄດ້ຂຍາຍຕົວເພີ້ມຂຶ້ນອີກ.











**Laos 2009**
Photos Vanh Kheuanesombath
En visite en avril 2009

Plan de la nouvelle zone de développement
à Savannkhet / Seno – avec réhabilitation
de l'aéroport (attribué à la Thaïlande)

